# ຈຸດປະກາຍ

ISSN 1813-3614

ພິມອອກເທື່ອທີ 8

## ພິມອອກເທື່ອທີ 8



# ທັດສະນະ
## ຕໍ່ການພັດທະນາ ໃນ ສ.ປ.ປ. ລາວ

ການທ່ອງທ່ຽວແບບອະນຸລັກ ແລະ ຢາງພາລາ, ເດັກນ້ອຍທີ່ເຮັດວຽກຢູ່ໃນປະເທດໄທ, ແລະ ຄວາມສະເໝີພາບໃນການພັດທະນາ

ຮູບໜ້າປົກ: ການທ່ອງທ່ຽວຢ່າງປ່າແບບອະນຸລັກ ໃນແຂວງ ຫຼວງນ້ຳທາ ( Paul Eshoo )

ອົງການສະຫະປະຊາຊາດໃນ ສປປ ລາວ ໄດ້ໃຫ້ການສະໜັບສະໜູນ ການຜະລິດວາລະສານຈຸດປະກາຍ ມຸມມອງໃນການພັດທະນາລາວ ໂດຍມີເປົ້າໝາຍເພື່ອສົ່ງເສີມການສົນທະນາ ບັນຫາທັງໝົດທີ່ພົວພັນເຖິງການພັດທະນາພາຍໃນປະເທດ. ກອງບັນນາທິການເປັນຜູ້ກວດກາບົດຄືນເບິ່ງບົດຄວາມທີ່ສະເໜີໃນສະບັບນີ້. ຄຳຄິດເຫັນທີ່ສະແດງອອກ ໃນການພິມຄັ້ງນີ້ລ້ວນແລ້ວ ແຕ່ເປັນຂອງນັກຂຽນເອງ ແລະ ບໍ່ຈຳເປັນຈະຖືວ່າເປັນຕົວແທນຂອງອົງການສະຫະປະຊາຊາດໃນ ສປປ ລາວ.

# ຈຸດປະກາຍ

## ພິມຄັ້ງທີ 8


ຄຳນຳ 3

ຈົດໝາຍ 4

ການທ່ອງທ່ຽວແບບອະນຸລັກ ເປັນທາງເລືອກແທນການປູກຕົ້ນ ຢາງພາລາ ຢູ່ເຂດພູດອຍ ໃນເຂດປ່າສະຫງວນແຫ່ງຊາດນ້ຳທ້າ, ແຂວງ ຫລວງນ້ຳທາ 6
*ໂດຍ: ສະຕິເວັນ ຊິປານີ*

ການຕອບຮັບກັບບັນຫາຄົນລາວອາຍຸຕ່ຳກ່ວາ 18 ປີທີ່ເຮັດວຽກ ຢູ່ໃນປະເທດໄທ 21
*ໂດຍ: Roy Huijsmans*

ຜູ້ຍິງ ແລະ ຜູ້ຊາຍໄດ້ຮັບຜົນປະໂຫຍດເທົ່າທຽມກັນບໍ່? ຄວາມສະເໝີພາບທາງດ້ານສັງຄົມ ແລະ ບົດບາດຍິງ-ຊາຍ ໃນໂຄງການ ພັດທະນາຊົນນະບົດໃນລາວທີ່ໄດ້ຮັບການຊ່ວຍເຫລືອຈາກສາກົນ 39
*ໂດຍ: Sisavanh Phanouvong and Masaaki Yamada*


## ການແລກປ່ຽນຂໍ້ມູນເພື່ອສົ່ງເສີມການພັດທະນາ

ໃນເດືອນມີນາປີ 2003, ທີມງານອົງການສະຫະປະຊາຊາດປະຈຳຢູ່ ສປປ ລາວໄດ້ພົບປະເພື່ອປຶກສາຫາລື ເຖິງວິທີການເພື່ອສົ່ງເສີມການໂອ້ລົມສົນທະນາ ແລະ ແລກປ່ຽນຂໍ້ມູນຂ່າວສານ ເຊິ່ງກັນ ແລະ ກັນ ໃນການເຮັດວຽກ ເພື່ອການພັດທະນາຂອງປະເທດ. ທີມງານດັ່ງກ່າວຈຶ່ງໄດ້ຕົກລົງສ້າງໜັງສືວາລະສານເພື່ອເປັນເວທີຂອງການໂອ້ລົມສົນທະນາ ແລະ ປຶກສາຫາລືໃນດ້ານວຽກງານເລີ່ມເຮັດບົດບັນທຶກ ທີ່ຈະສະໜອງກອງປະຊຸມ ໂຕ້ວາທີວ່າດ້ວຍວຽກງານການພັດທະນາ, ແລະຫຼັງຈາກນັ້ນໄດ້ສ້າງຄະນະກຳມະການຮຽບຮຽງ ເພື່ອຊີ້ນຳນຳພາ. ຄະນະກຳມະການຮຽບຮຽງວາລະສານ ຈຸດປະກາຍ ເຊື່ອໝັ້ນ ຢ່າງຍິ່ງວ່າ ຈຸດປະສົງຂອງການຫຼຸດຜ່ອນຄວາມທຸກຍາກ ແລະ ການສົ່ງເສີມການພັດທະນາໃນສ.ປ.ປ.ລາວ ຈະດຳເນີນໄປໄດ້ດີກວ່າເກົ່າ ຖ້າຫາກມີການແລກປ່ຽນຂໍ້ມູນຂ່າວສານ ແລະ ແນວຄວາມຄິດທີ່ສ້າງສັນ. ບົດເລື່ອງທີ່ສະເໜີໃນວາລະສານດັ່ງກ່າວນີ້ ຈະເປັນສິ່ງທ້າທາຍແນວຄວາມຄິດຂອງພວກເຮົາໃນປັດຈຸບັນ ແລະ / ຫຼື ມີຂໍ້ມູນຂ່າວສານ ຍັງບໍ່ທັນໄດ້ຮັບການພິມເຜີຍແຜ່ມາກ່ອນ. ພວກເຮົາຫວັງຢ່າງຍິ່ງວ່າວາລະສານ ຈຸດປະກາຍຈະເປັນສິ່ງກະຕຸ້ນຊຸກຍູ້ ໂອ້ລົມສົນທະນາກ່ຽວກັບວຽກງານ ການພັດທະນາໄດ້ຢ່າງຫ້າວຫັນ ແລະ ປະກອບສ່ວນເຮັດໃຫ້ເກີດມີຄວາມເຂົ້າໃຈ ທີ່ດີຂຶ້ນກ່ຽວກັບສິ່ງທ້າທາຍ ໃນການພັດທະນາຢູ່ໃນ ສປປ ລາວ.

# ຄຳນຳ

ນີ້ແມ່ນວາລະສານຈຸດປະກາຍສະບັບທຳອິດທີ່ຕີພິມອອກໃນປີ 2007, ແລະ ເປັນຄັ້ງທຳອິດທີ່ຂ້າພະເຈົ້າໄດ້ຂຽນບົດຄຳນຳໃຫ້ວາລະສານນີ້. ໃນໄລຍະເວລາສາມປີເຄິ່ງ ນັບຕັ້ງແຕ່ໂຄງການທີ່ຈະຕີພິມວາລະສານຈຸດປະກາຍ ໄດ້ເລີ່ມຕົ້ນ, ວາລະສານກໍ່ໄດ້ດຶງດູດເອົາຜູ້ອ່ານຫລາຍຂຶ້ນ ແລະ ກໍ່ໄດ້ມີການຕິດຕໍ່ພົວພັນກັບນັກຄົ້ນຄ້ວາຫລາຍໆທ່ານ ແລະ ຫລາຍໆຂະແໜງຂອງການພັດທະນາ ແລະ ຂ້າພະເຈົ້າ ກໍ່ເຊື່ອໝັ້ນວ່າຄວາມກ້າວໜ້າ ນີ້ຈະຖືກຮັກສາໄວ້ໃນອະນາຄົດ. ການນຳສະເໜີ ແລະ ການສົນ ທະນາການວິໄຈວິທີ ແລະ ແນວຄວາມຄິດໃໝ່ໆ ໃນການທີ່ຈະປັບປຸງ ແລະ ຫລຸດຜ່ອນຄວາມ ທຸກຍາກ ຈະສາມາດສ້າງຄວາມເຂັ້ມແຂງ ແລະ ເລັ່ງຂະຫຍາຍ ຄວາມກ້າວໜ້າໃນການພັດທະນາໃນສປປ ລາວ.

ຜູ້ທີ່ນຳສະເໜີບົດຂຽນໃນວາສະສານສະບັບນີ້ລວມມີ Steven Schipani ເຊິ່ງເຮັດວຽກຢູ່ອົງການການທ່ອງທ່ຽວແຫ່ງຊາດ, Roy Huijsmans, ນັກຄົ້ນຄ້ວາຈາກປະເທດເນເທີແລນສ໌, ແລະ ນັກຄົ້ນຄ້ວາອີກສອງຄົນ ທີ່ປະຈຳຢູ່ປະເທດຍີ່ປຸ່ນ, ສີສະຫວັນ ພານຸວົງ ແລະ Masaaki Yamada. ທ່ານ Schipani, ຜູ້ ເຊິ່ງໄດ້ ປະ ກອບສ່ວນຕໍ່ຄວາມກ້າວໜ້າ ຂອງການທ່ອງທ່ຽວແບບອະນຸລັກ ໃນພາກເໜືອຂອງລາວເປັນເວລາ ຫລາຍປີແລ້ວ, ໄດ້ມີຄວາມເປັນຫ່ວງ ແລະ ກັງວົນຕໍ່ກັບການປູກຕົ້ນ ຢາງພາລາ ໃນແຂວງຫລວງນ້ຳທາ. ເຖິງ ຢ່າງໃດກໍ່ຕາມ, ລາວເຂົ້າໃຈວ່າຕົ້ນຢາງພາລາ ແລະ ພືດເສດຖະກິດອື່ນໆສາມາດນຳລາຍ ໄດ້ທີ່ສຳຄັນມາ ສູ່ຊາວກະສິກອນໃນເຂດພູດອຍ, ແລະ ບົດຂຽນຂອງລາວກໍ່ໄດ້ເປັນການເປີດສາກທີ່ສຳຄັນໃຫ້ມີການ ໂຕ້ວາທີໃນຫົວຂໍ້ທີ່ວ່າຈະສາມາດສ້າງຄວາມສົມດຸນໃຫ້ແກ່ທັນ ທາງທີ່ແຕກຕ່າງກັນ ໃນການເພີ່ມລາຍຮັບໃນ ເຂດຊົນນະບົດ ໄດ້ແນວໃດ.

ບົດຂຽນຂອງ ທ່ານ Huijsmans ໄດ້ຄົ້ນຄ້ວາເຖິງບັນຫາແຮງງານອົບພະຍົບ ເຊິ່ງເປັນບັນຫາທີ່ສະ ຫລັບສັບຊ້ອນ ແລະ ມັນກໍ່ແຮງສະຫລັບສັບຊ້ອນກ່ວາເກົ່າເມື່ອມີຄົນທີ່ມີອາຍຸຕໍ່າກ່ວາ 18 ປີເຂົ້າມາຮ່ວມ. ໃນການເບິ່ງບັນຫາ, ເຊິ່ງຜູ້ຂຽນໄດ້ຍົກໃຫ້ເຫັນເຖິງບັນຫາຂອງກົດລະບຽບ ແລະ ມາດຖານທີ່ຕາຍຕົວ ແລະ ມີແຕ່ດ້ານດຽວ, ໄດ້ເປັນບົດຮຽນທີ່ສອນເຖິງວິທີຄິດ ໄຕ່ຕອງວ່າຕົວເລກສະຖິຕິ ບໍ່ໄດ້ບອກເຖິງເລື່ອງລາວທັງໝົດສະເໜີໄປ, ໂດຍສະເພາະໃນເວລາທີ່ມີການກ່ຽວພັນກັບສາຍສຳພັນທີ່ສັບຊ້ອນຂອງມະນຸດ. ທ່ານ ນາງ ພານຸວົງ ແລະ ທ່ານ ນາງ Yamada ໄດ້ນຳສະເໜີ ການຕີລາຄາ ຂອງໂຄງການພັດທະນາຊົນນະບົດ ທີ່ຖືກດຳເນີນຢູ່ໃກ້ກັບວຽງຈັນ, ແລະ ສະແດງໃຫ້ເຫັນຂ້ອນຂ້າງແຈ້ງວ່າ ໂຄງການຕ່າງໆດັ່ງກ່າວ ບໍ່ໄດ້ກົງກັບຄວາມຄາດຫວັງຂອງທຸກຄົນສະເໜີໄປ. ການວາງແຜນທີ່ລະມັດລະວັງອາດຊ່ວຍແຈກຢາຍຜົນປະໂຫຍດ ຂອງ ໂຄງ ການໄດ້ຢ່າງເທົ່າທຽມກັນຫລາຍຂຶ້ນ.

ບົດຂຽນທີ່ມີຄຸນຄ່າທັງໝົດລວມກັນນີ້ ໄດ້ສະແດງໃຫ້ພວກເຮົາເຫັນວ່າ 'ນັກຊ່ຽວຊານໃນການພັດ ທະນາ' ຕ້ອງມີແນວຄວາມຄິດທີ່ເປີດກ້ວາງຕໍ່ກັບການວາງແຜນ, ການລົງມືປະຕິບັດ ແລະ ການຕິດຕາມ. ມັນມີຫລາຍກ່ວາໜຶ່ງມຸມມອງຕໍ່ກັບແຕ່ລະບັນຫາ ຫລື ສະຖານະການໃດໜຶ່ງ ຢູ່ສະເໜີ, ແລະ ການສົນທະນາ ແລະ ໂຕ້ວາທີ ບັນຫາເຫລົ່ານີ້ເປັນການເປີດໂອກາດໃຫ້ທຸກຄົນທີ່ສ່ວນກ່ຽວຂ້ອງໄດ້ສະແດງຄວາມຄິດເຫັນຂອງຕົນ.



ໂຊເນີມ ຢັ່ງເຊັນ ຣານາ

ຜູ້ປະສານງານອົງການສະຫະປະຊາຊາດປະຈຳ ລາວ

# ຈົດໝາຍ

## ເພື່ອນຮ່ວມງານທຸກຄົນ

ການເຮັດບົດວິໄຈ ແມ່ນຂັ້ນຕອນການຊອກຫາຄວາມຮູ້ໃຫມ່, ຕອບສະຫນອງ ຫລື ແມ້ແຕ່ເພີ່ມ ຄວາມສົງໃສ ຫລື ຄວາມຢາກຮູ້ຢາກເຫັນ. ເຖິງຢ່າງໃດກໍ່ຕາມ, ຖ້າບໍ່ມີເວທີ ສຳລັບແບ່ງປັນ ແລະ ຕອບຮັບເອົາຄຳຄິດ ເຫັນຂອງປັນຍາຊົນ ກໍ່ຈະບໍ່ສາມາດບັນລຸເປົ້າຫມາຍໂດຍລວມ ຂອງຂັ້ນຕອນ ການເຮັດບົດວິໄຈໄດ້. ຂໍຂອບໃຈການຕີພິມຂອງຫລາຍໆເອກະສານເຊັ່ນ ວາລະສານຈຸດປະກາຍ ແລະ ບົດລາຍງານການ ພັດທະນາຊັບພະຍາກອນມະນຸດແຫ່ງ ສປປ ລາວ (National Human Development Reports - NHDR), ຊຸມຊົນຜູ້ເຮັດບົດວິໄຈໃນ ສປປ ລາວ ໃນປະຈຸບັນ ໄດ້ມີເວທີສຳລັບສົນທະນາ ແລະ ແບ່ງປັນຜົນທີ່ໄດ້ຮັບ ຈາກການຄົ້ນຄ້ວາຂອງປັນ ຍາຊົນ ແລະ ແບ່ງປັນຄວາມຄິດໃຫມ່ໆ.

ການສົນທະນາກ່ຽວກັບ 'ການພັດທະນາ', ເຊິ່ງເປັນຄຳສັບທີ່ຖືກນຳໃຊ້ຫລາຍເກີນໄປ, ຍັງບໍ່ທັນ ສາມາດ ຊອກຫາຄຳຕອບໃຫ້ແກ່ຄຳຖາມທີ່ສຳຄັນໄດ້ເທື່ອ: ຜົນທີ່ໄດ້ຮັບໂດຍລວມຈາກການພັດ ທະນາ ເປັນປະໂຫຍດສຳລັບປະຊາຊົນສ່ວນໃຫຍ່ຫລືບໍ່? ຈະກຳນົດໄດ້ແນວໃດວ່າ ການພັດທະນາໃດ ເປັນ ການພັດທະນາທີ່ເປັນປະໂຫຍດ? ການຕີພິມຂອງບົດຄົ້ນຄ້ວາຕ່າງໆເຊັ່ນ NHDR ພະຍາຍາມ ທີ່ຈະຕອບຄຳຖາມເຫລົ່ານັ້ນໂດຍການວາງເອົາປະຊາຊົນ - ໂດຍສະເພາະແມ່ນຜູ້ທີ່ທຸກຍາກທີ່ສຸດໃນສັງ ຄົມ - ໃຫ້ເປັນຈຸດສູນກາງຂອງການພັດທະນາ. ບົດລາຍງານການພັດທະນາຊັບພະຍາກອນມະນຸດ ແຫ່ງຊາດປີ 2006 ພາຍໃຕ້ຫົວຂໍ້ທີ່ວ່າ 'ການຄ້າສາກົນ ແລະ ການພັດທະນາຊັບພະຍາ ກອນມະນຸດ' ໄດ້ຖືກຂຽນຂຶ້ນເພື່ອເນັ້ນຫນັກເຖິງ ວິຖີທາງທີ່ດີທີ່ສຸດທີ່ຄວນນຳໃຊ້ ເພື່ອເປັນການສົ່ງເສີມ ແລະ ກະຕຸກຊຸກຍູ້ການພັດທະນາດ້ານການຄ້າ ແລະ ຊັບພະຍາກອນມະນຸດໄປພ້ອມໆກັນ. ມັນ ມີຄວາມຮຽກຮ້ອງທີ່ຮີບດ່ວນໃຫ້ມີການລົງມືປະຕິບັດ ແລະ ການສະຫນອງຂໍ້ມູນກ່ຽວກັບວ່າການ ປະຕິຮູບນະໂຍບາຍຈະສາມາດເພີ່ມຜົນປະໂຫຍດຂອງການຄ້າສາກົນໃຫ້ປະຊາຊົນລາວໄດ້ ແນວໃດ ໃນຂະນະດຽວກັນກໍ່ຫລຸດຜ່ອນ ຜົນກະທົບດ້ານລົບທີ່ຕາມມາໃນອະນາຄົດ. ຫົວຂໍ້ທີ່ສຳ ຄັນທີ່ສຸດໃນ ຄວາມພະຍາຍາມນີ້ ກ່ຽວພັນກັບການຄ້າຂ້າມຊາຍແດນ, ການອົບພະຍົບຍົກຍ້າຍ ຖິ່ນຖານ ແລະ ການສົ່ງຈ່າຍເງິນ, ການມີວຽກເຮັດງານທຳ, ຕາຫນ່າງໄຟຟ້າໃນເຂດຊົນນະບົດ ແລະ ການໄດ້ຮັບຂໍ້ມູນ ທີ່ຊັດເຈນ ແລະ ດີຂຶ້ນ.

ຄຳຄິດເຫັນ ແລະ ປະສົບການຂອງຜູ້ຄົນ, ແລະ ຄວາມທ້າທາຍທີ່ພວກເຂົາປະເຊີນ, ໄດ້ຖືກຮັບຮູ້ ຜ່ານການທຸ່ມເຮື່ອເທແຮງ ແລະ ການເຮັດວຽກຂອງນັກຄົ້ນຄ້ວາໄວຫນຸ່ມຫລາຍໆຄົນ - ໃນນັ້ນມີຫລາຍ ຄົນທີ່ເປັນຜູ້ຍິງ - ໃນຊ່ວງຂັ້ນຕອນການຮວບຮວມ NHDR ຄັ້ງທີສາມນີ້. ບົດລາຍ ງານນີ້ປະກອບດ້ວຍ ການວິໄຈແບບລົງເລິກຂອງຜົນທີ່ໄດ້ຮັບເຫລົ່ານີ້ ໂດຍຜ່ານຫລາຍໆເອກະ ສານທີ່ກ່ຽວຂ້ອງເຊັ່ນ ບົດຂຽນຂອງ ປ່າຟົ້ວລີ ລີຈື່ຝູງ ທີ່ມີຫົວຂໍ້ວ່າ "ການສົ່ງອອກອອກໄຟຟ້າ: ການປະກອບສ່ວນດ້ານບວກ ແລະ ດ້ານລົບຕໍ່ສປປ ລາວ". ການສົນທະນາທີ່ເຈາະຈົງໃສ່ຜົນທີ່ ຕາມມາຂອງການສຶກສາດັ່ງກ່າວ

ໄດ້ຖືກຕີພິມ ໃນວາລະສານ ຈຸດປະກາຍສະບັບທີ 7 ພາຍໃຕ້ ບົດຂຽນທີ່ມີຊື່ວ່າ "ການສ້າງເຂື່ອນໃນ ສປປ ລາວ: ສຽງທີ່ສະທ້ອນຄວາມຄິດເຫັນຂອງແມ່ຍິງ".

ຂັ້ນຕອນການຂຽນ NHDR ຄັ້ງທີ 4 ກຳລັງຈະເລີ່ມຕົ້ນຂຶ້ນໃນໄວໆນີ້. ຫົວຂໍ້ໃຫຍ່ຂອງບົດລາຍງານສະບັບຕໍ່ໄປແມ່ນ 'ແຮງງານ' ແລະ ໂອກາດ, ຄວາມທ້າທາຍ ແລະ ການປະກອບສ່ວນຂອງແຮງງານລາວສູ່ການພັດທະນາຊັບພະຍາກອນມະນຸດ, ໂດຍສະເພາະແມ່ນໃນເຂດຊົນນະບົດ. ທີມງານຂອງ NHDR ພວມຄອງຄອຍທີ່ຈະໄດ້ຮ່ວມງານກັບນັກຄົ້ນຄ້ວາໄວໜຸ່ມທີ່ມີຄວາມກະຕືລືລົ້ນອີກຄັ້ງໜຶ່ງ. ທີມງານໃຫ້ຄວາມສຳຄັນວາລະສານຈຸດປະກາຍ ແລະ ຖືໃຫ້ເປັນຈຸດແລກປ່ຽນຂອງຂັ້ນຕອນການເຮັດບົດວິໄຈໃນລາວ. ຂັ້ນຕອນນີ້ດຳເນີນໄປ ແມ້ແຕ່ພາຍຫລັງທີ່ບົດວິໄຈໄດ້ສຳເລັດເສັດສິ້ນແລ້ວ, ໂດຍການສ້າງຄວາມອາດສາມາດ, ເພີ່ມຄວາມຮູ້, ກະຕຸ້ນໃຫ້ມີການແລກປ່ຽນສົນທະນາ, ແລະ ສຸດທ້າຍກໍ່ປະດັບສັງຄົມດ້ວຍມຸມມອງ ແລະ ແນວຄິດ ໃໝ່ໆ.

ທີມງານ NHDR
ສູນສະຖິຕິແຫ່ງຊາດ/ຄະນະກຳມະການແຜນການ ແລະ ການລົງທຶນ
ວຽງຈັນ, ສປປ ລາວ
ndhr@etllao.com
ໂທລະສັບ: 01243670
ແຟັກ: 01243669



# ການທ່ອງທ່ຽວແບບອະນຸລັກ ເປັນທາງເລືອກແທນການປູກຕົ້ນຢາງພາລາ ຢູ່ເຂດ ພູດອຍ ໃນເຂດປ່າສະຫງວນແຫ່ງຊາດນໍ້າຫ້າ, ແຂວງ ຫລວງນໍ້າທາ

ໂດຍ: ສະຕີເວັນ ຊີປານີ

*ຈຳນວນນັກທ່ອງທ່ຽວ ທີ່ມາຢ້ຽມຢາມ ສປປ ລາວ ກຳລັງຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ, ໃນປີ 2005 ມີນັກທ່ອງທ່ຽວເຂົ້າປະເທດຫລາຍກ່ວາໜຶ່ງລ້ານຄົນ. ນັກທ່ອງທ່ຽວດັ່ງກ່າວ ສ່ວນຫລາຍມີຄວາມສົນໃຈໃນການທ່ອງທ່ຽວທາງທຳມະຊາດ ແລະ ວັດທະນະທຳເປັນຫລັກ. ໃນປະຈຸບັນໄດ້ມີຄວາມກັງວົນວ່າ ປ່າໄມ້ທີ່ເປັນແຫລ່ງທ່ອງທ່ຽວແບບອະນຸລັກທີ່ປະຊາຊົນມີສ່ວນຮ່ວມນັ້ນອາດຈະຖືກເປັນເປົ້າໝາຍ ໃຫ້ຫັນປ່ຽນເປັນເຂດປູກຕົ້ນຢາງພາລາ. ນັບຕັ້ງແຕ່ປີ 2002 ເປັນຕົ້ນມາ, ການທ່ອງທ່ຽວແບບອະນຸລັກ ແລະ ການປູກຕົ້ນຢາງພາລາ ໄດ້ກາຍເປັນກິດຈະກຳທີ່ສຳຄັນ ທາງດ້ານເສດຖະກິດ ໃນແຂວງຫລວງນໍ້າທາ. ເອກະສານສະບັບນີ້ ລາຍງານເຖິງຜົນປະໂຫຍດ ດ້ານການເງິນ ທີ່ການທ່ອງທ່ຽວແບບອະນຸລັກກຳລັງດຳເນີນ ໃນອ້ອມແອ້ມເຂດປ່າສະຫງວນ ແຫ່ງຊາດນໍ້າຫ້າ ໂດຍຈະຍົກໃຫ້ເຫັນວ່າ ການທ່ອງທ່ຽວໄດ້ສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນ ໃນທ້ອງຖິ່ນ ແລະ ໃນຂະນະດຽວກັນ ກໍ່ໄດ້ປະກອບສ່ວນໃນການປົກປັກຮັກສາ ສິ່ງແວດລ້ອມ ທາງດ້ານທຳມະຊາດ ແລະ ວັດທະນະທຳຂອງລາວ. ໂດຍລວມແລ້ວການປູກຕົ້ນຢາງພາລາ ໃນຂອບເຂດປ່າສະຫງວນ ອາດຕອບສະໜອງຜົນປະໂຫຍດທີ່ໜ້ອຍກ່ວາ ແລະ ມີຜົນກະທົບ ທາງລົບຕໍ່ຊີວະນາໆພັນຂອງຊາດ. ບົດຂຽນນີ້ໄດ້ສະຫລຸບວ່າທັງກິດຈະກຳການທ່ອງທ່ຽວ ແບບອະນຸລັກ ແລະ ການປູກຕົ້ນຢາງພາລາ ແມ່ນສາມາດເຮັດໄດ້ໃນແຂວງຫລວງນໍ້າທາ, ແຕ່ບໍ່ ສາມາດເຮັດໄດ້ໃນຂອບເຂດ ຫລື ບໍລິເວນອັນດຽວກັນ.*

ໃນປີ 2005, ອົງການທ່ອງທ່ຽວແຫ່ງຊາດໄດ້ປະເມີນວ່າ ອຸດສາຫະກຳການທ່ອງທ່ຽວ ສ້າງ ລາຍຮັບໄດ້ຫລາຍກ່ວາ 146 ລ້ານໂດລາອາເມລິກາ, ເຊິ່ງເປັນອຸດສາຫະກຳທີ່ສ້າງລາຍຮັບ ເປັນເງິນຕາຕ່າງປະເທດອັນດັບໜຶ່ງຂອງປະເທດ. ພາຍຫລັງການເຕີບໂຕຢ່າງວ່ອງໄວ ແລະ ເປັນທີ່ໜ້າພູມໃຈ, ໃນປີດຽວກັນ ສປປ ລາວ ໄດ້ຕ້ອນຮັບນັກທ່ອງທ່ຽວຫລາຍກ່ວາໜຶ່ງລ້ານຄົນ, ຊຶ່ງເປັນເທື່ອທຳອິດໃນທົດສະວັດ ນັບຕັ້ງແຕ່ລັດຖະບານໄດ້ເປີດປະເທດ ຕ້ອນຮັບນັກທ່ອງທ່ຽວສາກົນໃນຕົ້ນຊຸມປີ 1990 (ອົງການ ທ່ອງທ່ຽວແຫ່ງຊາດ, 2005a). ທ່ານ ບຸດຕາວົງ ແລະ ຜູ້ຮ່ວມງານທ່ານອື່ນໆ (2002) ໄດ້ຄາດຄະເນວ່າ ການທ່ອງທ່ຽວທາງດ້ານວັດທະນະທຳ ແລະ ທຳມະຊາດ ກວມເອົາເຄິ່ງໜຶ່ງ ຂອງລາຍຮັບທັງໝົດ ທີ່ໄດ້ຈາກອຸດສາຫະກຳການທ່ອງທ່ຽວຂອງ ສປປ ລາວ.

ເມື່ອເຫັນວ່າ ການທ່ອງທ່ຽວເປັນຂະແໜງທີ່ສຳຄັນ ໃນການສ້າງວຽກເຮັດງານທຳໃຫ້ປະຊາຊົນ ແລະດຶງດູດເອົາ ເງິນຕາຈາກຕ່າງປະເທດ ພ້ອມທັງຊຸກຍູ້ກິດຈະກຳທາງເສດຖະກິດ ໃນຫລາຍຂະແໜງການຢ່າງກວ້າງຂວາງ, ລັດຖະບານໄດ້ສະໜັບສະໜູນການພັດທະນາການທ່ອງທ່ຽວ ທີ່ເນັ້ນ

ໃສ່ສິ່ງດຶງດູດທາງທຳມະຊາດ ແລະ ວັດທະນະທຳຂອງຊາດ ໃຫ້ເປັນໜຶ່ງໃນຍຸດທະສາດ ໃນການ ຫລຸດຜ່ອນຄວາມທຸກຍາກ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມ (Allcock, 2004). ໃນລະດັບທີ່ກ້ວາງກ່ວານັ້ນ ກໍ່ຄື ໃນເຂດພູມິພາກ, ການທ່ອງທ່ຽວເປັນໜຶ່ງໃນ 11 ແຜນງານທີ່ສຳຄັນທີ່ສຸດ ໃນຍຸດທະສາດ 10 ປີ ຂອງການພົວພັນຮ່ວມມືທາງດ້ານເສດຖະກິດ ໃນອະນຸພາກພື້ນແມ່ນ້ຳຂອງ (ADB, 2005), ຊຶ່ງນຳໃຊ້ການທ່ອງທ່ຽວ ເປັນເຄື່ອງມືເພື່ອຊ່ວຍ ຫລຸດຜ່ອນຄວາມທຸກຍາກ ແລະ ປະກອບສ່ວນເຂົ້າ ໃນການປົກປັກຮັກສາຊັບພະຍາກອນ ທາງດ້ານ ວັດທະນະທຳ ແລະ ທຳມະຊາດ.

ປະເທດລາວ, ຕັ້ງຢູ່ຈຸດໃຈກາງຂອງອະນຸພາກພື້ນແມ່ນ້ຳຂອງ ຊຶ່ງອຸດົມສົມບູນໄປດ້ວຍຊັບພະຍາກອນ ທາງດ້ານທຳມະຊາດ ແລະ ວັດທະນະທຳ ທີ່ຫລາກຫລາຍ ແລະ ໜ້າປະທັບໃຈ, ພ້ອມນັ້ນ ກໍ່ມີໂອກາດໃນການນຳໃຊ້ຜົນປະໂຫຍດ ທາງດ້ານເສດຖະກິດ - ສັງຄົມ ທີ່ການທ່ອງທ່ຽວ ນຳມາໃຫ້ (Jamison, 2003; Goodwin et al, 1998). ເຖິງວ່າການທ່ອງທ່ຽວຈະເຕີບໂຕ ຢ່າງໄວວາ ໃນທົດສະວັດທີ່ຜ່ານມາ, ແຕ່ມັນຍັງມີຄວາມຈຳເປັນ ທີ່ຈະຕ້ອງໄດ້ປັບປຸງ ພື້ນຖານ ໂຄງລ່າງໃນຕົວເມືອງ ແລະ ໃນເຂດຊົນນະບົດ, ຍົກລະດັບຊັບພະຍາກອນມະນຸດ ແລະ ສ້າງຄວາມ ເຂັ້ມແຂງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ໃນການປະສານງານ ເພື່ອສ້າງແຜນສຳລັບການຄຸ້ມ ຄອງຊັບສົມບັດຕ່າງໆ ທີ່ເປັນພື້ນຖານໃຫ້ແກ່ ອຸດສາຫະກຳການທ່ອງທ່ຽວຂອງລາວ ໃຫ້ດີຂຶ້ນ ແລະ ມີຄວາມຍືນຍົງ.

ໃນເວລາດຽວກັນ, ແຜນພັດທະນາເສດຖະກິດ - ສັງຄົມຂອງລັດຖະບານ ທີ່ກຳລັງດຳເນີນຢູ່ນັ້ນ ໄດ້ ສະທ້ອນໃຫ້ເຫັນ ນະໂຍບາຍທີ່ມີມາແຕ່ດົນນານ ກ່ຽວກັບການຍຸດຕິ ການຖາງປ່າເຮັດໄຮ່ ແລະ ສົ່ງເສີມການປູກພືດປະສົມປະສານກັບການປູກປ່າໃນເຂດດຽວກັນ ໃຫ້ເປັນທາງເລືອກໃໝ່ ໃນການດຳລົງຊີວິດ, ໂດຍສະເພາະໃນເຂດພູດອຍທາງພາກເຫນືອ ເຊິ່ງມີເນື້ອທີ່ຈຳກັດໃນການເຮັດ ນາ (GoL,2003). ໂຄງການໜຶ່ງທີ່ກຳລັງດຳເນີນໄປຢ່າງໄວວາ ແລະ ຢ່າງບໍ່ຢຸດຢັ້ງ ໃນແຂວງ

---

*ການທ່ອງທ່ຽວແບບອະນຸລັກ ແລະ*

*ການເຮັດສວນຢາງພາລາກຳລັງແຂ່ງຂັນກັນຍາດແຍ່ງເອົາດິນປ່າ*

---

ຫລວງນ້ຳທາ, ເຊິ່ງເປັນແຂວງທີ່ມີປະຊາກອນອາໄສຢູ່ ແບບກະແຈກກະຈາຍ, ທາງຕາເວັນຕົກ ສ່ຽງເຫນືອມີຊາຍແດນຕິດ ກັບປະເທດພະມ້າ ແລະ ຈີນ, ແມ່ນການກະຕຸກຊຸກຍູ້ໃຫ້ຊຸມຊົນຕ່າງໆ ປູກຕົ້ນຢາງພາລາ (Hevea brasiliensis). ແນວຄວາມຄິດມີຢູ່ວ່າ ຊາວບ້ານຈະຜະລິດຢາງພາລາ ເພື່ອສົ່ງອອກ, ເຊິ່ງພວກເຂົາອາດຈະເປັນເຈົ້າຂອງພຽງແຕ່ຜູ້ດຽວ ຫລື ອາດຈະມີຫລາຍຫຸ້ນສ່ວນ ທີ່ເປັນເຈົ້າຂອງທີ່ດິນ ແລະ ມີຂໍ້ຕົກລົງໃນການແບ່ງປັນຜົນປະໂຫຍດ ກັບນັກລົງທຶນຄົນລາວ ຫລື ຕ່າງຊາດ, ເຊິ່ງໃນນັ້ນ ມີຫລາຍຄົນທີ່ເປັນຄົນຈີນ. ໃນແຂວງຫລວງນ້ຳທາ ການປູກຕົ້ນຢາງພາລາໄດ້ ຖືກລິເລີ່ມຂຶ້ນໃນໂຄງການ ຂະໜາດນ້ອຍຫລາຍໆໂຄງການໃນປີ 1994 ແລະ ການຂູດເອົາຢາງ

ຄັ້ງທຳອິດໄດ້ເລີ່ມຂຶ້ນໃນປີ 2002, ຊຶ່ງຖືກໄລຍະເວລາດຽວກັນ ທີ່ອົງການ ທ່ອງທ່ຽວແຫ່ງຊາດ ແລະ ອົງການ UNESCO ກຳລັງລິເລີ່ມ ປະຕິບັດໂຄງການ ທ່ອງທ່ຽວແບບ ອະນຸລັກທີ່ປະຊາຊົນມີສ່ວນຮ່ວມ ໃນເຂດປ່າສະຫງວນແຫ່ງ ຊາດນ້ຳທ້າ (UNESCO, 1998).

ນັບຕັ້ງແຕ່ປີ 2002 ເປັນຕົ້ນມາ, ທັງ ການທ່ອງທ່ຽວແບບອະນຸລັກ ແລະ ການເຮັດສວນຢາງ ພາລາ ໄດ້ກາຍເປັນກິດຈະກຳທີ່ສຳຄັນທາງເສດຖະກິດ ໃນແຂວງຫລວງນ້ຳທາ ແລະ ວຽກງານ ການທ່ອງທ່ຽວແບບອະນຸລັກທີ່ປະຊາຊົນມີສ່ວນຮ່ວມ, ເຊິ່ງໄດ້ຖືກພັດທະນາໂດຍ ໂຄງການການ ທ່ອງທ່ຽວແບບອະນຸລັກນ້ຳທ້າ, ໄດ້ຖືກຮັບຮອງເປັນຕົວແບບ ຫລື ຕົວຢ່າງ ໃນລະດັບຊາດ, ພາຍຫລັງທີ່ໂຄງການດັ່ງກ່າວ ໄດ້ຮັບລາງວັນລະດັບສາກົນຫລາຍໆລາງວັນ (Lyttleton & Allcock, 2002). ມັນອາດເປັນໄປໄດ້ວ່າ ການທ່ອງທ່ຽວແບບອະນຸລັກ ແລະ ການເຮັດສວນຢາງພາລາ ໃນປະຈຸບັນ ກຳລັງແຂ່ງຂັນກັນຍາດແຍ່ງເອົາດິນປ່າທີ່ຍັງເຫລືອຢູ່ພາກເຫນືອຂອງລາວ. ເອກະສານສະບັບນີ້ ລາຍງານເຖິງຜົນປະໂຫຍດທາງດ້ານການເງິນ ທີ່ການທ່ອງທ່ຽວແບບອະນຸລັກໄດ້ນຳມາໃຫ້ ບັນດາພາກສ່ວນທີ່ກ່ຽວຂ້ອງຢູ່ທ້ອງຖິ່ນ ໃນອ້ອມແອ້ມເຂດປ່າສະຫງວນແຫ່ງຊາດນ້ຳທ້າ ຕັ້ງແຕ່ປີ 2002 ຫາ ປີ 2006, ໂດຍມີຄວາມພະຍາຍາມ ທີ່ຈະຊີ້ໃຫ້ຜູ້ທີ່ວາງແຜນການຊົມໃຊ້ທີ່ດິນເຫັນ ແລະ ເຂົ້າໃຈ ໃນການເບິ່ງບັນຫາ ຫລື ມີວິໄສທັດໃນການເບິ່ງອະນາຄົດ ກ່ຽວກັບທາງເລືອກໃໝ່ ສຳລັບກິດຈະກຳໃນການລ້ຽງຊີບຂອງຊາວບ້ານ (ການທ່ອງທ່ຽວແບບອະນຸລັກທີ່ປະຊາຊົນມີສ່ວນຮ່ວມ) ທີ່ກຳລັງດຳເນີນຢູ່ ໃນ ແລະ ອ້ອມແອ້ມເຂດປ່າສະຫງວນແຫ່ງຊາດນ້ຳທ້າ, ເຊິ່ງເຂດດັ່ງກ່າວ ອາດຖືກຫມາຍຕາໄວ້ ເພື່ອທີ່ຈະຫັນປ່ຽນເປັນສວນຕົ້ນຢາງພາລາ.

ຫົວຂໍ້ອື່ນໆທີ່ຄວນໄດ້ຮັບຄວາມເອົາໃຈໃສ່ ແຕ່ວ່າບໍ່ໄດ້ຖືກນຳສະເໜີໃນບົດຂຽນສະບັບນີ້ ກໍ່ແມ່ນການ ສູນເສຍຊີວະນາໆພັນ ທີ່ນັບມື້ນັບໄວຂຶ້ນ ຍ້ອນການຫັນປ່ຽນປ່າທຳມະຊາດ ໄປເປັນ ສວນຕົ້ນຢາງພາລາ, ການຫາເຄື່ອງປ່າຂອງດົງນັບມື້ນັບໜ້ອຍລົງ ຢູ່ເຂດດິນທີ່ຖືກຖາງ ແລະ ບຸກເບີກ. ການຫລຸດລົງ ທາງດ້ານຂະຫນາດ ແລະ ຄວາມຫລາກຫລາຍຂອງ ຊີວະນາໆພັນ ໃນບໍລິເວນຍອດນ້ຳຢູ່ເຂດຮ່ອມພູ ເມືອງນ້ຳທາ ແລະ ເມືອງສິງ, ການເຈື່ອນຂອງດິນທີ່ເກີດຈາກການຖາງປ່າ ໄດ້ກວາດ ເອົາດິນຂະຫນາດ ກ້ວາງເທິງເປີ້ນພູທີ່ສູງຊັນລົງມາ ແລະ ການປ່ຽນແປງທາງສັງຄົມທີ່ກຳລັງນຳມາ ໂດຍລະບົບການທຳຜະລິດ ທາງດ້ານກະສິກຳແບບໃໝ່ນີ້. ສຳລັບການວິເຄາະແບບລົງເລິກບັນຫາ ເຫລົ່ານີ້ ແລະ ປະເດັນອື່ນໆທີ່ສຳຄັນ ທີ່ກ່ຽວຂ້ອງກັບການປູກຕົ້ນຢາງພາລາໃນແຂວງ ຫລວງນ້ຳທາ, ຜູ້ອ່ານສາມາດອ່ານໄດ້ຈາກປຶ້ມ ການຄົ້ນຄ້ວາກ່ຽວກັບຢາງພາລາ (Para Rubber Study) ຊຶ່ງລິເລີ່ມ ແລະ ດຳເນີນໂດຍໂຄງການພັດທະນາຊົນນະບົດໃນເຂດພູດອຍຂອງອົງການ GTZ (Alton et al, 2005).

---

*ການຫັນປ່ຽນປ່າທຳມະຊາດໄປເປັນສວນຕົ້ນຢາງພາລາໄດ້ເລັ່ງ*
*ໃຫ້ການສູນເສຍຊີວະນາໆພັນ ນັບມື້ນັບໄວຂຶ້ນ*

---

## ເຂດປ່າສະຫງວນແຫ່ງຊາດນ້ຳທ້າ

ເນື້ອທີ່ປ່າສະຫງວນທັງໝົດມີ 222,400 ເຮັກຕາ, ປ່າສະຫງວນແຫ່ງຊາດນ້ຳທ້າ ນອນຢູ່ໃນເຂດຊາຍແດນ ແຂວງຫລວງນ້ຳທາ ແລະ ຕິດກັບປ່າສະຫງວນຊຽງຢິງ ໃນແຂວງຢູນານ, ປະເທດຈີນ. ອີງຕາມ ການວິເຄາະຮູບພາບຂອງ LANDSAT ໃນປີ 2000. 32% ຂອງປ່າສະຫງວນນ້ຳທ້າ ປະກອບດ້ວຍປ່າໄມ້ປະເພດທີ່ປົ່ງໃບປີລະເທື່ອ (ໃບໄມ້ຫລົ່ນໃນລະດູແລ້ງ ແລະ ປົ່ງໃໝ່ໃນລະດູຝົນ) ປະສົມປະສານ ແລະ ເກາະກ່າຍກັນໄປຢ່າງຕຶບໜາ ແລະ 47% ແມ່ນປ່າໄມ້ຫລາກຫລາຍຊະນິດ ແລະ ຂະໜາດທີ່ປະສົມປະສານກັນຢ່າງກົມກືນ (Hedemark & Vongsak, ປີ 2003). ສັດລ້ຽງລູກດ້ວຍນົມມີ 37 ຊະນິດ ລວມທັງເສືອໂຄ່ງອາຊີ, ເໝືອຍ, ເສືອດາວ, ຊ້າງອາຊີ ແລະ ທະນີແກ້ມດຳ ໄດ້ຮັບການຢືນຢັນວ່າ ພວກມັນອາໄສໃນປ່າສະຫງວນແຫ່ງຊາດນ້ຳທ້າ ແລະ ຍັງມີນົກອີກຫລາຍກ່ວາ 288 ຊະນິດນຳອີກ (Tizzard, ປີ 1997). ໃນປະຈຸບັນ ມີ 19 ບ້ານ ທີ່ອາໄສຢູ່ໃນເຂດຊາຍແດນປ່າສະຫງວນແຫ່ງຊາດນ້ຳທ້າ ແລະ ມີອີກ 85 ບ້ານ ທີ່ຢູ່ທາງນອກບໍລິເວນໃກ້ຄຽງ. ບັນດາບ້ານເຫລົ່ານັ້ນ ໄດ້ອາໃສປ່າໄມ້ ໃນເຂດປ່າສະຫງວນແຫ່ງຊາດນ້ຳທ້າເປັນຫລັກ ຄື: ອາຫານ, ຟືນ ຫລື ເຊື້ອເພີງ, ຢາປົວພະຍາດ ແລະ ທັງມີຄວາມສຳຄັນທາງດ້ານວັດທະນະທຳ (ປ່າສະຫງວນແຫ່ງຊາດນ້ຳທ້າ & WCS, ປີ 2004). ປະຊາຊົນສ່ວນໃຫຍ່ທີ່ອາໄສຢູ່ໃນ ແລະ ອ້ອມຂ້າງປ່າສະຫງວນ ແຫ່ງຊາດນ້ຳທ້າ ແມ່ນ ຊົນເຜົ່າກໍ (ອາຄາ), ຂະມຸ, ແລນແຕນ ແລະ ມົ້ງ. ຍ້ອນຄຸນຄ່າ ແລະ ຄວາມ ສຳຄັນທາງດ້ານບ່ອນຢູ່ອາໄສ ແລະ ຄວາມຫລາກຫລາຍຂອງສັດ ແລະ ພືດນາໆຊະນິດ, ປ່າສະຫງວນແຫ່ງຊາດນ້ຳທ້າ ຈຶ່ງໄດ້ຖືກຮັບຮອງເອົາ ເປັນເຂດມໍລະດົກທາງດ້ານທຳມະຊາດ ຂອງ ASEAN. ຊັບພະຍາກອນທາງດ້ານວັດທະນະທຳ ແລະ ທຳມະຊາດຂອງປ່າສະຫງວນແຫ່ງຊາດ ນ້ຳທ້າ ຍັງເປັນແຫລ່ງທ່ອງທ່ຽວທີ່ສຳຄັນຕົ້ນຕໍ ຂອງແຂວງຫລວງນ້ຳທາ, ເຊິ່ງນັກທ່ອງທ່ຽວຫລາຍ ກ່ວາ 70% ໃຫ້ຄຳເຫັນວ່າ ພວກເຂົາສົນໃຈໄປທ່ອງທ່ຽວ ຫລື ເຂົ້າຊົມໃນເຂດປ່າສະຫງວນດັ່ງກ່າວ (Schipani & Marris, 2002).

## ການທ່ອງທ່ຽວແບບອະນຸລັກ ໃນແຂວງຫລວງນ້ຳທາ

ແຕ່ປີ 1998 ເຖິງປີ 2004 ຈຳນວນນັກທ່ອງທ່ຽວ ທີ່ເດີນທາງໄປຢ້ຽມຢາມແຂວງຫລວງນ້ຳທາ ປະຈຳແຕ່ລະປີເພີ່ມຂຶ້ນຈາກ 18,600 ຄົນ ເປັນ 41,658 ຄົນ ແລະ ໃນຊ່ວງໄລຍະເວລານັ້ນ ແຂວງຫລວງນ້ຳທາ ກໍ່ໄດ້ກວມເອົາ 5 -7% ຂອງຕະຫລາດການທ່ອງທ່ຽວທັງຫມົດໃນລາວ ຢ່າງຕໍ່ເນື່ອງ. ໃນປີ 2005, ແຂວງຫລວງນ້ຳທາໄດ້ຕ້ອນຮັບນັກທ່ອງທ່ຽວຫລາຍກ່ວາ 49,000 ຄົນ (LNTA, ປີ 2005). ນອກຈາກນັ້ນ, ກໍ່ມີການເພີ່ມຂຶ້ນຂອງລາຍຈ່າຍສະເລ່ຍຕໍ່ມື້ຂອງນັກທ່ອງທ່ຽວ ຈາກ 9 ໂດລາຕໍ່ມື້ ໃນປີ 2000 (Schipani & Pakasy, ປີ 2002) ເພີ່ມຂຶ້ນເປັນ 16 ໂດລາຕໍ່ມື້ ໃນປີ 2005 (LNTA, 2005b). ປະຈຸບັນນີ້ ສະຖານທີ່ພັກເຊົາສຳລັບນັກທ່ອງທ່ຽວມີທັງໝົດ 50 ແຫ່ງ, ລວມມີຫ້ອງນອນທັງຫມົດ 536 ຫ້ອງ ແລະ ຮ້ານອາຫານ 18 ຮ້ານ ນອນຢູ່ໃນ 5 ຕົວເມືອງ, ສ່ວນຫລວງຫລາຍຈະເຕົ້າໂຮມກັນ ຢູ່ເມືອງນ້ຳທາ ແລະ ເມືອງສິງ ຫລາຍກ່ວາໝູ່. ນັບຕັ້ງແຕ່ທ້າຍຊຸມປີ 1990 ເປັນຕົ້ນມາ, ການທ່ອງທ່ຽວທາງດ້ານວັດທະນະທຳ ແລະ ທຳມະຊາດ ໄດ້ຈັດເປັນບູລິມະສິດອັນດັບ ໜຶ່ງຂອງແຂວງ ຊຶ່ງສາມາດດຶງດູດເອົາເງິນຕາຈາກຕ່າງປະເທດ ແລະ ສ້າງວຽກເຮັດງານທຳ

ໃຫ້ປະຊາຊົນຢ່າງກວ້າງຂວາງ. ອີງໃສ່ຂໍ້ມູນຂອງການມາຢ້ຽມຢາມ ແລະ ການໃຊ້ຈ່າຍຂອງນັກທ່ອງທ່ຽວໃນ ປີ 2005 ໄດ້ຮັບການວິເຄາະວ່າ ການທ່ອງທ່ຽວໃນແຂວງຫລວງນ້ຳທາໃນປີນັ້ນສາມາດສ້າງລາຍຮັບ ເປັນເງິນຕາຕ່າງປະເທດໄດ້ ຫລາຍກ່ວາ 3,152,512 ໂດລາ.

ການສຳພາດນັກທ່ອງທ່ຽວຕ່າງປະເທດ ຫລື ນັກທ່ອງທ່ຽວສາກົນຫລາຍໆຄົນ ໃນແຂວງ ຫລວງນ້ຳທາ ໄດ້ສະແດງໃຫ້ເຫັນວ່າ ກິດຈະກຳຊຶ່ງເປັນທີ່ນິຍົມທີ່ສຸດ (ຕາຕະລາງ 1) ແມ່ນການຍ່າງປ່າຫລາຍມື້, ການໄປຢ້ຽມຢາມບ້ານຊົນເຜົ່າ ໂດຍມີຜູ້ນຳທ່ຽວທີ່ເປັນຄົນຊົນເຜົ່າ, ການທ່ອງທ່ຽວ ລ່ອງເຮືອ ແລະ ເຂົ້າຊົມຖ້ຳຕ່າງໆ. ການທ່ອງທ່ຽວແບບທຳມະຊາດ ແລະ ວັດທະນະທຳແບບນີ້ ໄດ້ຖືກ ເອີ້ນໃນເອກະສານສະບັບນີ້ວ່າ "ການທ່ອງທ່ຽວແບບອະນຸລັກ" ຍ້ອນວ່າມັນສອດຄ່ອງກັບ ຍຸດທະສາດ ແລະ ແຜນປະຕິບັດງານ ຂອງການທ່ອງທ່ຽວແບບອະນຸລັກແຫ່ງຊາດ (LNTA 2005c). ເປັນຕົ້ນ ແມ່ນການທ່ອງທ່ຽວແບບອະນຸລັກ ໃນແຂວງ ຫລວງນ້ຳທາ (i) ສ້າງວຽກເຮັດງານທຳ ແລະ ກະຈາຍລາຍໄດ້ ຫລື ຜົນປະໂຫຍດທາງດ້ານການເງິນ ໃຫ້ແກ່ປະຊາຊົນທ້ອງຖິ່ນ; (ii) ໃຫ້ໂອກາດ ອັນເໝາະສົມແກ່ຄົນກຸ່ມນ້ອຍ ໃນການແລກປ່ຽນວັດທະນະທຳ; (iii) ສະກັດກັ້ນຜົນກະທົບທີ່ບໍ່ດີທາງດ້ານວັດທະນະທຳ ແລະ ສິ່ງແວດລ້ອມ; (iv) ມີຄວາມສຳຄັນໃນການເຜີຍແຜ່ຄວາມຮູ້ທາງດ້ານການສຶກສາ; (v) ສ້າງກອງທຶນເພື່ອການປົກປັກຮັກສາສິ່ງແວດລ້ອມ ແລະ ວັດທະນະທຳ.

ຕາຕະລາງ 1: ຄວາມສົນໃຈຕົ້ນຕໍຂອງນັກທ່ອງທ່ຽວສາກົນທີ່ຈະເລືອກກິດຈະກຳທ່ອງທ່ຽວໃນແຂວງຫລວງນ້ຳ ທາ ປີ 2004 - ປີ 2005

| ກິດຈະກຳ | **2004** (n = 210)<br>ຈຳນວນນັກທ່ອງທ່ຽວທີ່ໄດ້ສຳພາດ | **2005** (n = 170)<br>ຈຳນວນນັກທ່ອງທ່ຽວທີ່ໄດ້ສຳພາດ |
|---|---|---|
| | **% ຄວາມສົນໃຈ** | |
| ທ່ອງທ່ຽວຍ່າງປ່າ | 77 | 78 |
| ຢ້ຽມຢາມບັນດາບ້ານຊົນເຜົ່າ | 74 | 75 |
| ທ່ຽວຊົມນ້ຳຕົກຕາດ | 44 | 54 |
| ທ່ອງທ່ຽວລ່ອງເຮືອ/ລ່ອງແພ | 35 | 43 |
| ທ່ອງທ່ຽວຂີ່ລົດຖີບຂຶ້ນພູ | 29 | 42 |
| ທ່ຽວຊົມສັດປ່າ | 40 | 41 |
| ທ່ຽວຊົມຖ້ຳ | 40 | 40 |
| ຊົມການສະແດງຕ່າງໆທາງວັດທະນະທຳ | - | 29 |
| ການຕັ້ງແຄ້ມ | 20 | 24 |
| ຊົມນົກ | 21 | 19 |

ເພື່ອມີສ່ວນຮ່ວມໃນຫລາຍໆກິດຈະກຳ ທີ່ສະແດງໃນຕາຕະລາງ 1, ນັກທ່ອງທ່ຽວຕ້ອງຈອງລາຍການນຳທ່ຽວຜ່ານ ໜ່ວຍການບໍລິການການນຳທ່ຽວ ຫລື ບໍລິສັດທ່ອງທ່ຽວໃນທ້ອງຖິ່ນໃດໜຶ່ງຢູ່ພາຍໃນແຂວງ. ໃນປີ 2005 ໄດ້ມີບໍລິສັດທ່ອງທ່ຽວຂັ້ນແຂວງ 4 ບໍລິສັດ ແລະ ລະດັບຊາດ 2 ບໍລິສັດໃນແຂວງຫລວງນ້ຳທາ ທີ່ຂາຍລາຍການນຳທ່ຽວຢູ່ໃນ ແລະ ອ້ອມຂ້າງເຂດປ່າສະຫງວນ ແຫ່ງຊາດນ້ຳຫ້າ. ຕາຕະລາງ 2 ສະແດງໃຫ້ເຫັນເຖິງ ທຸລະກິດທີ່ກ່ຽວກັບການທ່ອງທ່ຽວແບບອະນຸລັກໄດ້ສ້າງວຽກເຮັດງານທຳໃຫ້ຄົນທ້ອງຖິ່ນ 138 ຄົນ ທີ່ເປັນພະນັກງານນຳທ່ຽວ ແລະ ພະນັກງານຫ້ອງການ, ເຊິ່ງໃນນັ້ນ ຜູ້ທີ່ເປັນຊົນເຜົ່າສ່ວນໜ້ອຍໄດ້ກວມເອົາເປີເຊັນສູງ. ຕາມປົກກະຕິແລ້ວ ຄ່າແຮງງານໃນການນຳທ່ຽວພາຍໃນເມືອງ ແມ່ນ 10 ໂດລາຕໍ່ມື້ ແລະ ຜູ້ນຳທ່ຽວສ່ວນຫລາຍລາຍງານວ່າພວກເຂົາເຮັດວຽກໃນລະຫວ່າງ 1-20 ມື້ຕໍ່ເດືອນ ສ່ວນພະນັກງານຫ້ອງການ ຕາມປົກກະຕິແລ້ວໄດ້ຮັບແຮງງານຂັ້ນພື້ນຖານ ບວກກັບສ່ວນແບ່ງທີ່ໄດ້ຈາກການຂາຍລາຍການນຳທ່ຽວ, ເຊິ່ງລາຍຮັບຕົກຢູ່ໃນລະຫວ່າງ 50-200 ໂດລາຕໍ່ເດືອນ.

<u>ຕາຕະລາງ 2: ຄຸນລັກສະນະຂອງບັນດາຫົວໜ່ວຍ ຫລື ບໍລິສັດນຳທ່ຽວໃນແຂວງຫລວງນ້ຳທາ, ປີ 2005</u>

| ຊື່ບໍລິສັດ/ຫົວໜ່ວຍບໍລິການນຳທ່ຽວ | ເມືອງ | ຈຳນວນພະນັກງານນຳທ່ຽວ/ ຜູ້ເຮັດວຽກປະຈຳ | ປະເພດນຳທ່ຽວ/ຈຳນວນລາຍການນຳທ່ຽວທີ່ໄດ້ຂາຍ |
|---|---|---|---|
| 1. ໜ່ວຍບໍລິການນຳທ່ຽວ ຫລວງນ້ຳທາ | ນ້ຳທາ (ເປີດໃນປີ 2000) | ຊາຍ 59; ຍິງ 15<br>ພະນັກງານຊົນເຜົ່າ (34) | ຍ່າງປ່າ (5)<br>ນຳທ່ຽວຕາມລຳແມ່ນ້ຳ (1) |
| 2. ໜ່ວຍບໍລິການນຳທ່ຽວ ຂີ່ລົດຖີບ ຫລວງນ້ຳທາ | ນ້ຳທາ (ເປີດໃນປີ 2003) | ຊາຍ 3; ຍິງ 1<br>ພະນັກງານຊົນເຜົ່າ (4) | ຂີ່ລົດຖີບຂຶ້ນພູ (3) |
| 3. ໜ່ວຍບໍລິການນຳທ່ຽວ ເມືອງສິງ | ສິງ (ເປີດໃນປີ 2001) | ຊາຍ 24; ຍິງ 3<br>ພະນັກງານຊົນເຜົ່າ (23) | ຍ່າງປ່າ (5)<br>ນຳທ່ຽວທາງທຳມະຊາດ ແລະ ວັດທະນະທຳ (1) |
| 4. ໜ່ວຍບໍລິການນຳທ່ຽວ ເມືອງວຽງພູຄາ | ວຽງພູຄາ (ເປີດໃນປີ 2003) | ຊາຍ 18; ຍິງ 3<br>ພະນັກງານຊົນເຜົ່າ (16) | ຍ່າງປ່າ (3)<br>ທ່ຽວຊົມຖ້ຳ (2) |
| 5. **ບໍລິສັດທ່ອງທ່ຽວ ກຼີນດິສໂກເວີຣີ (**Green Discovery**)** | ນ້ຳທາ (ເປີດໃນປີ 2000) | ຊາຍ 10; ຍິງ 0<br>ພະນັກງານຊົນເຜົ່າ (2) | ຍ່າງປ່າ (5)<br>ລ່ອງເຮືອ (3)<br>ຂີ່ລົດຖີບຂຶ້ນພູ (5)<br>ການຕັ້ງແຄ້ມ (1) |
| 6. ບໍລິສັດທ່ອງທ່ຽວວຽງຈັນ/ Exotissimo | ສິງ (ເປີດໃນປີ 2004) | ຊາຍ 2; ຍິງ 0<br>ພະນັກງານຊົນເຜົ່າ 0 % | ຍ່າງປ່າ (1) |
| **ລວມ:** | | **138 ຄົນ (ພະນັກງານຊົນເຜົ່າ 79 ຄົນ)** | **35 ລາຍການນຳທ່ຽວ** |

ລາຍການນຳທ່ຽວ 35 ລາຍການ ທີ່ຂາຍເປັນປະຈຳໃນແຂວງຫລວງນ້ຳທາ ສ້າງລາຍຮັບ ແລະ ວຽກເຮັດງານທຳໃຫ້ແກ່ປະຊາຊົນ ປະມານ 30 ບ້ານ ທີ່ສະໜອງອາຫານ ແລະ ການບໍລິການທ່ອງທ່ຽວຕ່າງໆ ໃຫ້ແກ່ບັນດາຄະນະທ່ອງທ່ຽວ. ຊາວບ້ານຈະເຮັດວຽກເປັນຜູ້ນຳທ່ຽວ (ມີຜູ້ນຳທ່ຽວຂັ້ນບ້ານຫລາຍກ່ວາ 100 ຄົນ ໄດ້ຮັບການຝຶກອົບຮົມ), ສະໜອງອາຫານ, ເຄື່ອງດື່ມ ແລະ ສະຖານທີ່ພັກເຊົາໃຫ້ແກ່ນັກທ່ອງທ່ຽວ ທີ່ມາພັກຄ້າງຄືນ, ຂາຍເຄື່ອງຫັດຖະກຳ, ບໍລິການຂົນສົ່ງທາງບົກ ແລະ ທາງນ້ຳໃຫ້ແກ່ຄະນະທ່ອງທ່ຽວ ແລະ ພວກເຂົາເຈົ້າໄດ້ຮັບເງິນຈາກການບໍລິການດັ່ງກ່າວ ໂດຍຫ້ອງການທ່ອງທ່ຽວແຂວງ ແລະ ໜ່ວຍງານຄຸ້ມຄອງປ່າສະຫງວນແຫ່ງຊາດນ້ຳຫ້າ ເປັນຜູ້ຈ່າຍ ເພື່ອຮັກສາ ແລະ ຄຸ້ມຄອງທາງຍ່າງທີ່ໃຊ້ໃນການຍ່າງປ່າ. ນັບຕັ້ງແຕ່ ເດືອນມີນາ ປີ 2001 ເຖິງ ເດືອນກຸມພາ ປີ 2006 ລາຍການນຳທ່ຽວຍ່າງປ່າ ແລະ ລ່ອງເຮືອ ທັງໝົດ 2,574 ລາຍການ ໄດ້ຂາຍໃນເມືອງນ້ຳທາ ແລະ ເມືອງສິງ, ລາຍຮັບລວມມີ 293,049 ໂດລາ ແລະ ສ້າງຜົນປະໂຫຍດດ້ານການ ເງິນຈຳນວນ 174,036 ໂດລາ ໃຫ້ແກ່ ຜູ້ໃຫ້ບໍລິການການທ່ອງທ່ຽວໃນທ້ອງຖິ່ນ. ຖ້າລວມລາຍຮັບໃນເມືອງວຽງພູຄາເຂົ້ານຳ, ລາຍຮັບທີ່ໄດ້ຈາກການຂາຍລາຍການທ່ອງທ່ຽວແບບອະນຸລັກ ສຳລັບ 5 ປີ ທຳອິດຂອງອຸດສາຫະກຳນີ້ ຈະເພີ່ມຂຶ້ນເປັນ 305,520 ໂດລາ.

<u>ຕາຕະລາງ 3: ຂໍ້ມູນການຂາຍລາຍການນຳທ່ຽວ ແລະ ເງິນຫມູນວຽນ/ກະແສເງິນສົດ ຂອງຫົວໜ່ວຍບໍລິການ ນຳທ່ຽວ/ບໍລິສັດນຳທ່ຽວ ໃນແຂວງຫລວງນ້ຳທາ, ປີ 2001-2006</u>

| | ຈຳນວນລາຍການນຳທ່ຽວ | ຈຳນວນນັກທ່ອງທ່ຽວ | ເງິນທີ່ໄດ້ຈາກການຂາຍລາຍການນຳທ່ຽວ (ເປັນໂດລາ) | ລາຍຮັບສຳລັບຄົນທ້ອງຖິ່ນ | ກອງທຶນ 5% ເພື່ອສົ່ງເສີມການທ່ອງທ່ຽວ | ຄ່າໃບອະນຸຍາດເຂົ້າປ່າສະຫງວນແຫ່ງຊາດ | ພາສີແຂວງ | ກອງທຶນບ້ານ | ຄ່າສິ້ນເປືອງອື່ນໆ |
|---|---|---|---|---|---|---|---|---|---|
| ໜ່ວຍບໍລິການນຳທ່ຽວຫລວງນ້ຳທາ (2001-ກຸມພາ 2006) | 1,414 | 7,165 | 150,051 | 103,565 | 6,982 | 7,155 | 2,770 | 10,262 | 19,279 |
| ບໍລິສັດທ່ອງທ່ຽວGreen Discovery (2002-ກຸມພາ 2006) | 564 | 2,110 | 76,963 | 39,022 | 3,265 | 2,160 | 6,538 | 0 | 20,320 |
| ໜ່ວຍບໍລິການນຳທ່ຽວອະນຸລັກ ເມືອງສິງ (2003-ກຸມພາ 2006) | 596 | 2,214 | 66,035 | 31,449 | 2,206 | 0 | 1,165 | 2,790 | 6,544 |
| **ລວມ:** | **2,574** | **11,489** | **293,049** | **174,036** | **12,453** | **9,315** | **10,473** | **13,052** | **46,143** |

ສິ່ງທີ່ໜ້າພູມໃຈທີ່ສຸດ ແມ່ນ ຜົນສຳເລັດທີ່ກຳລັງຕາມມາ ພາຍຫລັງທີ່ລັດຖະບານລາວ ແລະ ຜູ້ໃຫ້ທຶນຊ່ວຍເຫລືອຈາກຫລາຍພາກສ່ວນ ໄດ້ລົງທຶນຈຳນວນຫລາຍລ້ານໂດລາ ເພື່ອພັດທະນາ ໂຄງລ່າງພື້ນຖານ ແລະ ຊັບພະຍາກອນມະນຸດທີ່ຈຳເປັນ ເພື່ອກໍ່ຕັ້ງ ແລະ ດຳເນີນອຸດສາຫະກຳ ການທ່ອງທ່ຽວແບບອະນຸລັກ ແລະ ການຄຸ້ມຄອງປ່າສະຫງວນແຫ່ງຊາດນ້ຳທ້າໃຫ້ດີຂຶ້ນ. ປີ 2006 ໄດ້ກາຍເປັນປີທີ່ມີລາຍຮັບຫລາຍ ໃນເບື້ອງຂອງຈຳນວນລາຍການນຳທ່ຽວທີ່ຂາຍໄດ້, ລາຍຮັບຂອງ ທາງພາກລັດ ແລະ ພາກເອກະຊົນ ແລະ ການສ້າງວຽກເຮັດງານທຳໃນລະດັບບ້ານ. ໃນສອງເດືອນ ທຳອິດຂອງປີ 2006, ນັກທ່ອງທ່ຽວ 979 ຄົນໄດ້ຊື້ 248 ລາຍການນຳທ່ຽວ ເຊິ່ງມີຍອດຂາຍ 33,060 ໂດລາ. ອີງໃສ່ຕົວເລກເຫລົ່ານີ້, ການຄາດຄະເນແບບຕ່ຳ ສະເລ່ຍຍອດຂາຍຕໍ່ເດືອນ ໃນໄລຍະລະດູ ການທ່ອງທ່ຽວສີ່ເດືອນ ທີ່ມີຄົນມາທ່ຽວຫລາຍ ຈະມີຍອດຂາຍທັງໝົດ 15,000 ໂດລາຕໍ່ເດືອນ, ສຳລັບລະດູການທ່ອງທ່ຽວ ທີ່ມີຄົນມາທ່ຽວໃນລະດັບປານກາງ ແມ່ນມີຍອດຂາຍປະມານ 10,000 ໂດລາຕໍ່ເດືອນ ແລະ ໃນລະດູການທ່ອງທ່ຽວ ທີ່ມີຄົນມາທ່ຽວໜ້ອຍ ແມ່ນມີຍອດຂາຍ ປະມານ 5,000 ໂດລາຕໍ່ເດືອນ, ລາຍຮັບທັງໝົດ ທີ່ຈະໄດ້ຮັບໃນປີ 2006 ແມ່ນ ຈຳນວນ 120,000 ໂດລາ (ຮູບສະ ແດງ 1).

<u>ຮູບສະແດງ 1: ລາຍຮັບປະຈຳປີ ຈາກການຂາຍລາຍການນຳທ່ຽວແບບອະນຸລັກ ໃນແຂວງ ຫລວງນ້ຳທາ, ເລີ່ມແຕ່ ປີ 2001 - 2006</u>




*ອີງຕາມຂໍ້ມູນການຂາຍທີ້ວໃນເດືອນ ມັງກອນ - ກຸມພາ ປີ 2006 ຈາກໜ່ວຍບໍລິການນຳທ່ຽວ ແລະ ບໍລິສັດນຳທ່ຽວ 4 ແຫ່ງ*

ແຕ່ວ່າລາຍຮັບລວມນັ້ນ ໄດ້ກະຈາຍແນວໃດ ແລະ 'ການຮົ່ວໄຫລ' ຂອງເງິນຕາ ອອກຈາກເສດຖະກິດທ້ອງຖິ່ນມີຄືແນວໃດ? ໃນຂະນະທີ່ເອກະສານສະບັບນີ້ ບໍ່ໄດ້ມີເຈດຕະນາທີ່ຈະລາຍງານເຖິງຜົນກະທົບທະວີຄູນ ຂອງເງິນຕາຈາກຕ່າງປະເທດທີ່ໄດ້ຮັບ, ໄດ້ມີຂໍ້ມູນພຽງພໍ ທີ່ຈະລາຍງານເຖິງການກະຈາຍລາຍໄດ້ ຫລື ການແບ່ງປັນຜົນປະໂຫຍດ ໃຫ້ແກ່ພາກລັດ ແລະ ເອກະຊົນໃນແຂວງຫລວງນໍ້າທາ. ຕົວຢ່າງ: ໃນປີ 2005, ໜ່ວຍບໍລິການນໍາທ່ຽວເທດສະບານ ແຂວງຫລວງນໍ້າທາ ມີລາຍຮັບ ຫລື ຍອດຂາຍ 31,745 ໂດລາ. ໃນນັ້ນ ໜ່ວຍບໍລິການນໍາທ່ຽວ ໄດ້ແບ່ງປັນລາຍໄດ້ໃຫ້ແກ່ຄົນທ້ອງຖິ່ນ 69% ຈໍານວນເປີເຊັນດັ່ງກ່າວ ມີຄ່ານໍາທ່ຽວ, ອາຫານ, ສະຖານທີ່ພັກເຊົາໃນບ້ານ, ຄ່າຂົນສົ່ງ, ເຄື່ອງຫັດຖະກໍາ ແລະ ຄ່າບໍາລຸງຮັກສາເສັ້ນທາງຍ່າງ. (ຊີປານີ, ປີ 2005).

<u>ຮູບສະແດງ 2: ການກະຈາຍລາຍໄດ້ ຂອງໜ່ວຍບໍລິການນໍາທ່ຽວ ເທດສະບານແຂວງຫລວງນໍ້າທາ</u>




## ຢາງພາລາ ແລະ ການທ່ອງທ່ຽວແບບອະນຸລັກ ໃນເຂດປ່າສະຫງວນແຫ່ງຊາດນໍ້າຫ້າ

ຮອດປີ 2005, ເນື້ອທີ່ຫລາຍກ່ວາ 4,580 ເຮັກຕາຂອງປ່າຊຸດໂຊມ ແລະ ດິນເປົ່າຫວ່າງ ໄດ້ຖືກ ບຸກເບີກ ແລະ ປູກທົດແທນດ້ວຍຕົ້ນຢາງພາລາຂະໜາດນ້ອຍ ເຖິງຂະໜາດກາງ ເຊິ່ງຢູ່ໃກ້ ກັບຫລາຍເສັ້ນທາງ ທີ່ໃຊ້ໃນການທ່ອງທ່ຽວແບບຍ່າງປ່າ ໃນເມືອງສິງ ແລະ ເມືອງນໍ້າທາ (Alton et al, ປີ 2005). ດັ່ງນັ້ນ, ການຖາງປ່າ ແລະ ບຸກເບີກທີ່ດິນຂະໜາດກ້ວາງຈຶ່ງຖືກຈໍາກັດ ໃຫ້ຢູ່ເຂດ ທາງຜ່ານທີ່ຢູ່ຕາມແຄມທາງເຊັ່ນ: ເສັ້ນທາງເລກທີ 3 ທີ່ເນັ່ງແຕ່ເໜືອຫາໃຕ້ ລະຫວ່າງປະເທດຈີນ ແລະ ໄທ, ເສັ້ນທາງເລກທີ 17A ທີ່ເຊື່ອມຕໍ່ຫລວງນໍ້າທາ ໃສ່ເມືອງສິງ ແລະ ສ່ວນຫລາຍ ຢູ່ຕາມ ແຄມທາງເກືອບທຸກເສັ້ນທາງຊົນນະບົດທີ່ອອກຈາກເມືອງສິງ. ການສໍາປະທານຂະໜາດໃຫຍ່ ຫາກໍ່ຖືກມອບໃຫ້ແກ່ກຸ່ມບໍລິສັດ ຊີໂນ - ລາວ ເຊິ່ງມີແຜນການທີ່ຈະປູກຕົ້ນຢາງພາລາ 3,000 ຕົ້ນ ຢູ່ຮອບນອກທາງດ້ານທິດຕາເວັນຕົກສ່ຽງໃຕ້ ຂອງປ່າສະຫງວນແຫ່ງຊາດ ໃນເມືອງວຽງພູຄາ (ພະແນກປ່າໄມ້ເມືອງວຽງພູຄາ, ປີ 2006). ຮູບສະແດງ 3 ສະແດງໃຫ້ເຫັນວ່າ ການລ່ວງລໍ້າ ຫລື ບຸກລຸກຂອງຕົ້ນຢາງພາລາ ເຂົ້າສູ່ປ່າສະຫງວນແຫ່ງຊາດນໍ້າຫ້າ ແລະ ເຂດປ່າໄມ້ໃຫຍ່ທີ່ຢູ່ໃກ້ຄຽງກັນ ໃນປະຈຸບັນ

ທີ່ເຫັນໄດ້ແຈ້ງທີ່ສຸດ ແມ່ນ ຢູ່ຕາມເສັ້ນທາງເລກທີ 17A. ອີງໃສ່ແນວໂນ້ມການຂະ- ຫຍາຍຕົວ ຈາກປີ 2000 - 2005, ອຸປະສັກ ຫລື ສິ່ງທ້າທາຍຕົວຈິງ ທີ່ໜ້າເປັນແມ່ນ: ຕົ້ນຢາງພາລາ ະຖືກ ປູກຫລາຍຂຶ້ນ ຢູ່ທາງໃນເຂດປ່າສະຫງວນໃນອະນາຄົດ.

<u>ຮູບສະແດງ 3: ບັນດາເຂດການທ່ອງທ່ຽວແບບອະນຸລັກ ທີ່ມີການເຮັດສວນຢາງພາລາ ຢູ່ໃນ ແລະ ອ້ອມຂ້າງ ເຂດປ່າສະຫງວນແຫ່ງຊາດນ້ຳທ້າ</u>




ປະສົບການໃນແຂວງຫລວງນ້ຳທາ ສະແດງໃຫ້ເຫັນວ່າ ເມື່ອປ່າທຳມະຊາດໄດ້ຖືກຖາງ ແລະ ບຸກເບີກເນື້ອທີ່ດັ່ງກ່າວ ຫັນມາເປັນສວນຢາງພາລາ, ເຂດດັ່ງກ່າວຈະສູນເສຍສິ່ງທີ່ໜ້າສົນໃຈ ແລະ ຄວາມປະທັບໃຈຂອງນັກທ່ອງທ່ຽວທີ່ສະແຫວງຫາ ບັນດາກິດຈະກຳການທ່ອງທ່ຽວແບບອະນຸລັກ ທັນທີ. ບາງລາຍການນຳທ່ຽວທີ່ມີຢູ່ໃນປະຈຸບັນ ຕ້ອງຊອກຫາເສັ້ນທາງນຳທ່ຽວໃໝ່ ຫລື ໂຈະ ການບໍລິການນຳທ່ຽວໄວ້ຊົ່ວຄາວ. ຕົວຢ່າງ: ໃນປີ 2005, ພາຍຫລັງການຖາງປ່າທຳມະຊາດທີ່ເຄີຍເປັນເສັ້ນທາງທ່ອງທ່ຽວແບບຍ່າງປ່າ, ມັນມີຄວາມຈຳເປັນທີ່ຈະຕ້ອງປ່ຽນເສັ້ນທາງນຳທ່ຽວ ຂອງສອງລາຍການນຳທ່ຽວໃນເມືອງນ້ຳທາ, ໜຶ່ງລາຍການນຳທ່ຽວໃນເມືອງສິງ ແລະ ໜຶ່ງລາຍການນຳທ່ຽວໃນ ເມືອງວຽງພູຄາ. ຢູ່ເມືອງສິງ, ການຖາງປ່າເພື່ອທີ່ຈະເຮັດສວນ ໄດ້ເຮັດໃຫ້ເສັ້ນທາງທ່ອງທ່ຽວຍ່າງປ່າທີ່ມີຊື່ສຽງແຫ່ງໜຶ່ງຕ້ອງຢຸດການເຄື່ອນໄຫວເລີຍ.

## ການສົນທະນາ ແລະ ບັນດາຂໍ້ແນະນຳ

ຈາກຫລັກການຂອງການຄຸ້ມຄອງປ່າສະຫງວນ, ການເລີ່ມຕົ້ນຂອງການເຮັດສວນຢາງພາລາ

ໃນເຂດປ່າສະຫງວນແຫ່ງຊາດ ຂັດກັບດຳລັດນາຍົກລັດຖະມົນຕີ ເລກທີ 164 (GoL, 1993) ແລະ ກົດຫມາຍວ່າດ້ວຍປ່າໄມ້ປີ 1996 (GoL, 1996) ທີ່ກ່າວໄວ້ວ່າ ຈຸດປະສົງຕົ້ນຕໍຂອງ ປ່າສະຫງວນ ຂອງລາວ ແມ່ນ ເພື່ອປົກປັກຮັກສາຊີວະນາໆພັນ, ຄຸ້ມຄອງແຫລ່ງນ້ຳ, ຮັກສາຄວາມສົມດູນທາງດ້ານ ລະບົບນິເວດວິທະຍາ ແລະ ຮັກສາຄວາມສວຍສົດງົດງາມຂອງທຳມະຊາດໄວ້ ສຳລັບການທ່ອງທ່ຽວ ແລະ ຄົ້ນຄວ້າວິໄຈ. ການເຮັດສວນຢາງພາລາຊະນິດດຽວ ໃນເຂດປ່າສະຫງວນ ບໍ່ກົງກັບຈຸດປະສົງ ທີ່ກ່າວມາຂ້າງເທິງຂໍ້ໃດເລີຍ. ການທ່ອງທ່ຽວແບບອະນຸລັກ ທີ່ກຳລັງດຳເນີນຢູ່ ໃນແຂວງຫລວງນ້ຳທາ ສາມາດຕອບສະຫນອງຈຸດປະສົງຂ້າງເທິງຫມົດທຸກຂໍ້.

---

*ການທ່ອງທ່ຽວແບບອະນຸລັກ ກຳລັງກະຈາຍລາຍໄດ້*
*ທີ່ໄດ້ມາຈາກເງິນຕາຕ່າງປະເທດໂດຍກົງ ແລະ ຫລາຍຂຶ້ນ*
*ໂດຍປາສະຈາກການຖາງປ່າ ແລະ ບຸກເບີກທີ່ດິນຂະຫນາດກ້ວາງ*

---

ເປັນທີ່ເຂົ້າໃຈກັນດີວ່າ ຜູ້ວາງແຜນການຊົມໃຊ້ທີ່ດິນ ແລະ ຊາວບ້ານທ້ອງຖິ່ນ ໃນແຂວງ ຫລວງນ້ຳທາ ຕ່າງກໍ່ພະຍາຍາມຊອກຫາຊ່ອງທາງ ແລະ ກິດຈະກຳກະຈາຍລາຍໄດ້ແບບໃຫມ່ ເພື່ອສ້າງຄວາມ ຫລາກຫລາຍໃຫ້ເສດຖະກິດໃນທ້ອງຖິ່ນ, ໂດຍສະເພາະແມ່ນ ຜ່ານການນຳໃຊ້ ສິ່ງທີ່ຄົນທົ່ວໄປ ມັກຄິດວ່າ ເປັນ "ດິນທີ່ບໍ່ເປັນປະໂຫຍດ" ກໍ່ຄື ດິນປ່າຊຸດໂຊມ ແລະ ດິນເປົ່າຫວ່າງ. ໃນຂະນະທີ່ການ ປູກຕົ້ນຢາງພາລາ ສາມາດເປັນທາງເລືອກທີ່ເປັນໄປໄດ້ ໃນການສ້າງລາຍຮັບ ສຳລັບບາງຄອບຄົວ - ດັ່ງທີ່ບ້ານຫາດຍາວໄດ້ປະຕິບັດ (Alton et al, 2005) - ໃນປະຈຸບັນ ການທ່ອງ ທ່ຽວແບບອະນຸລັກທີ່ ປະຊາຊົນມີສ່ວນຮ່ວມ ກໍ່ສາມາດເປັນທາງເລືອກ ໃນການສ້າງລາຍຮັບໄດ້ເຊັ່ນ ກັນ, ເຊິ່ງສາມາດ ກະຈາຍລາຍໄດ້ໃຫ້ແກ່ເກືອບ 30 ບ້ານ. ການທ່ອງທ່ຽວແບບອະນຸລັກ ໃນແຂວງ ຫລວງນ້ຳທາ ກຳລັງກະຈາຍລາຍໄດ້ ທີ່ໄດ້ມາຈາກເງິນຕາຕ່າງປະເທດໂດຍກົງ ແລະ ຫລາຍຂຶ້ນ ໂດຍປາສະຈາກ ການຖາງປ່າ ແລະ ບຸກເບີກທີ່ດິນຂະຫນາດກ້ວາງ. ດັ່ງນັ້ນ, ຜະລິດຕະພັນເຄື່ອງປ່າ ຂອງດົງ ທີ່ມີຄວາມ ສຳຄັນທາງດ້ານເສດຖະກິດ ກໍ່ຈະຖືກປົກປັກຮັກສາ ແລະ ຈະບໍ່ມີການສູນເສຍ ກຳມະສິດທີ່ດິນ ໃນທ້ອງຖິ່ນ ຫລື ລະບົບນິເວດວິທະຍາ ໂດຍນຳໃຊ້ຄວາມຮູ້ທ້ອງຖິ່ນ ຫລື ຄວາມຮູ້ ແບບພື້ນເມືອງ ເຂົ້າໃນການເຮັດທຸລະກິດ.

ທ່ານ Alton ແລະ ຜູ້ຮ່ວມງານທ່ານອື່ນໆ (2005) ໄດ້ຄຳນວນໄວ້ວ່າ ລາຍຮັບ ຫລື ຜົນປະ ໂຫຍດທັງຫມົດຂອງການປູກຕົ້ນຢາງພາລາຫນຶ່ງເຮັກຕາ (ໃນແຂວງຫລວງນ້ຳທາ) ໃນໄລຍະເວລາ 30 ປີ ແມ່ນ 23,148 ໂດລາ. ຕົ້ນທຶນແມ່ນນອນຢູ່ໃນລະຫວ່າງ 3,451 ຫາ 6,303 ໂດລາ, ຂຶ້ນກັບ ລະດັບຄວາມອຸດົມສົມບູນຂອງດິນ ແລະ ເຄື່ອງທີ່ນຳໃຊ້ອື່ນໆ. ເງິນຕອບແທນ (ລາຍຮັບສຸດທິ/ ກຳໄລສຸດທິ) ທີ່ໄດ້ຮັບ ແມ່ນ ຢູ່ໃນລະຫວ່າງ 18,204 ຫາ 19,677 ໂດລາ, ດັ່ງນັ້ນ ລາຍຮັບສຸດທິ ປະຈຳປີ ແມ່ນ ຕົກຢູ່ 617 ໂດລາຕໍ່ເຮັກຕາ. ທ່ານຈະປຽບທຽບມູນຄ່າການລົງທຶນຂອງແຂວງ ໃສ່ການປູກ ຕົ້ນຢາງພາລາໃນປະຈຸບັນ (4,580 ເຮັກຕາ) ໃສ່ມູນຄ່າຂອງອຸດສາຫະກຳການທ່ອງ

ທ່ຽວໃນແຂວງໄດ້ຄືແນວໃດ? ອີງໃສ່ຕາມການສັນນິຖານຂ້າງເທິງ, ເນື້ອທີ່ສວນຢາງພາລາ 4,580 ເຮັກຕາຂອງແຂວງ ຈະສ້າງ ລາຍຮັບປະຈຳປີ ຈຳນວນ 2,825,860 ໂດລາ, ເຊິ່ງຈຳນວນເງິນດັ່ງກ່າວ ໜ້ອຍກ່ວາຈຳນວນເງິນ ທີ່ອຸດສາຫະກຳການທ່ອງທ່ຽວຂອງແຂວງສ້າງໄດ້ ໃນປີ 2005 (3,152,512 ໂດລາ) ເຖິງ 10%. ການລໍຄອຍທີ່ຈະໄດ້ລາຍຮັບຈາກຕົ້ນຢາງພາລາ ແມ່ນຕ້ອງຖ້າອີກຫລາຍປີ, ໃນຂະນະທີ່ການທ່ອງ ທ່ຽວແບບອະນຸລັກ ກຳລັງສ້າງລາຍຮັບໃນມື້ນີ້. ການທ່ອງທ່ຽວແບບອະນຸລັກມີຊ່ອງທາງ ຫລື ໂອກາດ ໃນການສ້າງລາຍໄດ້ ແບບໃດແດ່ ໃນອະນາຄົດ? ສົມມຸດວ່າ ແຂວງຫລວງນ້ຳທາ ສາມາດຮັກສາອັດຕາການເພີ່ມຂຶ້ນຂອງນັກທ່ອງທ່ຽວ ທີ່ເຂົ້າມາຢ້ຽມຢາມ ໃຫ້ຢູ່ໃນລະດັບທີ່ຄ້າຍຄືກັບ ປີ 1998 - 2005 (ເຊິ່ງເປັນໄລຍະເວລາທີ່ຈຳນວນນັກທ່ອງທ່ຽວເພີ່ມ ຂຶ້ນຈາກ 18,600 ເປັນ 49,258 ຄົນ), ພໍຮອດປີ 2013, ເຊິ່ງເປັນເວລາ ທີ່ຕົ້ນຢາງພາລາສ່ວນໃຫຍ່ທີ່ ໄດ້ປູກໃນປີ 2004 - 2005 ເລີ່ມໃຫ້ຜົນຜະລິດຢາງ, ແຂວງຫລວງນ້ຳທາ ກໍ່ສາມາດ ຄາດຫມາຍໄດ້ວ່າ ຈະຕ້ອນຮັບນັກທ່ອງທ່ຽວຈຳນວນ 79,916 ຄົນ. ຖ້ານຳໃຊ້ການ ຄາດຄະເນແບບ ຕ່ຳ ລາຍຈ່າຍ ປະຈຳວັນຂອງນັກທ່ອງທ່ຽວຈະເພີ່ມຂຶ້ນເປັນ 27.2 ໂດລາຕໍ່ມື້ (ອີງໃສ່ຂໍ້ມູນແນວ ໂນ້ມການທ່ອງທ່ຽວ ຂອງປີ 2000 - 2005 ທີ່ສະແດງໃຫ້ເຫັນວ່າລາຍຈ່າຍປະຈຳວັນເພີ່ມຂຶ້ນ 1.4 ໂດລາຕໍ່ປີ) ແລະ ສະເລ່ຍໄລຍະພັກເຊົາຂອງນັກທ່ອງທ່ຽວເພີ່ມຂຶ້ນ ຈາກພຽງແຕ່ໜຶ່ງມື້ ເປັນ ຫ້າມື້, ການຄາດຄະເນ ລາຍຮັບລວມ ຂອງແຂວງຫລວງນ້ຳທາ ທີ່ໄດ້ມາຈາກການທ່ອງທ່ຽວແບບອະນຸລັກ ຈະແມ່ນ 10,868,576 ໂດລາ ໃນປີ 2013, ຊຶ່ງເຫັນໄດ້ຊັດເຈນວ່າ ຕົວເລກລາຍຮັບຈາກການ ທ່ອງທ່ຽວ ສູງກ່ວາລາຍຮັບ ທີ່ແຂວງຈະໄດ້ຮັບຈາກສວນຢາງພາລາ 4,580 ເຮັກຕາເຖິງ 3.8 ເທົ່າ.

---

***ການຂະຫຍາຍເນື້ອທີ່ສວນຢາງພາລາອາດ ຈະທຳລາຍອຸດສາຫະກຳການທ່ອງທ່ຽວແບບອະນຸລັກຂອງແຂວງ ແລະ ຜົນທີ່ໄດ້ຮັບກໍ່ແມ່ນເສດຖະກິດທ້ອງຖິ່ນຈະໄດ້ຮັບການກະທົບ ແລະ ຄວາມເສຍຫາຍທັນທີ.***

---

ອີງໃສ່ການຄິດໄລ່ ກຳໄລສຸດທິ ໃນປີ 2004 ຂອງ ທ່ານ Alton ແລະ ຜູ້ຮ່ວມງານ, ເພື່ອທີ່ ຈະໃຫ້ລາຍໄດ້ຈາກສວນຢາງພາລາເທົ່າກັບ ລາຍໄດ້ທີ່ການທ່ອງທ່ຽວຈະສາມາດສ້າງໄດ້ນັ້ນ, ສວນ ຢາງພາລາຕ້ອງມີເນື້ອທີ່ປະມານ 17,615 ເຮັກຕາ, ພ້ອມນັ້ນ ກໍ່ຕ້ອງມີກຳມະກອນ 13,350 ຄົນ ເພື່ອ ບົວລະບັດຕົ້ນຢາງ. ການຂະຫຍາຍເນື້ອທີ່ສວນຢາງ ພາລາໃຫ້ເປັນ 17,615 ເຮັກຕາ ອາດຈະເປັນ ບັນຫາ, ໂດຍສະເພາະ ຖ້າມັນໝາຍເຖິງການລ່ວງລ້ຳ ຫລື ບຸກລຸກເຂົ້າປ່າສະຫງວນ ນ້ຳຫ້າຕື່ມອີກ. ການກະທຳດັ່ງກ່າວ ອາດຈະທຳລາຍອຸດສາຫະກຳການທ່ອງທ່ຽວແບບອະນຸລັກ ຂອງແຂວງ ແລະ ຜົນທີ່ໄດ້ຮັບກໍ່ແມ່ນເສດຖະກິດທ້ອງຖິ່ນຈະໄດ້ຮັບການກະທົບ ແລະ ຄວາມເສຍຫາຍທັນທີ. ອີກດ້ານໜຶ່ງ, ເນື່ອງຈາກວ່າ ຈຳນວນນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມປະຈຳປີ

ແລະ ລາຄາສິ່ງອອກຂອງຢາງພາລາ ສາມາດປ່ຽນແປງໄດ້, ປັດໃຈດັ່ງກ່າວ ສ່ວນໃຫຍ່ແມ່ນເໜືອຄວາມສາມາດຂອງຊາວບ້ານ ທີ່ຈະຄວບຄຸມໄດ້. ມັນເປັນການດີທີ່ຈະຈຳກັດຄວາມສ່ຽງ ທີ່ມາຈາກປັດໃຈພາຍໃນ ແລະ ສາມາດຄວບຄຸມໄດ້ ເພື່ອເຮັດໃຫ້ທັງສອງອຸດສາຫະກຳນີ້ ໃຫ້ມີຄວາມສ່ຽງໜ້ອຍທີ່ສຸດ. ສຳລັບການທ່ອງທ່ຽວແບບອະນຸລັກ ມັນໝາຍຄວາມວ່າ ຊັບພະຍາກອນທີ່ໃຫ້ການສະໜັບສະໜູນແກ່ ການທ່ອງທ່ຽວແບບອະນຸລັກ ເຊັ່ນ: ປ່າໄມ້ທຳມະຊາດ, ສັດປ່າ ແລະ ວັດທະນະທຳຂອງປະຊາຊົນບັນດາເຜົ່າ, ແມ່ນຕ້ອງການຄວາມ ເອົາໃຈໃສ່ເປັນພິເສດ ໃນການປົກ ປັກຮັກສາຊັບພະຍາກອນດັ່ງກ່າວ. ສຳລັບຕົ້ນຢາງພາລາ, ມັນຈຳ ເປັນ ທີ່ອຳນາດການປົກຄອງແຂວງ ຕ້ອງຮັບປະກັນວ່າ ຊັບພະຍາກອນຕ່າງໆດ້ານເຕັກນິກ ແລະ ການຂະຫຍາຍເນື້ອທີ່, ແຮງງານ, ຜູ້ເຊົ່າທີ່ດິນ ແລະ ການຕົກລົງສັນຍາທີ່ເປັນທຳ ຈະສອດຄ່ອງກັນເພື່ອສ້າງຄວາມແນ່ນອນວ່າ ຕົ້ນຢາງພາລາຈະສ້າງລາຍໄດ້ ຫລື ຜົນປະໂຫຍດ ດັ່ງຊາວບ້ານ ແລະ ນັກລົງທຶນໄດ້ຄາດ ໝາຍໄວ້.

## ສະຫລຸບ

ປະສົບການຈາກແຂວງຫລວງນ້ຳທາ ສະແດງໃຫ້ເຫັນວ່າ ມັນເປັນໄປໄດ້ທີ່ຈະດຳເນີນກິດຈະກຳການທ່ອງທ່ຽວແບບອະນຸລັກ ແລະ ການປູກຕົ້ນຢາງພາລາ ໃນແຂວງດຽວກັນ, ແຕ່ບໍ່ແມ່ນໃນຂອບເຂດອັນດຽວກັນ. ການຈັດແບ່ງ ຫລື ການລະບຸ ເຂດໃດເປັນເຂດສຳລັບປູກຢາງພາລາ ແລະ ເຂດໃດເປັນເຂດສຳລັບກິດຈະກຳການທ່ອງທ່ຽວແບບອະນຸລັກ ຈຶ່ງເປັນບູລິມະສິດໜຶ່ງ ຂອງນັກວາງແຜນຂອງແຂວງ. ເນື່ອງຈາກວ່າ ປ່າໄມ້ໃນປ່າສະຫງວນນ້ຳຫ້າໄດ້ສ້າງລາຍໄດ້ ຜ່ານການບໍລິການທ່ອງທ່ຽວແບບອະນຸລັກ, ສະໜອງອາຫານ, ຢາປົວພະຍາດ, ຄວາມສົມດູນຂອງລະບົບນິເວດວິທະຍາ ແລະ ຍັງເປັນບ່ອນຮວບຮວມ ຊີວະນານາພັນ ທີ່ບໍ່ມີສິ່ງອື່ນໃດທີ່ຈະທົດແທນໄດ້, ຂໍ້ແນະນຳທີ່ສຳຄັນກໍ່ຄື ອຳນາດການປົກຄອງຂອງແຂວງຫລວງນ້ຳທາ ຕ້ອງຈັດຕັ້ງປະຕິບັດແຜນການໄລຍະຍາວ ໃນການ ຈັດແບ່ງເຂດ ເພື່ອຮັກສາຜົນປະໂຫຍດຂອງອຸດສະຫະກຳການທ່ອງທ່ຽວແບບອະນຸລັກ, ເຊິ່ງເປັນ ອຸດສາຫະກຳທີ່ສາມາດສ້າງລາຍຮັບໃຫ້ແຂວງ ແລະ ຈຳກັດ ການລິເລີ່ມປູກຢາງພາລາ ໃນຂອບເຂດ ປ່າສະຫງວນແຫ່ງຊາດນ້ຳຫ້າ. ຖ້າວ່າການຖາງປ່າ ເປັນການລ່ວງລ້ຳເຂົ້າປ່າສະຫງວນແຫ່ງຊາດ ນ້ຳຫ້າ ເພື່ອຕົ້ນປູກຢາງພາລາ ແລະ ກິດຈະກຳ ດັ່ງກ່າວ ຍັງດຳເນີນໄປຢ່າງບໍ່ມີການກວດສອບ, ແຂວງ ຫລວງນ້ຳທາ ຈະບໍ່ສາມາດ ຮັກສາການທ່ອງທ່ຽວ ແບບອະນຸລັກທີ່ກຳລັງເຕີບໃຫຍ່ ແລະ ສ້າງກຳໄລ ໃຫ້ແຂວງໄວ້ໄດ້, ພ້ອມກັນນັ້ນ ປະຊາຊົນອີກຫລາຍພັນຄົນທີ່ອາໄສຄວາມອຸດົມສົມບູນຂອງປ່າໄມ້ ໃນປ່າສະຫງວນ ແຫ່ງຊາດນ້ຳ ຫ້າ ເພື່ອການທ່ອງທ່ຽວແບບອະນຸລັກ, ອາຫານ ແລະ ຄວາມສົມດູນ ຂອງລະບົບນິເວດວິທະຍາ, ໃນອີກບໍ່ດົນອາດຈະສູນສິ້ນໝົດທຸກສິ່ງທຸກຢ່າງທີ່ພວກເຂົາມີ ຍ້ອນການ ຂະຫຍາຍ ຕົວທີ່ໜ້າເປັນຫ່ວງ ແລະ ບໍ່ແນ່ນອນ ຂອງທຸລະກິດຢາງພາລາຂອງແຂວງຫລວງນ້ຳທາ.

## ກ່ຽວກັບຜູ້ຂຽນ

ທ່ານ ສະຕີເວັນ ຊີປານີ (sschipa@hotmail.com) ຊ່ຽວຊານລະດັບສູງຂອງໂຄງການພັດທະນາການທ່ອງທ່ຽວລຸ່ມແມ່ນ້ຳຂອງ, ອົງການທ່ອງທ່ຽວແຫ່ງຊາດ - ຢູແນັດສໂກ (LNTA-UNESCO)

ໂຄງການທ່ອງທ່ຽວອະນຸລັກນ້ຳຫ້າ. ເອກະສານສະບັບນີ້ ໄດ້ຖືກນຳສະເໜີຄັ້ງທຳອິດ ໃນກອງປະຊຸມສຳມະນາຂອງ NAFRI, NAFES, NUOL ກ່ຽວກັບການພັດທະນາ ການເຮັດສວນຕົ້ນຢາງພາລາຂະໜາດນ້ອຍ ໃນ ສປປ ລາວ (9 -11 ພຶດສະພາ 2006). ບົດສະຫລຸບຫຍໍ້ຂອງກອງປະຊຸມສຳມະນາ ແລະ ເອກະສານອື່ນໆທີ່ໄດ້ຮັບການນຳສະເໜີໃນກອງປະຊຸມສຳມະນາດັ່ງກ່າວ ສາມາດຊອກອ່ານໄດ້ໃນເວັບໄຊ www.nafri.org.la

## ເອກະສານອ້າງອີງ


ADB. 2005. *The Greater Mekong Subregion Tourism Sector Strategy*. Asian Development Bank. Manila.

Allcock, A. 2004. *National Tourism Strategy for Lao PDR: 2005 to 2015* (final draft). Lao National Tourism Administration. Vientiane.

Alton, C., Bluhm, D. & Sananikone, S. 2005. *Para Rubber Study* Hevea brasiliensis *Lao PDR*. GTZ Rural Development in Mountainous Areas Programme. Lao-German Technical Cooperation. Muang Sing.

Bouttavong, S., Emerton, L., Kettavong, L., Manivong, S. & Sivannavong, S. 2002. *Lao PDR Biodiversity: Economic Assessment*. IUCN. Vientiane.

Goodwin, H, Kent, I, Parket, K & Walpole, M. 1998. *Tourism, Conservation and Sustainable Development*. International Institute of Environment and Development.London.

Government of the Lao PDR (GoL). 1996. *National Forestry Law No. 01-96*. Ministry of Agriculture and Forestry. Vientiane.

GoL. 2003. *National Growth and Poverty Eradication Strategy*. Vientiane.

GoL. 2003. *National Biodiversity Conservation Area Decree 164*. Prime Minister’s Office. Vientiane.

Hedemark, M. & Vongsak, U. 2003. *Wildlife Survey of the Nam Ha NPA*. Wildlife Conservation Society Lao Programme. Vientiane.

Jamieson, W. 2003. *Poverty Alleviation through Sustainable Tourism Development*. ESCAP. New York.

LNTA. 2005a. *Annual Statistics Report*. Lao National Tourism Administration. Vientiane.

LNTA. 2005b. *Mekong Tourism Development Project, Part B, Pro-Poor Community-Based Tourism Component. Annual report: provincial, village and household monitoring data*. Lao National Tourism Administration. Vientiane.

LNTA 2005c. *National Ecotourism Strategy and Action Plan 2005 – 2010*. Lao National Tourism Administration. Vientiane.

Lyttleton, C. & Allcock, A. 2002. *Tourism as a Tool for Development*. The UNESCO-National Tourism Authority of the Lao PDR Nam Ha Ecotourism Project. External Review.

UNESCO Office of the Regional Advisor for Culture in Asia and the Pacific. Bangkok.

Nam Ha NPA Management Unit & WCS Lao Programme. 2004. *Nam Ha National Protected Area 2003 – 2010 Management Plan* (draft version 6b). Wildlife Conservation Society Lao Programme. Vientiane.

Schipani, S. 2005. *The Nam Ha Ecoguide Service in Luang Namtha: Organizational Structure and Direct Financial Benefits Generated by Community-Based Tours in Luang Namtha, Lao PDR*. UNESCO Office of the Regional Advisor for Culture in Asia and the Pacific. Bangkok.

Schipani, S & Marris, G. 2002. *Linking Conservation and Ecotourism Development: Lessons from the UNESCO-National Tourism Authority of Lao PDR Nam Ha Ecotourism Project*. UNESCO Office of the Regional Advisor for Culture in Asia and the Pacific. Bangkok.

Schipani, S & Pakasy, S. 2000. *An Assessment of International Tourists in Luang Namtha, Lao PDR*. UNESCO Office of the Regional Advisor for Culture in Asia and the Pacific. Bangkok.

Tizard, R. 1997. *A Wildlife and Habitat Survey of Nam Ha and Nam Kong Protected Areas, Luang Namtha Province, Lao PDR*. CPAWM-WCS Cooperative Programme: Department of Forestry, MAF. Vientiane.

UNESCO. 1998. *Nam Ha Ecotourism: Integrated Planning for Culturally and Ecologically Sustainable Tourism Development through District and Local Community Management*. UNESCO Office of the Regional Advisor for Culture in Asia and the Pacific. Bangkok.

Vieng Phoukha Department of Forestry. 2006. Personal interview. 8 April.

# ການຕອບຮັບກັບບັນຫາຄົນລາວອາຍຸຕໍ່າກ່ວາ 18 ປີທີ່ເຮັດວຽກຢູ່ໃນປະເທດໄທ

ໂດຍ: Roy Huijsmans

*ໄດ້ມີບົດຄົ້ນຄ້ວາຫລາຍໆບົດ ທີ່ຂຽນແລ້ວທີ່ຜ່ານມາບໍ່ດົນມານີ້ໄດ້ສັງເກດເຖິງຕົວເລກທີ່ເພີ່ມຂຶ້ນຂອງຄົນ ລາວທີ່ອາຍຸຕໍ່າກ່ວາ 18 ປີທີ່ເຮັດວຽກຢູ່ປະເທດໄທ. ໂດຍກົດໝາຍແລ້ວ, ພວກເຂົາອາດຖືກຖືວ່າເປັນເຫຍື່ອ ຂອງການຄ້າມະນຸດ. ເອກະສານສະບັບນີ້ ໄດ້ສັງເກດວ່າ ບັນດາໄວໜຸ່ມທີ່ອາຍຸສູງແຕ່ຍັງໃນເກນ ຕໍ່າກ່ວາ 18 ປີ ອາດກຳລັງສະແຫວງຫາ ແລະ ອາດມີວຽກເຮັດງານທຳທີ່ຖືກກົດໝາຍ. ດັ່ງນັ້ນ, ປະກົດການການຍ້າຍຖິ່ນຂອງຄົນລາວທີ່ອາຍຸຍັງນ້ອຍເຫລົ່ານີ້ອາດຈະຖືກເບິ່ງ ແລະ ວິເຄາະຜ່ານມຸມ ມອງທີ່ແຕກຕ່າງກັນ, ເຊິ່ງກໍ່ລວມມີມຸມມອງທີ່ຖືເອົາສິດທິ ເປັນພື້ນຖານໂດຍການຮັບຟັງຄວາມ ຄິດເຫັນຂອງເດັກເຫລົ່ານັ້ນ ແລ້ວເອົາມາພິຈາລະນາ. ຜູ້ຂຽນເອກະສານສະບັບນີ້ໄດ້ສົນທະນາກ່ຽວກັບສາມແງ່ມຸມ ທີ່ແຕກຕ່າງກັນທີ່ສະທ້ອນເຖິງວິທີແກ້ໄຂບັນຫາຂອງເດັກນ້ອຍ ແລະ ໄວໜຸ່ມໃນການພັດທະນາ. ຜູ້ຂຽນໄດ້ສະ ເໜີແນວແນວຄວາມຄິດທີ່ສຳຄັນກ່ຽວກັບຊີວິດໄວເດັກ ແລະ ເຊື່ອມໂຍງແນວຄວາມຄິດເຫລົ່ານັ້ນ ເຂົ້າກັບຄວາມເຫັນຕ່າງໆກ່ຽວກັບບັນຫາເດັກນ້ອຍລາວທີ່ເຮັດວຽກຢູ່ໃນປະເທດໄທ.*

ນັບຕັ້ງແຕ່ການນຳໃຊ້ກົນໄກເສດຖະກິດແບບໃໝ່ໃນທ້າຍຊຸມປີ 1980, ສປປ ລາວ ໄດ້ຄ່ອຍໆນຳໃຊ້ນະໂຍບາຍເສດຖະກິດ-ການເມືອງທີ່ແຕກຕ່າງຈາກແຕ່ກ່ອນຫລາຍ. ຖ້າຈະເວົ້າໃນສັບພາສາຂອງເສດຖະສາດແລ້ວ, ສິ່ງດັ່ງກ່າວໝາຍເຖິງການກ້າວອອກຢ່າງຊ້າໆ ຈາກລະບົບເສດຖະກິດທີ່ມີລັດເປັນຜູ້ຄຸ້ມຄອງໂດຍກົງ ໄປສູ່ລະບົບເສດຖະກິດແບບຕະຫລາດ. ໃນທາງການເມືອງ, ການລົ້ມສະຫລາຍຂອງບັນດາລັດທີ່ປົກຄອງ ແບບລະບອບຄອມມຸຍນິດໄດ້ກໍ່ໃຫ້ເກີດມີການຫັນປ່ຽນຈາກການລະບົບທີ່ເອື່ອຍອີງໃສ່ “ຄ້າຍສັງຄົມນິຍົມ” ເກົ່າ ພຽງແຕ່ຢ່າງດຽວ ໄປສູ່ການມີສ່ວນຮ່ວມ ທີ່ເພີ່ມຂຶ້ນ ທາງດ້ານການເມືອງໃນເຂດພູມິພາກ.

ຜົນກະທົບຂອງການປ່ຽນແປງນີ້ບໍ່ພຽງແຕ່ສິ່ງຜົນກະທົບໃສ່ແວດວົງທາງດ້ານເສດຖະດິດ ແລະ ການເມືອງເທົ່ານັ້ນ, ແຕ່ມັນຍັງໄດ້ກະທົບໄປຮອດຊີວິດການເປັນຢູ່ ທາງສັງຄົມ ແລະ ວັດທະນະທຳຂອງປະຊາຊົນລາວນຳອີກ. ເຖິງຢ່າງໃດກໍ່ຕາມ, ມັນຄວນເປັນທີ່ເຂົ້າໃຈວ່າ ລະດັບການປ່ຽນແປງທີ່ເກີດຈາກການນຳໃຊ້ກົນໄກ ເສດຖະກິດແບບໃໝ່ນັ້ນແມ່ນແຕກຕ່າງກັນຫລາຍ ລະຫວ່າງທ້ອງຖິ່ນຕ່າງໆພາຍໃນປະເທດ, ແລະ ຍັງສິ່ງຜົນກະທົບຕໍ່ກຸ່ມຄົນໃນສັງຄົມທີ່ແຕກຕ່າງກັນໃນຫລາຍໆຮູບແບບ ຢູ່ພາຍໃນທ້ອງຖິ່ນເອງ. ໃນທາງພູມສາດ, ຜົນກະທົບຂອງການຫັນປ່ຽນນະໂຍບາຍນີ້ອາດຈະເຫັນໄດ້ຢ່າງຈະແຈ້ງ ຢູ່ບ່ອນທີ່ມີການປ່ຽນແປງຢູ່ຕະຫລອດເວລາ, ເຊັ່ນ ເມືອງໃຫຍ່, ຕົວເມືອງ ຕ່າງໆ, ເຂດຊາຍແດນ ແລະ ຈຸດຂ້າມຊາຍແດນ, ພ້ອມທັງເຂດອື່ນໆທີ່ລົດລາງພະຫະນະ

ຫາກໍ່ເຂົ້າໄປເຖິງພາຍຫລັງການກໍ່ສ້າງທຶນທາງສຳເລັດ. ຕໍ່ກັບກຸ່ມສັງຄົມ, ໄດ້ມີເອກະສານຫລາຍ ບົດກ່າວເຖິງວິທີ ແລະ ຮູບແບບທີ່ກຸ່ມເສດຖະກິດ-ສັງຄົມທີ່ແຕກຕ່າງກັນໄດ້ຮັບຜົນກະທົບຈາກການ ປ່ຽນແປງ ແລະ ແຕ່ລະ ກຸ່ມໄດ້ມີການພັດທະນາປ່ຽນແປງໄປແນວໃດ. ເຖິງຢ່າງໃດກໍ່ຕາມ, ບົດຂຽນ ເຫລົ່ານັ້ນຍັງ ບໍ່ໄດ້ມີການເນັ້ນໜັກໃສ່ຮຸ້ນຄົນຕ່າງໆ ທີ່ນອນຢູ່ໃນປະເພດເສດຖະກິດ-ສັງຄົມ.

ເອກະສານສະບັບນີ້ສ້າງຂຶ້ນບົນຂໍ້ສະເໜີທີ່ວ່າຮຸ້ນຄົນ ທີ່ແຕກຕ່າງກັນໄດ້ປະສົບກັບການປ່ຽນແປງ ທີ່ຫາກໍ່ເກີດຂຶ້ນນີ້ ໃນຮູບແບບທີ່ຂ້ອນຂ້າງແຕກຕ່າງກັນ. ກ່ຽວເນື່ອງກັນນັ້ນ, ເອກະສານສະບັບນີ້ຈະ ເນັ້ນໜັກໃສ່ບົດບາດ ແລະ ຈຸດຢືນຂອງເດັກນ້ອຍ ແລະ ຂອງຄົນໄວໜຸ່ມສາວ ໃນການພັດທະນາ ໂດຍເຈາະຈົງໃສ່ຫົວຂໍ້ສະເພາະທີ່ກ່ຽວເນື່ອງກັບການພັດທະນາ: ການເຄື່ອນຍ້າຍຂອງແຮງງານ ແລະ ການຄ້າມະນຸດ. ການທີ່ຈະເຈາະຈົງແບບສະເພາະໃສ່ເດັກ ນ້ອຍ ແລະ ໜຸ່ມ ສາວໃນຮຸ້ນຄົນສະໄໝ ນີ້ແມ່ນສົມເຫດສົມຜົນ ຍ້ອນວ່າ ພວກເຂົາໄດ້ ເຕີບໂຕຂຶ້ນພາຍໃຕ້ສະພາບຄວາມເປັນຈິງ ດ້ານການ ເມືອງ ແລະ ເສດຖະກິດທີ່ແຕກຕ່າງ, ແລະ ສິ່ງນີ້ເຮັດໃຫ້ພວກເຂົາມີຄວາມຄິດເຫັນ ຕໍ່ໂລກແຕກຕ່າງ ກັບຜູ້ເປັນພໍ່ແມ່ຂອງຂອງພວກເຂົາ. ສິ່ງນີ້ໄດ້ສະເໜີແນະວ່າ ຄວາມແຕກຕ່າງ ທີ່ສັງເກດເຫັນ ໄດ້ໃນຮູບແບບການດຳລົງ ຊີວິດລະຫວ່າງໄວໜຸ່ມໃນຮຸ້ນນີ້ ແລະ ພໍ່ແມ່ ແລະ ພໍ່ເຖົ້າແມ່ເຖົ້າຂອງ ພວກເຂົານັ້ນ, ມີພຽງແຕ່ພາກສ່ວນໜຶ່ງທີ່ເກີດຂຶ້ນຍ້ອນພວກເຂົາມີວິງວຽນຊີວິດໃນລຸ້ນສະໄໝທີ່ແຕກ ຕ່າງກັນ. ອາດເວົ້າໄດ້ວ່າຄວາມແຕກຕ່າງລະຫວ່າງຮຸ້ນຄົນເຫລົ່ານັ້ນ ສະແດງໃຫ້ ເຫັນເຖິງບາງຢ່າງທີ່ ກ່ຽວກັບການປ່ຽນແປງຮູບແບບໂຄງສ້າງຂອງການດຳລົງຊີວິດ ແລະ ສັງຄົມໃນ ສປປ ລາວ.

---

## *ຕົວເລກທີ່ເພີ່ມຂຶ້ນຂອງ 'ເດັກນ້ອຍ' ລາວທີ່ເຮັດວຽກດ້ວຍຄວາມເຕັມໃຈ ຫລື ບໍ່ເຕັມໃຈ ຢູ່ປະເທດໄທ*

---

ຈຸດເລີ່ມຂອງເອກະສານສະບັບນີ້ ແມ່ນການສັງເກດການຕົວເລກ ທີ່ເພີ່ມຂຶ້ນຂອງ'ເດັກນ້ອຍ' ລາວທີ່ເຮັດວຽກໃນໄລຍະໜຶ່ງດ້ວຍຄວາມເຕັມໃຈ  ຫລື ບໍ່ເຕັມໃຈ ຢູ່ປະເທດໄທ. ຄຳວ່າເດັກນ້ອຍ ໄດ້ຖືກຂຽນໃນວົງຢືມໄວ້ຍ້ອນ ຄົນເຫລົ່ານັ້ນໂດຍທົ່ວໄປ ແລ້ວແມ່ນເດັກໄວໜຸ່ມສາວ, ດັ່ງນັ້ນ ຄຳວ່າ 'ໄວລຸ້ນ' ຫລື 'ເດັກທີ່ອາຍຸຕ່ຳກ່ວາ 18 ປີ' ອາດຈະ ເປັນຄຳທີ່ເໝາະສົມກ່ວາ ເຖິງແມ່ນວ່າຕາມ ກົດໝາຍຂອງລາວ ແລະ ສາກົນແລ້ວ ຜູ້ໃດກໍ່ຕາມທີ່ອາຍຸຕ່ຳ ກ່ວາ 18 ປີແມ່ນຖືວ່າເປັນເດັກນ້ອຍ. ປະກົດການທີ່ໄວລຸ້ນລາວອາຍຸຕ່ຳກ່ວາ 18 ປີໄປເຮັດວຽກຢູ່ປະເທດໄທ, ຕາມຫລັກວິຊາ ການແລ້ວ ສາມາດສະແດງເຖິງ'ການອົບພະຍົບຂອງແຮງງານເດັກ'ແລະ ກໍ່ເປັນບັນຫາ ລະອຽດອ່ອນ ແລະ ຊັບຊ້ອນຫລາຍ ແຕ່ບໍ່ແມ່ນຍ້ອນຄວາມກ້ຳກຶ່ງ ແລະ ຄວາມບໍ່ຊັດເຈນລະຫວ່າງຫົວຂໍ້ນີ້ ແລະ ບັນຫາ 'ການຄ້າມະນຸດ' ແມ້ແຕ່ໜ້ອຍເລີຍ. ຄວາມຈິງແລ້ວ, ເອກະສານສະບັບນີ້ມີຈຸດປະສົງ ທີ່ຈະຍົກເອົາ ບັນຫາທີ່ລະອຽດອ່ອນກ່ຽວກັບ'ການອົບພະຍົບຂອງແຮງງານເດັກ' ແລະ 'ການຄ້າມະນຸດ' ນີ້ຂຶ້ນມາ ປຶກສາຫາລືຢ່າງລະມັດລະວັງ ໃນຮູບແບບ ສະເພາະທີ່ປະກົດການນີ້ໄດ້ຮັບການແກ້ໄຂໃນ ສປປ

ລາວ. ບົດຂຽນນີ້ໂຕ້ແຍ້ງວ່າຫົນທາງທີ່ແຕກຕ່າງກັນໃນການແກ້ໄຂບັນຫາ ການຄ້າມະນຸດ ແລະ ບັນຫາໄວໜຸ່ມໄປເປັນແຮງງານຢູ່ຕ່າງປະເທດ ແມ່ນຂຶ້ນກັບມຸມມອງແນວຄິດກ່ຽວກັບຈຸດຢືນ ຂອງໄວລຸ້ນ ແລະ ເດັກນ້ອຍ ໃນການພັດທະນາ. ຈຸດຢືນເຫລົ່ານີ້ເກີດຈາກແນວຄວາມຄິດ ທີ່ເຊື່ອງຊ້ອນຢູ່ກັບບັນດາເດັກນ້ອຍ ແລະ ຊີວິດໃນໄວເດັກ ເຊິ່ງ ບໍ່ອາດຈະສະແດງອອກມາ ໃຫ້ເຫັນໄດ້ຢ່າງຈະແຈ້ງ. ໃນການທີ່ຍົກແນວຄວາມຄິດເຫລົ່ານີ້ ຂຶ້ນມາສົນທະນາ, ບົດຂຽນນີ້ມີຈຸດປະສົງ ທີ່ຈະເປີດຊ່ອງທາງສຳລັບການແກ້ໄຂບັນຫາທ້າທາຍ ທີ່ຫຍຸ້ງຍາກຂອງ ການພັດທະນາທີ່ກ່ຽວເນື່ອງກັບໄວໜຸ່ມ.

## ເດັກນ້ອຍລາວທີ່ເຮັດວຽກຢູ່ໃນປະເທດໄທ: ຕົວເລກທີ່ບໍ່ແນ່ນອນ, ການຕອບຮັບບັນຫາທີ່ຊັດເຈນ

ພາຍຫລັງທີ່ເຫີນຫ່າງຈາກປະເທດໄທໃນລະຫວ່າງປີ 1975 ແລະ ທ້າຍຊຸມປີ 1980, ປະ ເທດລາວໄດ້ຄ່ອຍໆເປີດຊາຍແດນຕ້ອນຮັບປະເທດເພື່ອນບ້ານຢູ່ດ້ານຕາເວັນຕົກ. ສິ່ງນີ້ເປັນຜົນໃຫ້ເກີດມີການເພີ່ມຂຶ້ນຢ່າງໄວວາຂອງການຈໍລະຈອນຂອງສິນຄ້າ ແລະ ສັນຈອນໄປມາຂອງປະຊາກອນລະຫວ່າງສອງປະເທດ. ການປ່ຽນແປງເຫລົ່ານີ້ບໍ່ຄວນຖືກປະເມີນທາງດ້ານ ປະລິມານຢ່າງດຽວເທົ່ານັ້ນ. ການອົບພະຍົບເຄື່ອນຍ້າຍຂອງປະຊາກອນທີ່ເກີດ ຂຶ້ນໃນປະຈຸບັນຈາກປະເທດລາວໄປສູ່ປະເທດໄທ ໃນປະຈຸບັນ ຄວນຖືກເບິ່ງຜ່ານການຄົ້ນຄ້ວາແບບຄຸນະພາບແທນທີ່ຈະເບິ່ງເປັນການກະທຳທີ່ຜິດກົດໝາຍ, ຍ້ອນວ່າປະກົດການເຄື່ອນຍ້າຍ ໃນປະຈຸບັນນີ້ເກີດຂຶ້ນໃນເຂດເສດຖະກິດ-ການເມືອງທີ່ແຕກ ຕ່າງກັນຢ່າງສິ້ນເຊີງ.

### ຕົວເລກທີ່ບໍ່ແນ່ນອນ

ຕົວເລກຂອງຜູ້ອົບພະຍົບຄົນລາວທີ່ເຮັດວຽກຢູ່ໃນປະເທດໄທຄວນໄດ້ຮັບການພິຈາລະນາ ແລະ ນຳໃຊ້ຢ່າງລະມັດລະວັງທີ່ສຸດ. ຄົນສ່ວນໃຫຍ່ໃນກຸ່ມຄົນເຫລົ່ານັ້ນເຂົ້າປະເທດໄທຢ່າງຜິດກົດ ໝາຍ ຫລື ຢູ່ກາຍກຳນົດທີ່ປື້ມຜ່ານແດນໄດ້ອະນຸຍາດ (ທຳມະວົງສາ, 2006) ດັ່ງນັ້ນລາຍ ຊື່ຂອງເຂົາເຈົ້າຈຶ່ງບໍ່ ຖືກລວມເຂົ້າຢູ່ໃນຕົວເລກທາງການ. ການປະເມີນຕົວເລກທີ່ແທ້ຈິງຈາກ ຫລາຍໆຝ່າຍແມ່ນມີຄວາມແຕກຕ່າງກັນຫລາຍ, ທາງການໄທປະເມີນວ່າມີ100,000 ຄົນ ສ່ວນ ອີງການບໍ່ຂຶ້ນກັບລັດຖະບານໄດ້ປະເມີນໄວ້ເຖິງ 300,000 ຄົນ (SCUK et al, 2004). ເຖິງຈະມີຕົວເລກທີ່ແຕກຕ່າງກັນ,ແຕ່ຫລາຍຝ່າຍຕ່າງກໍ່ເຫັນດີເຖິງປະເພດ ຂອງແຮງງານອົບພະຍົບ. ຄ້າຍຄືກັບການເຄື່ອນຍ້າຍຂອງປະຊາກອນຢູ່ຫລາຍໆຂົງເຂດໃນໂລກ, ຄົນ ລາວທີ່ເຮັດ ວຽກຢູ່ໃນປະເທດໄທສ່ວນໃຫຍ່ແລ້ວແມ່ນໄວໜຸ່ມສາວ. ຖ້າຈະເວົ້າແບບເຈາະຈົງກ່ວານັ້ນ, ສ່ວນ ໃຫຍ່ໃນກຸ່ມໄວໜຸ່ມຫລົ່ານັ້ນມີອາຍຸຕ່ຳກວ່າ 18 ປີ, ແລະ ກໍ່ຍັງເປັນເດັກນ້ອຍຖ້າ ອີງຕາມກົດ ໝາຍຂອງລາວ ແລະ ສາກົນ.

ຂໍ້ມູນກ່ຽວກັບການ ເຄື່ອນ ຍ້າຍຂອງແຮງງານຈາກ ສປປ ລາວທີ່ໄດ້ຈາກການສຳຫລວດການເຄື່ອນຍ້າຍຂອງແຮງງານ ປີ 2003 ເປັນຂໍ້ມູນທີ່ພໍເຊື່ອຖືໄດ້ໃນເວລານີ້ ແລະ ເປັນຂໍ້ມູນທີ່ໄດ້ສຳຫລວດຢູ່ ສາມ ແຂວງຄື: ຈຳປາສັກ, ຄຳມ່ວນ ແລະ ສະຫວັນນະເຂດ. ອີງຕາມຜົນການ

ສຳຫລວດ, 6.9% ຂອງຄົວເຮືອນທີ່ເປັນຕົວຢ່າງໃນການຄົ້ນຄ້ວາຈຳນວນ 5,966 ຄົວເຮືອນ (36,398 ຄົນ) ທີ່ໄດ້ສຳພາດ ແມ່ນໄປເຮັດວຽກຢູ່ປະເທດ ໄທເປັນສ່ວນຫລາຍ. ອັດຕາການອົບພະຍົບອອກນອກປະເທດຂອງກຸ່ມຜູ້ຍິງ (7.6%) ຈະສູງກ່ວາກຸ່ມຜູ້ຊາຍ (6.2%) ເລັກນ້ອຍ, ແລະ 21.4% ຂອງຜູ້ທີ່ອົບພະຍົບທັງຫມົດແມ່ນມີອາຍຸຕ່ຳກ່ວາ 18 ປີ. ໃນກຸ່ມຜູ້ທີ່ ອາຍຸຕ່ຳກ່ວາ 18 ປີນີ້, ຄວາມແຕກຕ່າງລະຫວ່າງເພດແມ່ນຂ້ອນຂ້າງຫລຸດ ໂຕນກັນຫລາຍ: 15.6% ແມ່ນເພດຊາຍ ແລະ 25.4% ເພດຍິງ (MoLSW and ILOIPEC/TICW 2003).

<u>ຮູບສະແດງ 1: ແຮງງານເຄື່ອນຍ້າຍໄປຕ່າງປະເທດ ຈັດຕາມອາຍຸ ແລະ ເພດ (ຈຳປາສັກ, ຄຳ ມ່ວນ ແລະ ສະຫວັນນະເຂດ)</u>




*ແຫລ່ງຂໍ້ມູນ: ດັດປັບມາຈາກ MoLSW and ILOIPEC/TICW 2003, ຕາຕະລາງ 27.*

ຮູບສະແດງ 1 ສະແດງໃຫ້ເຫັນພາບຂອງການເຄື່ອນຍ້າຍຂອງກຸ່ມຄົນ ທີ່ອາຍຸຍັງນ້ອຍ, ເຊິ່ງຜູ້ ເຄື່ອນຍ້າຍ ສ່ວນໃຫຍ່ມີອາຍຸລະຫວ່າງ 18 ແລະ 25 ປີ, ແລະ ກໍ່ມີກຸ່ມທີ່ນອນໃນກຸ່ມ ອາຍຸ 15-17 ປີກວມເປັນອັດຕາສ່ວນຫລາຍເຊັ່ນກັນ ເຊິ່ງຕາມຫລັກວິຊາການແລ້ວກຸ່ມນີ້ແມ່ນເດັກນ້ອຍ. ຕົວເລກຍັງໄດ້ສະແດງໃຫ້ເຫັນຕື່ມວ່າ ເດັກອົບພະຍົບຈຳນວນຫນ້ອຍຫນຶ່ງມີອາຍຸຕ່ຳກ່ວາ 10 ປີ, ຫລື ໃນກໍລະນີທີ່ເປັນເດັກເພດຊາຍ, ພວກເຂົາມີອາຍຸຕ່ຳກ່ວາ 15 ປີ. ຕົວເລກທີ່ຕ່ຳຂອງ ຜູ້ອົບພະຍົບທີ່ມີອາຍຸນ້ອຍຫລາຍ ແລະ ການເພີ່ມຂຶ້ນທີ່ໄວວາຂອງຂອງຜູ້ອົບພະຍົບທີ່ເປັນໄວລຸ້ນ ບອກໃຫ້ຮູ້ວ່າກຸ່ມເຄື່ອນຍ້າຍທີ່ມີອາຍຸນ້ອຍ ຫລາຍ ຄວນຖືກເບິ່ງເປັນສ່ວນຫນຶ່ງຂອງການຕິດຕາມໄປນຳຄອບຄົວ, ໃນຂະນະທີ່ ຜູ້ອົບພະຍົບທີ່ເປັນໄວໜຸ່ມ ອາດຈະເປັນ 'ການເຄື່ອນຍ້າຍດ້ວຍຕົນເອງ'. ຮູບສະແດງ 1 ສະເຫນີໃຫ້ພວກເຮົາ ຮູ້ເຖິງການພົວພັນສະນິດແໜ້ນລະຫວ່າງອາຍຸ ແລະ ເພດ: ຜູ້ເຄື່ອນຍ້າຍໄວໜຸ່ມມັກຈະແມ່ນຜູ້ຍິງ.

## ການຕອບຮັບບັນຫາທີ່ຊັດເຈນ

ໃນຂະນະທີ່ຜູ້ອົບພະຍົບຄົນລາວສ່ວນໃຫຍ່ ໄດ້ຕົກຢູ່ໃນລະຫວ່າງຄວາມກຳກຶ່ງທີ່ບໍ່ຊັດເຈນວ່າພວກເຂົາເປັນເດັກນ້ອຍ ຫລື ຜູ້ໃຫຍ່, ນະໂຍບາຍທີ່ຕອບຮັບກັບບັນຫາໄດ້ຂີດເສັ້ນແບ່ງທີ່ຊັດເຈນລະຫວ່າງເດັກນ້ອຍ ແລະ ຜູ້ໃຫຍ່ ໂດຍອີງໃສ່ຂໍ້ກົດລະບຽບຂອງສາກົນ ກ່ຽວກັບເກນອາຍຸ 18 ປີ. ຜົນຕາມມາກໍ່ຄື, ໃນຂະນະທີ່ປະສົບການຂອງແຮງງານລາວອາຍຸ 17 ປີ ແລະ ຂອງຜູ້ທີ່ອາຍຸ19 ປີທີ່ເຮັດວຽກຢູ່ໃນປະເທດໄທ ອາດຈະບໍ່ແຕກຕ່າງກັນຫລາຍປານໃດ, ແຕ່ສະຖານະການຂອງເຂົາເຈົ້າອາດ ຈະໄດ້ຮັບການ ແກ້ໄຂ ດ້ວຍນະໂຍບາຍທີ່ແຕກຕ່າງກັນຫລາຍ. ລາວ ແລະ ໄທ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍ 'ການຮ່ວມມືທາງດ້ານການຈ້າງງານ' ໃນປີ 2002 (Muntarbhorn, 2005), ແລະ ຫນັງສືພິມຫລາຍສະບັບກໍ່ໄດ້ສືບຕໍ່ກ່າວເຖິງການຂາດເຂີນແຮງງານໃນປະເທດໄທນັ້ນຈະຖືກແກ້ໄຂດ້ວຍການເອົາແຮງງານລາວໄປທົດແທນ (Vientiane Times 2005; 2006). ເຖິງຢ່າງໃດກໍ່ຕາມ, ມັນຕ້ອງເປັນທີ່ຮັບຮູ້ວ່າທ່າອ່ຽງທີ່ເປັນໄປເພື່ອລະກ້າວ ກ່ຽວກັບ ການຍອມຮັບ, ການອຳນວຍຄວາມສະດວກ ແລະ ການປົກປ້ອງແຮງງານຕ່າງດ້າວ ມີທ່າວ່າຈະແມ່ນຜູ້ໃຫຍ່ເປັນສ່ວນໃຫຍ່ ເປັນຜູ້ໄດ້ ຊົມໃຊ້, ໂດຍສະເພາະແມ່ນຜູ້ໃຫຍ່ເພດຊາຍ. ສິ່ງນີ້ເປັນການ ສະແດງໃຫ້ເຫັນເຖິງຄວາມລຳອຽງດ້ານ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຮຸ່ນຄົນ. ໃນເວລາດຽວກັນ, ໄດ້ມີຄຳຖະແຫລງຕ້ານການຄ້າມະນຸດຢ່າງຫນັກແຫນ້ນ, ຄຳຖະແຫລງທີ່ມີພະລັງອັນຫນັກແຫນ້ນທີ່ສຸດກໍ່ແມ່ນຢູ່ໃນເນື້ອໃນຂອງບົດບັນທຶກ ຄວາມເຂົ້າໃຈ ລະຫວ່າງລາວ ແລະ ໄທ ໃນ ປີ 2005 (Muntarbhorn, 2005). ກົງກັນຂ້າມກັບມາດຕະການປະຕິບັດພາຍຫລັງການເຊັນບົດບັດທຶກຄວາມເຂົ້າໃຈວ່າດ້ວຍ'ການຮ່ວມມືທາງດ້ານການຈ້າງງານ', ມາດຕາການຕໍ່ສູ້ຕ້ານການຄ້າມະນຸດໄດ້ເຈາະຈົງໃສ່ການຄ້າເດັກນ້ອຍ ແລະ ແມ່ຍິງ.

## ແຮງງານຕ່າງດ້າວ, ເດັກນ້ອຍ ແລະ ການພັດທະນາ

ການສົນທະນາໃນທີ່ນີ້ ແນໃສ່ທີ່ຈະກ້າວຫ່າງອອກຈາກການນຳສະເຫນີຂອງຮູບແບບຕ່າງໆຂອງແຮງງານອົບພະຍົບ ເຊິ່ງມັກຈະຖືກແບ່ງແຍກອອກເປັນພຽງສອງປັດໄຈຄື ເດັກນ້ອຍ ແລະ ຜູ້ໃຫຍ່, ແລະ ນັ້ນກໍ່ເປັນການນຳສະເຫນີແບບຄົງທີ່, ບໍ່ມີການປ່ຽນແປງ, ງ່າຍດາຍ ແລະ ບໍ່ຖືກຕ້ອງ (O'ConnellDavidson, 2005). ການສົນທະນາຈະດຳເນີນໄປໂດຍທີ່ຈະທຳການກວດ ສອບພິຈາລະນາທາງ ເລືອກສາມທາງທີ່ການອົບພະຍົບຂອງແຮງງານ ແລະ/ຫລື ການຄ້າມະນຸດໄດ້ຮັບການແກ້ໄຂໃນລາວ. ເອກະສານນີ້ໄດ້ໂຕ້ແຍ້ງວ່າ ວິທີແກ້ໄຂທີ່ແຕກຕ່າງກັນນີ້ບໍ່ໄດ້ເປັນພຽງແຕ່ວິທີທີ່ແຕກຕ່າງກັນໃນການຮັບມືກັບປະກົດການທີ່ຄ້າຍຄືກັນ, ແຕ່ບັນດາວິທີການ ເຫລົ່ານີ້ສ້າງຂຶ້ນບົນ ຄວາມຄິດເຫັນ ອັນຫລາກຫລາຍຕາມຈຸດຢືນຂອງເດັກນ້ອຍ ແລະ ໄວລຸ້ນໃນຂັ້ນຕອນການພັດທະນາໃນປະເທດ. ສະນັ້ນ, ຄວາມຫມາຍຂອງ ແຕ່ລະມຸມມອງ ແມ່ນມີຫລາຍ ຢ່າງ ແລະ ຫລາຍມິຕິ, ແຕ່ວ່າອັນທີ່ສຳຄັນທີ່ສຸດແມ່ນອັນທີ່ກ່ຽວຂ້ອງ ແລະ ເນັ້ນຫນັກໃສ່ເດັກ ນ້ອຍ. ໃນການໂຕ້ແຍ້ງນັ້ນ, ເອກະສານນີ້ໄດ້ຄຳນຶງເຖິງຄຳຖາມທີ່ສຳຄັນເຊັ່ນ ຊີວິດໄວເດັກ/ຄວາມເປັນເດັກນ້ອຍແມ່ນຫຍັງ? ຊີວິດໄວເດັກທີ່ດີແມ່ນແນວໃດ? ຄວາມເປັນຜູ້ໃຫຍ່ແມ່ນຫຍັງ? ເມື່ອໃດທີ່ຄົນຜູ້ຫນຶ່ງຈະບໍ່ເປັນເດັກນ້ອຍອີກຕໍ່ໄປ? ຄຳຖາມ ເຫລົ່ານີ້ຈະບໍ່ໄດ້ຖືກນຳມາຄົ້ນຄ້ວາຢ່າງລະອຽດ

ໃນທີ່ນີ້ ແຕ່ການຄຳນຶງ ເຖິງພວກມັນ ຄວນຢູ່ຕິດພັນຢ່າງສະໜິດແໜ້ນໃນທຸກໆການແກ້ໄຂບັນຫາ ແລະ ການສົນທະນາຄົ້ນຄ້ວາ ແລະ ວິຈານ.

## ເດັກນ້ອຍລາວເປັນຜູ້ຮັບເຄາະຈາກການພັດທະນາ

ທັດສະນະຄະຕິທີ່ວ່າເດັກນ້ອຍ ແລະ ໄວລຸ້ນເປັນຜູ້ເຄາະຮ້າຍຈາກການອົບພະຍົບເຊິ່ງມີການພັດທະນາເປັນຕົ້ນເຫດ ມີສອງຮູບແບບ. ຮູບແບບທຳອິດແມ່ນໝູນວຽນຢູ່ອ້ອມແນວຄິດກ່ຽວກັບການ 'ຖືກປະລະ'. ສ່ວນໃຫຍ່ແລ້ວມັນຖືກຕ້ອງໃນກໍລະນີທີ່ເດັກນ້ອຍຜູ້ທີ່ພໍ່ ຫລື ແມ່ໄດ້ໄປເຮັດວຽກຢູ່ບ່ອນອື່ນ ແລະ ຖືກປະໃຫ້ພໍ່ເຖົ້າແມ່ເຖົ້າ ຫລື ປະໃຫ້ ພໍ່ ຫລື ແມ່ ເປັນຜູ້ດູແລລຳພັງພຽງຜູ້ດຽວ. ໄດ້ມີຂໍ້ກັງວົນກ່ຽວກັບສຸຂະພາບ, ການສຶກສາ, ແລະ ສຸຂະພາບຈິດ ແລະ ຊີວິດການເປັນຢູ່ຂອງເດັກນ້ອຍເຫລົ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ເຖິງແມ່ນວ່າຈະມີຂໍ້ວິຈານດ້ານສິນທຳ, ການຄົ້ນຄ້ວາທີ່ຫາ ກໍ່ເຮັດໃນບໍ່ດົນທີ່ຜ່ານມາຢູ່ປະເທດຟີລິປິນກ່ຽວກັບຫົວຂໍ້ນີ້ໄດ້ສະຫລຸບວ່າ ເດັກ ນ້ອຍທີ່ 'ຖືກປະລະ' ບໍ່ສາມາດຖືກຖືໄດ້ຢ່າງງ່າຍດາຍວ່າເປັນຜູ້ຮັບເຄາະທີ່ບໍ່ມີສິດສຽງຫຍັງ. ແຕ່ ໃນຄວາມຈິງແລ້ວ, ຜົນກະທົບຂອງການເຄື່ອນຍ້າຍຂອງຜູ້ປົກຄອງທີ່ມີຕໍ່ເດັກນ້ອຍທີ່ 'ຖືກປະລະ' ແມ່ນບໍ່ແນ່ນອນ. ໃນຂະນະທີ່ການທີ່ຜູ້ປົກຄອງ ເຄື່ອນຍ້າຍໄປບ່ອນອື່ນອາດຈະເຮັດ ໃຫ້ເດັກນ້ອຍທີ່ 'ຖືກປະລະ' ຮູ້ສຶກວ່າຕົນເອງຖືກແຍກຈາກຄວາມອົບອຸ່ນຂອງພໍ່ແມ່, ມັນຍັງເປີດໂອກາດ ໃຫ້ເດັກໄດ້ ເຮັດສິ່ງຕ່າງໆໄດ້ໂດຍລຳພັງ ແລະ ຢ່າງອິດສະຫລະ (Asis, 2006). ຮູບແບບທີສອງ, ເລື່ອງໝາຍທີ່ວ່າ 'ເດັກນ້ອຍທີ່ຕົກເປັນເຫຍື່ອ' ໄດ້ຖືກພິສູດວ່າມັນ ເປັນສິ່ງທີ່ຍາກ ແລະ ເຈັບປວດ. ມັນໄດ້ຖືກນຳໃຊ້ ກັບເດັກນ້ອຍ, ສ່ວນໃຫຍ່ກໍ່ແມ່ນໄວລຸ້ນ, ຜູ້ທີ່ຖືກຊັກຈູງໃຫ້ເຂົ້າໄປ ໃນຂະບວນການເຄື່ອນຍ້າຍ ຂອງແຮງງານ. ຄວາມເຂົ້າໃຈໂດຍທົ່ວໄປມັກຈະສະຫລຸບເອງວ່າ ແຮງງານເດັກເຄື່ອນຍ້າຍເດັກເຫລົ່າ ນີ້ ໄປເຮັດວຽກຢູ່ບ່ອນອື່ນດ້ວຍຄວາມບໍ່ເຕັມໃຈ ຫລື ຍ້ອນໄດ້ຮັບຂໍ້ມູນຜິດ. ບົດຂຽນພາກນີ້ໄດ້ຄົ້ນ ຄ້ວາຮູບແບບທີສອງນີ້ຢ່າງລະອຽດ.

ແນວຄວາມຄິດທີ່ວ່າເດັກນ້ອຍ ແລະ ໄວລຸ້ນເປັນຜູ້ເຄາະຮ້າຍຈາກການພັດທະນາ ແມ່ນຝັງເລິກຢູ່ໃນເອກະສານ ບາງສະບັບກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ແບບນາຍທຶນ. ການໂຕ້ແຍ້ງຍັງສືບຕໍ່ໄປອີກຄື ລະບອບທຶນນິຍົມ ແລະ ໂດຍສະເພາະແມ່ນຮູບແບບດັ້ງເດີມ, ໂດຍພາຍໃນຂອງມັນແລ້ວ, ໄດ້ສ້າງ ມູມມືດຢູ່ພາຍໃນເສດຖະກິດທີ່ຄົງຕົວ ຢູ່ບົນການກົດຂີ່ຂູດຮີດກຸ່ມຄົນທີ່ອ່ອນແອ ທີ່ສຸດໃນສັງຄົມ - ເປັນຕົ້ນແມ່ນແຮງງານອົບພະຍົບ ຫລື ເດັກນ້ອຍ. ຜູ້ທີ່ນຳສະເໜີທິດສະດີນີ້, ໃນຂະນະທີ່ພວກເຂົາ ມີຈຸດເນັ້ນໜັກ ແລະ ລາຍລະອຽດປີກຍ່ອຍທີ່ຫລາກຫລາຍແຕກຕ່າງກັນ, ຕ່າງກໍ່ເຫັນດີຕໍ່ການ ສັງເກດ ການທີ່ເຫັນວ່າການຂູດຮີດ ແຮງງານອົບພະຍົບ, ແລະ ໂດຍຄວາມໝາຍແລ້ວ, ແຮງງານເດັກນ້ອຍອົບພະຍົບ, ແມ່ນອົງປະກອບທີ່ແຍກອອກ ບໍ່ໄດ້ຈາກການຂະຫຍາຍຕົວ ຂອງລະບອບນາຍທຶນໃນທົ່ວໂລກ, ດັ່ງນັ້ນ ບັນຫາການຂູດຮີດ ແຮງງານອົບພະຍົບຈຶ່ງບໍ່ມີທ່າທີວ່າ ຈະສິ້ນສຸດລົງໃນເວລາອັນໃກ້ນີ້, ໂດຍສະເພາະຖ້າບໍ່ມີການນຳໃຊ້ມາດຕາການທີ່ເດັດຂາດ (Castles & Kosack, 1973; Piore, 1979; Cohen, 1987; Sassen, 1999).

ປະເທດລາວຍັງມີຄວາມເປັນອຸດສະຫະກຳທີ່ຂ້ອນຂ້າງຕ່ຳຖ້າທຽບໃສ່ປະເທດອື່ນ ແລະ ຍ້ອນເຫດຜົນນີ້ເອງ ຈຶ່ງມັກຖືກເບິ່ງວ່າເປັນປະເທດທີ່ບໍ່ມີບັນຫາກ່ຽວກັບແຮງງານເດັກ (Ennew et al, 2005). ສິ່ງນີ້ແມ່ນ ກົງກັນຂ້າມກັນຢ່າງສິ້ນເຊີງກັບປະເທດໄທ, ເຊິ່ງເປັນປະເທດທີ່ ພັດທະນາຕາມລະບົບເສດຖະ ກິດທຶນນິຍົມໂດຍຕິດແໜ້ນກັບການນຳໃຊ້ ແຮງງານເດັກຢ່າງ ກວ້າງມາເປັນເວລາດົນນານ. ມັນໄດ້ ຖືກໂຕ້ແຍ້ງວ່າການປ່ຽນແປງດ້ານກຸ່ມປະຊາກອນ ແລະ ການພັດທະນາດ້ານລະດັບການສຶກ ສາຢູ່ປະເທດໄທ ໄດ້ນຳໄປສູ່ການຫລຸດລົງຂອງເຫດການທີ່ເດັກນ້ອຍໄທຈະຕົກຢູ່ໃນຮູບແບບທີ່ໂຫດຮ້າຍທີ່ສຸດຂອງ ແຮງງານຂອງເດັກນ້ອຍ (Baker, 1998). ເຖິງຢ່າງໃດກໍ່ຕາມ,ໄດ້ມີຄວາມເປັນຫ່ວງວ່າແຮງງານເດັກຈາກປະເທດໃກ້ຄຽງເຊັ່ນ ປະເທດລາວໄດ້ໄປແທນທີ່ເດັກນ້ອຍໄທ ໃນການທີ່ຈະຕົກ ຢູ່ໃນຮູບແບບທີ່ໂຫດຮ້າຍທີ່ສຸດຂອງແຮງງານເດັກ, ເຊິ່ງສ່ວນໃຫຍ່ແລ້ວແມ່ນມີການພົວພັນກັບ ຂະບວນການການຄ້າເດັກນ້ອຍ.

ການເຂົ້າໄປແກ້ໄຂບັນຫາໂດຍຖືເອົາຄວາມຄິດທີ່ວ່າ ເດັກນ້ອຍ ແລະ ຄົນໜຸ່ມສາວເປັນເຫຍື່ອຂອງການຍ້າຍຖິ່ນຖານທີ່ເກີດຈາກການພັດທະນາ ແມ່ນອີງໃສ່ແນວຄວາມຄິດທີ່ ເລິກເຊີ່ງກ່ຽວກັບເດັກນ້ອຍ ແລະ ຊີວິດໃນໄວເດັກ. ໃນທີ່ນີ້, ຊີວິດໃນໄວເດັກຈະຖືວ່າເປັນຂັ້ນຕອນກະກຽມຂອງຊີວິດກ່ອນທີ່ຈະກ້າວເຂົ້າສູ່ຄວາມເປັນຜູ້ໃຫຍ່. ການເຮັດວຽກເປັນຜູ້ອອກແຮງງານຮັບຈ້າງຕັ້ງແຕ່ຕອນ ຍັງນ້ອຍ, ການຂາດການເບິ່ງແຍງດູແລ ແລະ ປົກ ປ້ອງຈາກພໍ່ແມ່, ແລະການຂາດຮຽນເລື້ອຍໆ ແມ່ນອຸປະສັກຂວາງກັ້ນໃນ ການທີ່ຈະກາຍ ເປັນຜູ້ໃຫຍ່ທີ່ປະສົບຜົນສຳເລັດ.ຈາກສິ່ງນີ້ ເດັກນ້ອຍມັກຈະຖືກເຫັນວ່າເປັນຜູ້ທີ່ບໍ່ມີຄວາມອາດສາມາດໃນການດຳລົງຊີວິດດ້ວຍຕົນເອງພຽງຜູ້ດຽວ, ບອບບາງ, ສາມາດເຮັດບາງສິ່ງບາງຢ່າງໄດ້ ແຕ່ບໍ່ແມ່ນທຸກຢ່າງ ແລະບໍ່ມີໂອກາດໃນການອອກສິດສຽງ, ເຊິ່ງສິ່ງເຫລົ່ານັ້ນ ເປັນສິ່ງທີ່ກົງກັນຂ້າມກັບສິ່ງຜູ້ໃຫຍ່ມີ.

---

*ການເຮັດວຽກເປັນແຮງງານຮັບຈ້າງຕັ້ງແຕ່ຕອນຍັງນ້ອຍ*
*ແມ່ນອຸປະສັກຂວາງກັ້ນໃນ ການທີ່ຈະກາຍເປັນຜູ້ໃຫຍ່ທີ່ປະສົບຜົນສຳເລັດ*

---

## ການຄ້າມະນຸດ

ຄວາມເຂົ້າໃຈກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ນເວລາທີ່ໃຊ້ຄຳສັບນີ້ແບບບໍ່ລະມັດລະວັງ,ຈະມີຄວາມຮູ້ສຶກໜັກແໜ້ນວ່າເດັກ ແລະ ໄວລຸ້ນ ເປັນຜູ້ເຄາະຮ້າຍຈາກການພັດທະນາແບບທຶນນິຍົມ. ສິ່ງນີ້ສາມາດສະແດງອອກໃຫ້ເຫັນໄດ້ໃນວະລີທີ່ວ່າ "ການຄ້າມະນຸດແມ່ນຮູບແບບໃໝ່ຂອງຂ້າທາດ," ເຊິ່ງຈະປະກົດໃຫ້ເຫັນເລື້ອຍໆໃນບົດຂຽນຂອງປັນຍາຊົນ ແລະ ນັກເຄື່ອນໄຫວຕ້ານການຄ້າມະນຸດຫລາຍທ່ານ (Williams, 1999). ວະລີດັ່ງກ່າວໄດ້ສ້າງຂໍ້ປຽບທຽບທີ່ຊັດເຈນ, ໂດຍອີງໃສ່ແນວຄວາມຄິດຂອງການຫັນປ່ຽນມະນຸດໃຫ້ກາຍເປັນສິນຄ້າ, ລະຫວ່າງບົດບາດການຄ້າຂາຍຂ້າທາດໃນຊ່ວງຕົ້ນຂອງການຂະຫຍາຍລະບອບນາຍທຶນໃນເອີຣົບ ແລະ

ຮູບແບບປະຈຸບັນຂອງການກົດຂີ່ຂູດຮີດພາຍໃຕ້ການຂະຫຍາຍຂອງຕົວລະບອບນາຍທຶນ,ເຊິ່ງສ່ວນໃຫຍ່ຈະມີຄວາມກ່ຽວພັນກັບແມ່ຍິງ ແລະ ເດັກນ້ອຍໃນປະເທດໂລກທີສາມ.

ເຖິງຈະມີຄວາມໃຈຮ້າຍທີ່ຮຸນແຮງທີ່ເກີດຈາກວະລີດັ່ງກ່າວ, ສິ່ງສຳຄັນແມ່ນການຕິດຕາມເບິ່ງຢ່າງໃກ້ຊິດວ່າ ການຄ້າມະນຸດແທ້ຈິງແລ້ວແມ່ນຫມາຍເຖິງອັນໃດ ແລະ ຈະເບິ່ງເດັກນ້ອຍຢູ່ຈຸດໃດໃນບັນຫາດັ່ງກ່າວນີ້. ຄຳນິຍາມຂອງການຄ້າມະນຸດທີ່ນຳໃຊ້ໂດຍທົ່ວໄປ ມີເນື້ອໃນທີ່ຮວມເອົາຄວາມເຂົ້າໃຈກ່ຽວກັບເດັກນ້ອຍທີ່ໄດ້ກ່າວມາຂ້າງເທິງ. ມາດຕາ 3, ຂໍ້ (a) ຂອງອະນຸສັນຍາວ່າດ້ວຍການປ້ອງກັນ, ປາບປາມ ແລະ ລົງໂທດການຄ້າມະນຸດ, ໂດຍສະ ເພາະແມ່ນແມ່ຍິງ ແລະ ເດັກນ້ອຍ ໄດ້ເສີມສ້າງຄວາມຊັດເຈນໃຫ້ແກ່ ສົນທິສັນຍາການຕ້ານອາຊະຍາກຳ ຂ້າມຊາດຂອງອົງການສະຫະປະຊາຊາດ (ປະເທດໄທໄດ້ລົງ ນາມ ແລະ ສປປ ລາວໄດ້ໃຫ້ສັດຕະຍາບັນແລ້ວ). ເນື້ອໃນຂອງມາດຕາ 3 ມີດັ່ງລຸ່ມນີ້:

> **'ການຄ້າມະນຸດ' ຄວນຫມາຍເຖິງ ການຄັດເລືອກ, ການຂົນສົ່ງ, ການໂອນຍ້າຍມະນຸດ, ການມີມະນຸດໄວ້ຄອບຄອງຢ່າງປົກປິດ ຫລື ການທີ່ໄດ້ຮັບມະນຸດຈາກຜູ້ອື່ນ, <u>ໂດຍຜ່ານການຂົ່ມຂູ່ ຫລື ການບັງຄັບ ຫລື ຮູບແບບອື່ນໆຂອງການໃຊ້ກຳລັງບັງຄັບ, ຜ່ານການລັກພາຕົວ, ຂອງການໃຊ້ອຳນາດໄປໃນທາງທີ່ຜິດ ຫລື ການສວາຍໃຊ້ຄວາມອ່ອນແອ ຫລື ການໃຫ້ ແລະ ຮັບເງິນ ຫລື ຜົນປະໂຫຍດຕ່າງໆ ເພື່ອໃຫ້ໄດ້ຮັບຄວາມຍິນຍອມຈາກຄົນຜູ້ຫນຶ່ງ</u> ທີ່ມີອຳນາດປົກຄອງຄົນອີກ ຜູ້ຫນຶ່ງ, ໂດຍມີຈຸດປະສົງທີ່ຈະຫາ ແລະ ສວາຍໃຊ້ ຜົນປະໂຫຍດ. ການຫາ ແລະ ສວາຍໃຊ້ຜົນ ປະໂຫຍດ ຢ່າງຫນ້ອຍຕ້ອງລວມເຖິງ ການຫາຜົນປະໂຫຍດຈາກການທີ່ຜູ້ອື່ນເປັນໂສເພນີ ຫລື ທຸກຮູບແບບຂອງການຫາຜົນປະໂຫຍດທາງເພດ, ການໃຊ້ແຮງງານ ແລະ ການໃຫ້ບໍລິການທີ່ ຖືກບັງຄັບ, ຂ້າທາດ ຫລື ການກະທຳທີ່ຄ້າຍຄືກັບຂ້າທາດ, ການກັກຂັງຫນ່ວງຫນ່ຽວ ຫລື ການ ເອົາອະໄວຍະວະສ່ວນໃດສ່ວນຫນຶ່ງອອກ"**

ຂໍ້ (c) ໄດ້ເສີມຕື່ມວ່າ ໃນກໍລະນີຂອງເດັກນ້ອຍ "ການຄັດເລືອກ, ການຂົນສົ່ງ, ການໂອນຍ້າຍເດັກນ້ອຍ, ການມີເດັກນ້ອຍໄວ້ຄອບຄອງຢ່າງປົກປິດ ຫລື ການທີ່ໄດ້ຮັບເດັກນ້ອຍຈາກຜູ້ອື່ນໂດຍມີຈຸດປະສົງທີ່ຈະຫາຜົນປະໂຫຍດນຳເຂົາເຈົ້າ ຄວນຖືກຖືວ່າເປັນ 'ການຄ້າມະນຸດ' ເຖິງວ່າມັນຈະບໍ່ໄດ້ລວມເອົາເຖິງວິທີຕ່າງໆທີ່ໄດ້ຕັ້ງໄວ້ໃນຂໍ້(a) ກໍ່ຕາມ". ດັ່ງນັ້ນ, ພາກ ສ່ວນທີ່ຂີດກ້ອງໃນຄຳນິຍາມຂ້າງເທິງນັ້ນບໍ່ມີຄວາມກ່ຽວຂ້ອງເມື່ອເວົ້າເຖິງກໍລະນີເດັກນ້ອຍ.

ສິ່ງນີ້ຫມາຍຄວາມວ່າການຈະກຳນົດວ່າອັນໃດ ຈຶ່ງປະກອບເປັນກໍລະນີການຄ້າເດັກນ້ອຍ - ເຊິ່ງໝາຍເຖິງມະນຸດທຸກຄົນທີ່ມີອາຍຸລະຫວ່າງ 0 ແລະ 18 ປີ ຕາມຄຳນິຍາມຂອງອົງການສະຫະປະຊາຊາດ - ແມ່ນການກົດຂີ່ຂູດຮີດຢູ່ໃນບ່ອນທີ່ເຮັດວຽກໄດ້ກາຍເປັນປັດໄຈຫລັກ. ເຖິງຢ່າງໃດກໍ່ຕາມ, ການກົດຂີ່ຂູດຮີດຕົວຈິງ (ເຊິ່ງອົງການສະຫະປະຊາຊາດໄດ້ໃຫ້ຄຳນິຍາມຄືດັ່ງທີ່ໄດ້ກ່າວມາຂ້າງເທິງວ່າ "ການອອກແຮງງານ ແລະ ການໃຫ້ບໍລິການແບບຖືກບັງຄັບ"), ບໍ່ນັບກໍລະນີທີ່ຈະແຈ້ງແລ້ວ, ແມ່ນຍາກທີ່ຈະກຳນົດຍ້ອນວ່າມັນຫມາຍເຖິງ ການພົວພັນຕ່າງໆທີ່ອາດຈະມີການປ່ຽນແປງຢູ່ຕະຫລອດເວລາ. ເມື່ອຂາດຄວາມຊັດເຈນໃນຄຳນິຍາມຂອງການກົດຂີ່ຂູດ

ຮີດ, ມັນຈຶ່ງເປັນຊ່ອງວ່າງທີ່ກ້ວາງທີ່ຈະກໍານົດເອົາກໍລະນີຕ່າງໆຂອງເດັກນ້ອຍລາວທີ່ເຮັດວຽກຢູ່ໃນປະເທດໄທ ໃຫ້ເປັນກໍລະນີຂອງການຄ້າມະນຸດ.

ພື້ນຖານຄວາມສົມເຫດສົມຜົນຂອງນິຍາມດັ່ງກ່າວໄດ້ສະຫລຸບວ່າສິດທິຂອງເດັກນ້ອຍສາມາດໄດ້ຮັບການປົກປັກຮັກສາທີ່ດີຂຶ້ນ ໂດຍການບໍ່ມອບສິດອໍານາດໃຫ້ເດັກນ້ອຍຕັດສິນໃຈດ້ວຍຕົນເອງໃນການຍ້າຍຖິ່ນຖານເພື່ອຊອກເຮັດວຽກ. ຄວາມຫວັງດີຂອງນະໂຍບາຍນີ້ ບໍ່ມີຂໍ້ສົງໃສຍົກມາຊັກຖາມ, ແຕ່ກໍ່ຕ້ອງໄດ້ຄໍານຶງເຖິງຜົນທີ່ຕາມມາທັງຫມົດຂອງການປະຕິບັດນີ້. ທາງແກ້ທີ່ເຫັນວ່າຄວາມຍິນຍອມເຫັນດີຂອງເດັກນ້ອຍ, ເຊິ່ງກໍ່ຫມາຍເຖິງ ສິດສຽງຂອງເດັກນ້ອຍ ແລະປະສົບການຂອງພວກເຂົາທີ່ແຕກຕ່າງກັນ, ເປັນສິ່ງທີ່ບໍ່ສໍາຄັນ ແລະ ບໍ່ກົງກັບປະເດັນ, ແລະ ທາງແກ້ທີ່ອີງໃສ່ມາດຕາການທີ່ເຂັ້ມງວດເພື່ອທີ່ຈະປ້ອງກັນບໍ່ໃຫ້ເດັກນ້ອຍໄປເຮັດວຽກຢູ່ຕ່າງປະ ເທດ, ໃນທີ່ສຸດແລ້ວອາດຈະເປັນວິທີທີ່ບໍ່ເຫມາະສົມກັບເດັກນ້ອຍເຫລົ່ານັ້ນ. ສິ່ງນີ້ແມ່ນການຍຶດຕິດກັບແນວຄວາມຄິດອັນດຽວທີ່ວ່າ 'ເດັກນ້ອຍຖືກຂາຍ' ເປັນຜູ້ທີ່ ຕ້ອງໄດ້ໄປກອບກູ້ ໃຫ້ລອດພົ້ນຈາກການຖືກຂູດຮີດ ແລະ ຖືກທາລຸນ ພ້ອມທັງມອບຊີວິດໃນໄວເດັກຄືນໃຫ້ພວກເຂົາ. ສິ່ງນີ້ບໍ່ໄດ້ຄົ້ນຄ້ວາເຖິງທາງເລືອກ ຫລື ທາງແກ້ອື່ນທີ່ເປັນໄປໄດ້, ເຊັ່ນຊອກຫາວ່າ "ການກົດຂີ່ຂູດຮີດ" ສາມາດແກ້ໄຂໄດ້ບໍ່ ຫລື ຊີວິດ ໃນໄວເດັກແບບໃດທີ່ໄດ້ສົ່ງຄືນໃຫ້ເຂົາ. ມັນເປັນພຽງການຕອບຮັບທີ່ຫວັງວ່າ 'ນະໂຍບາຍດຽວຈະສາມາດນໍາໃຊ້ກັບເດັກນ້ອຍທຸກຄົນໃນທຸກກໍລະນີໄດ້' ແລະກໍ່ຫມູນວຽນຢູ່ອ້ອມການແກ້ໄຂແບບ 'ຊ່ວຍເຫລືອອອກມາ-ທໍາການບໍາ ບັດ-ສົ່ງເຂົ້າສັງຄົມຄືນ'. ນະໂຍບາຍນີ້, ເຊິ່ງໄດ້ເຮັດໃຫ້ການເຮັດວຽກຂອງເດັກນ້ອຍທີ່ອາຍຸຕໍ່າກ່ວາ 18 ປີໃນປະເທດໄທເປັນສິ່ງທີ່ຜິດກົດຫມາຍ, ອາດຈະບໍ່ຊ່ວຍຫລຸດຈໍານວນຂອງເດັກນ້ອຍທີ່ອາຍຸຕໍ່າກ່ວາ 18 ປີທີ່ເຮັດວຽກຢູ່ໃນປະເທດໄທໃຫ້ຫນ້ອຍລົງ, ແຕ່ແນ່ນອນວ່າ ນະໂຍບາຍດັ່ງກ່າວຈະເຮັດໃຫ້ພວກເຮົາແນມເຫັນ ແລະ ຕິດຕາມວຽກຂອງພວກເຂົາໄດ້ຍາກຂຶ້ນຕື່ມ, ເຊິ່ງໄດ້ພິສູດໃຫ້ເຫັນມາແລ້ວ, ແລະຍິ່ງເປັນການເພີ່ມຄວາມສ່ຽງໃຫ້ແກ່ແຮງງານເຄື່ອນຍ້າຍໄວໜຸ່ມຕໍ່ການຖືກກົດຂີ່ຂູດຮີດ ໃຫ້ມີຫລາຍກ່ວາເກົ່າ (Busza et al, 2004).

---

*ນະໂຍບາຍໃນປະຈຸບັນມັກຈະເປັນ 'ນະໂຍບາຍດຽວທີ່ນໍາໃຊ້ກັບເດັກນ້ອຍທຸກຄົນໃນທຸກກໍລະນີໄດ້'*

---

## ເດັກນ້ອຍລາວໃນຖານະຜູ້ທີ່ໄດ້ຮັບຜົນກະທົບຈາກການພັດທະນາ

UNICEF ໄດ້ໃຫ້ຄໍານິຍາມຢ່າງຈະແຈ້ງກ່ຽວກັບຊີວິດໃນໄວເດັກ. 'ຊີວິດໃນໄວເດັກ' ໃນບົດລາຍງານ SOWC ເຊິ່ງເປັນບົດລາຍງານທີ່ສໍາຄັນຂອງອົງການ UNICEF , ແມ່ນ ໝາຍເຖິງ "ຊ່ວງເວລາແຫ່ງການເຕີບໃຫຍ່, ຮຽນຮູ້, ຫລິ້ນ ແລະ ມີຄວາມຮູ້ສຶກວ່າຕົນເອງປອດໄພ" ພ້ອມທັງສາມາດເຂົ້າເຖິງ

"ການບໍລິການທີ່ສຳຄັນ ແລະ ຈຳເປັນເຊັ່ນ: ໂຮງໝໍ ແລະ ໂຮງຮຽນ," ແລະ ໄດ້ຮັບການປົກປ້ອງຄຸ້ມຄອງຈາກພໍ່ແມ່ ແລະ ຊຸມຊົນ (UNICEF, 2005). ທັດສະນະສາກົນກ່ຽວກັບເດັກດັ່ງກ່າວອາດຈະເຫມົາລວມເອົາເດັກນ້ອຍ ຫລື ຄົນໜຸ່ມສາວໂດຍທົ່ວໄປ ວ່າເປັນຜູ້ທີ່ໄດ້ຮັບຜົນກະທົບ ຈາກການພັດທະນາທີ່ຄືກັນຫມົດທຸກຄົນ ແລະ ບໍ່ມີສິດສຽງຫຍັງ. ນອກຈາກນັ້ນ, ແນວຄິດນີ້ອາດຈະຢູ່ ບົນພື້ນຖານ ຂອງຄວາມເຫັນເປັນເອກະພາບຂອງສາກົນ ກ່ຽວກັບວ່າສິ່ງໃດແມ່ນ 'ຄວາມຕ້ອງ ການຂອງເດັກ', ເຊິ່ງສ່ວນໃຫຍ່ແມ່ນຊ່ຽວຊານ ຜູ້ໃຫຍ່ ແລະ ຜູ້ວາງນະໂຍບາຍເປັນຜູ້ກຳນົດອອກມາ ແລະ ຄວາມເຂົ້າໃຈຂອງເຂົາເຈົ້າຕໍ່ກັບຊີ ວິດໃນໄວເດັກ ແມ່ນໄດ້ມາຈາກຄວາມຈິງໃນສັງຄົມ ຂອງຄົນຊົນຊັ້ນກາງໃດໜຶ່ງ (Boyden et al, 1998).

ຕໍ່ບັນຫາເດັກ ແລະ ການອົບພະຍົບ, ທັດສະນະດັ່ງກ່າວໄດ້ປະກອບສ່ວນໃຫ້ແກ່ຄວາມເປັນຈິງກ່ຽວກັບປະກົດການທີ່ເດັກນ້ອຍລາວໄປສຶກສາຢູ່ປະເທດໄທ, ເຊິ່ງເປັນການເຄື່ອນຍ້າຍເພື່ອໄປຮຽນໜັງສື - ບໍ່ແມ່ນເພື່ອເຮັດວຽກ - ແລະ ປະກົດການນີ້ບໍ່ຄ່ອຍໄດ້ຮັບຄວາມສົນໃຈຫລາຍ ຍ້ອນມັນສອດຄ່ອງກັບສິ່ງທີ່ຄົນຄິດວ່າເປັນສິ່ງທີ່ດີສຳລັບເດັກນ້ອຍ. ເຖິງເປັນແນວນັ້ນກໍ່ຕາມ, ໂດຍບໍ່ປະ ຕິເສດເຖິງຄຸນຄ່າຂອງການສຶກສາ, ມັນບໍ່ສາມາດເວົ້າແບບຢ່າງງ່າຍດາຍວ່າ ການທີ່ສົ່ງເດັກນ້ອຍໄປຮຽນຕ່າງປະເທດເປັນສິ່ງທີ່ດີທີ່ສຸດສຳລັບເດັກນ້ອຍຢ່າງໂຕ້ຖຽງບໍ່ໄດ້. ປະເດັນນີ້ໄດ້ຖືກສະແດງອອກ ໃຫ້ເຫັນຢ່າງໜ້າສະຫລົດໃຈຜ່ານບົດລາຍງານເປັນປະຈຳ, ຈາກຫລາຍໆປະເທດທີ່ຮັ່ງມີ ແລະ ທຸກຍາກ, ລວມທັງປະເທດໄທ. ບົດລາຍງານໄດ້ກ່າວເຖິງຄວາມກົດດັນອັນໜັກໜ່ວງທີ່ມີຕໍ່ນັກຮຽນ ແລະ ຍັງໄດ້ກ່າວເຖິງການປະລະ ຫລື ແມ້ກະທັ່ງການທຳຮ້າຍທາລຸນນັກຮຽນຕ່າງຊາດໃນໂຮງຮຽນຕ່າງໆ (Bunnag, 2005; Kwankhom, 2006).

***ການເຮັດໃຫ້ການເຮັດວຽກຂອງເດັກນ້ອຍທີ່ອາຍຸຕ່ຳກ່ວາ 18 ປີໃນປະເທດໄທເປັນສິ່ງທີ່ຜິດກົດ ໝາຍ ຍິ່ງເພີ່ມຄວາມສ່ຽງໃຫ້ແກ່ແຮງງານເຄື່ອນຍ້າຍໄວໜຸ່ມຕໍ່ການຖືກກົດຂີ່ຂູດຮີດ***

ແນວຄິດທີ່ຄືກັນ ແລະ ບໍ່ປ່ຽນແປງ ກ່ຽວກັບຊີວິດໃນໄວເດັກ ໄດ້ມອງຂ້າມຄວາມແຕກຕ່າງໃນລາຍລະອຽດຂອງເດັກນ້ອຍ ແລະ ມອງຂ້າມວິທີທີ່ເດັກ ແລະ ໄວລຸ້ນມີສ່ວນຮ່ວມກັບໂຄງການການພັດທະນາ. ໂດຍທົ່ວໄປແລ້ວ, ການໃຫ້ເດັກນ້ອຍ ແລະ ໄວລຸ້ນເຂົ້າຮຽນໜັງສື ຖືວ່າເປັນໜຶ່ງໃນມາດຕາການຫລັກໃນການຫລຸດຜ່ອນ ເຫດການຂອງການຄ້າມະນຸດ ທີ່ກ່ຽວພັນກັບຜູ້ທີ່ອາຍຸຕ່ຳກ່ວາ 18 ປີ, ແຕ່ຄືທີ່ກ່າວມາແລ້ວວ່າມັນເປັນຄວາມຄິດທີ່ບໍ່ທັນໄດ້ມີການໄຕ່ຕອງຢ່າງລະອຽດຖີ່ຖ້ວນ. ອີກທາງເລືອກໜຶ່ງ, ສຳລັບຄົນທີ່ມີອາຍຸກາຍເກນຮຽນໜັງສື, ການຊອກຫາເຮັດວຽກຢູ່ທ້ອງຖິ່ນຂອງຕົນໄດ້ຖືກເບິ່ງວ່າເປັນທົນທາງໃນການຫລຸດຜ່ອນຄວາມ ສ່ຽງຕໍ່ການຕົກເປັນເຫຍື່ອຂອງການຄ້າທີ່ຜິດກົດຫມາຍ (Phetsiriseng, 2001). ເຖິງຢ່າງໃດກໍ່ຕາມ, ບົດລາຍງານບາງບົດໄດ້

ເນັ້ນໜັກເຖິງຄວາມເປັນຈິງທີ່ວ່າໄວລຸ້ນລາວບໍ່ໄດ້ໄປປະເທດໄທພຽງເພາະວ່າບໍ່ມີວຽກເຮັດງານທຳໃນທ້ອງຖິ່ນທີ່ພວກເຂົາອາໄສຢູ່, ແຕ່ພວກເຂົາຫາກຖືກດຶງດູດໂດຍປະເພດວຽກງານຕ່າງໆທີ່ແຕກຕ່າງກັບວຽກງານທີ່ມີຢູ່ໃນບ້ານຂອງເຂົາເຈົ້າ, ໂດຍສະເພາະ ພາຍຫລັງທີ່ພວກເຂົາໄດ້ຮັບການສຶກສາແລ້ວ, ວຽກງານທີ່ມີໃນບ້ານມັກຈະຄິດວ່າເປັນວຽກງານທີ່ລຳບາກ ແລະ ໜ້າເບື່ອໜ່າຍ. ນອກຈາກນັ້ນ, ຄວາມຢາກເຫັນໂລກກ້ວາງນອກຂອບເຂດທີ່ເຂົາອາໄສຢູ່ ຍັງຖືກກ່າວຢູ່ເລື້ອຍໆວ່າເປັນປັດໄຈໜຶ່ງທີ່ດຶງດູດໃຫ້ໄວລຸ້ນລາວເດີນທາງໄປໄທ ແລະ ກໍ່ເປັນໄປໄດ້ວ່ານັ້ນ ເປັນການກ້າວເດີນເຂົ້າສູ່ການຂອງການຄ້າຜິດກົດໝາຍ (Phetsiriseng, 2001; Wille, 2001; Ginzburg, 2004; SCUK et al, 2004). ຕໍ່ກັບບັນຫານີ້, ການເພີ່ມຂຶ້ນຂອງການສຶກສາ ແລະ ການມີວຽກເຮັດງານທຳໃນທ້ອງຖິ່ນບໍ່ໄດ້ຮັບປະກັນວ່າໄວໜຸ່ມລາວທີ່ຫລັ່ງໄຫລໄປເຮັດວຽກຢູ່ໃນປະເທດໄທຈະຫລຸດໜ້ອຍລົງ; ແຕ່ໃນທາງກົງກັນຂ້າມ, ສິ່ງເຫລົ່ານີ້ອາດຈະປະກອບສ່ວນເຮັດໃຫ້ຈຳນວນເພີ່ມຂຶ້ນຕື່ມອີກ.

## ເດັກນ້ອຍລາວໃນຖານະຜູ້ມີສ່ວນຮ່ວມໃນການພັດທະນາ

ແນວຄວາມຄິດທີ່ເຫັນວ່າເດັກນ້ອຍເປັນຜູ້ທີ່ມີສ່ວນຮ່ວມໃນການພັດທະນາ ແທນທີ່ຈະເປັນພຽງແຕ່ຜູ້ທີ່ ລໍຖ້າຮັບຜົນຈາກການພັດທະນາ ມີຮາກຖານດ້ານທິດສະດີ ແລະ ແນວຄວາມຄິດໃນ "ວິຊາສັງຄົມສາດທີ່ກ່ຽວກັບເດັກນ້ອຍໃນຮູບແບບໃໝ່" (James & Prout, 1997; Qvortrup, 2005). ທັດສະນະນີ້ແຕກຕ່າງຈາກການສຶກສາກ່ຽວກັບຊີວິດ ເດັກນ້ອຍໃນພາກສາຂາ ທີ່ສຳຄັນດ້ານຈິດຕະວິທະຍາ ເຊິ່ງໃນການສຶກສາເຫລົ່ານັ້ນ ຊີວິດໄວເດັກ ຄົ້ນຄ້ວາແບບຂັ້ນຕອນຂອງ ຊີວິດທີ່ນຳໄປສູ່ຊີວິດໄວຜູ້ໃຫຍ່. ວິຊາສັງຄົມສາດທີ່ກ່ຽວກັບເດັກນ້ອຍໃນຮູບແບບໃໝ່ບໍ່ໄດ້ປະຕິເສດຄວາມຈິງທີ່ວ່າເດັກບາງຄົນອາດຈະບໍ່ມີຄວາມສາມາດໃນການຄິດ ແລະ ປະພຶດໄດ້ຄືຜູ້ໃຫຍ່ທົ່ວໄປ, ແຕ່ກໍບໍ່ໄດ້ປະຕິບັດຕາມວົງໂຄຈອນຂອງການພັດທະນາຂອງເດັກ ໂດຍການເນັ້ນ ໜັກວ່າ "ສິ່ງທີ່ເດັກນ້ອຍກະທຳ ແລະ ສິ່ງຄາດຫວັງຈາກພວກເຂົາແມ່ນຖືກກຳນົດໂດຍປະຫວັດສາດ ແລະ ວັດທະນະທຳ" (Qvortrup, 2004).

ແນວຄິດດ້ານທິດສະດີ ແລະ ປັດຊະຍາເຫລົ່ານີ້ ໄດ້ສະໜັບສະໜູນການແກ້ໄຂບັນຫາກ່ຽວກັບເດັກນ້ອຍໃນການພັດທະນາ, ເຊິ່ງໄດ້ຫັນປ່ຽນຈາກວິທີທີ່ອີງໃສ່ຄວາມຕ້ອງ ການເປັນພື້ນຖານ, ມັກຈະຕິດແໜ້ນກັບການກຳນົດວ່າ ຄວາມຕ້ອງການແມ່ນຄືກັນໃນທົ່ວທຸກບ່ອນ ແລະ ບໍ່ສາມາດຫາຄວາມແຕກຕ່າງໄດ້, ໄປເປັນວິທີທີ່ອີງໃສ່ສິດທິເປັນພື້ນຖານ ເຊິ່ງເປັນວິທີການທີ່ສອດຄ່ອງກັບສົນທິສັນຍາ ວ່າດ້ວຍສິດທິເດັກຂອງສະຫະປະຊາຊາດ (United Nations Convention on the Rights of the Child ຫລື CRC) ທີ່ເກືອບທຸກປະເທດໃນໂລກໄດ້ໃຫ້ສັດຕະຍາບັນແລ້ວ. ຜົນທີ່ຕາມມາ ແລະ ຄວາມໝາຍ ທີ່ສຳຄັນຂອງວິທີການນີ້ແມ່ນວ່າເດັກ ນ້ອຍບໍ່ຖືກເຫັນເປັນພຽງເຫຍື່ອ ຫລື ເປັນຜູ້ທີ່ລໍຖ້າຮັບຜົນກະທົບຈາກການພັດທະນາອີກຕໍ່ໄປ ແຕ່ເດັກນ້ອຍຈະມີຖານະເປັນສ່ວນໜຶ່ງ ຫລື ເປັນຜູ້ທີ່ມີສ່ວນຮ່ວມໃນຂັ້ນຕອນການພັດທະນາ (Bourdillon, 2004). ມາດຕາ 12 ຂອງ CRC ລະບຸໄວ້ ຢ່າງຈະແຈ້ງວ່າເດັກ, ເຊິ່ງໝາຍເຖິງຜູ້ທີ່ມີອາຍຸຕ່ຳກ່ວາ 18 ປີ ທຸກຄົນ, ມີສິດທິໃນການມີສ່ວນຮ່ວມໃນທຸກໆບັນຫາທີ່ມີຜົນກະທົບຕໍ່ເດັກ.

ສິ່ງກະຕຸກຊຸກຍູ້ໃຫ້ເດັກມີສ່ວນຮ່ວມຫລາຍຂື້ນບໍ່ມີພຽງແຕ່ການຮຽກຮ້ອງທາງໄກຈາກປື້ມແບບຮຽນ/ປື້ມທິດສະດີຂອງຕາເວັນຕົກ ຫລື ສິນທິສັນຍາຂອງສາກົນ. ເຫດຜົນທີ່ດີ ເພື່ອຮຽກຮ້ອງໃຫ້ເດັກມີສ່ວນຮ່ວມຫລາຍຂື້ນ ຍັງມາຈາກການສັງເກດການຕົວຈິງຂອງບົດຄົ້ນຄ້ວາ ຂອງກະແສສັງຄົມໃນປະຈຸບັນກ່ຽວກັບການຄ້າມະນຸດ ແລະ ການອົບພະຍົບ ຂອງແຮງງານເດັກຢູ່ໃນ ສປປ ລາວເອງ. ຕົວຢ່າງ, ປົກກະຕິແລ້ວເດັກນ້ອຍລາວຈະບໍ່ຄອບພໍ່ແມ່ກ່ອນທີ່ຈະອອກຈາກບ້ານເພື່ອເດີນທາງໄປປະເທດໄທ (Phetsiriseng, 2001; Wille, 2001). ຕົວຢ່າງນີ້ບອກໃຫ້ຮູ້ວ່າ ພໍ່ແມ່ ຫລື ເວົ້າໂດຍລວມວ່າຜູ້ໃຫຍ່ , ໃນຫລາຍໆກໍລະນີອາດເປັນຜູ້ໃຫ້ຂໍ້ມູນກ່ຽວກັບການອົບພະຍົບຂອງແຮງງານເດັກ ແລະ ການຄ້າມະນຸດ ທີ່ເດັກນ້ອຍບໍ່ໃຫ້ຄວາມສຳຄັນ. ນອກເຫນືອຈາກນັ້ນ, ກໍໄດ້ສັງເກດເຫັນຢູ່ເລື້ອຍໆວ່າການ ເຄື່ອນຍ້າຍຂອງເດັກນ້ອຍ ແລະ ໄວລຸ້ນລາວແມ່ນ ໄດ້ຮັບການຊ່ວຍເຫລືອ ຈາກຜູ້ໃຫຍ່, ເຊິ່ງສ່ວນໃຫຍ່ແລ້ວກໍ່ແມ່ນ ຫມູ່ຄູ່ ແລະ ຍາດຕິພີ່ນ້ອງ ເຊິ່ງບໍ່ໜ້າເຊື່ອວ່າເປັນນັກຄ້າມະນຸດໄດ້. ການສັງເກດການນີ້ແລ່ນໄປຄູ່ຂະຫນານກັບ ‘ທິດສະດີເຄືອຂ່າຍຕິດຕໍ່’ ໃນການຄົ້ນຄວ້າກ່ຽວກັບການຍົກຍ້າຍຖິ່ນຖານ, ເຊິ່ງຢູ່ໃນນັ້ນໄດ້ກ່າວເຖິງຜູ້ເຄື່ອນຍ້າຍ ເປັນຕົວທີ່ມີບົດບາດໃນເຄືອຂ່າຍຕິດຕໍ່ (Massey et al, 1993). ສິ່ງນີ້ຈຶ່ງເປັນສິ່ງທີ່ກົງກັນຂ້າມກັບສາຍພົວພັນ ທິດທາງດຽວເຊິ່ງເປັນພື້ນ ຖານຂອງສາຍພົວພັນລະຫວ່າງຜູ້ຄ້າມະນຸດ ແລະ ຜູ້ເຄາະຮ້າຍ. ທ້າຍສຸດ, ການຄົ້ນຄວ້າກ່ຽວ ກັບ ‘ການປ່ຽນແປງໃນຊົນນະບົດ’ ໄດ້ຍົກຈຸດເດັ່ນໃຫ້ເຫັນເຖິງບົດບາດ ທີ່ຫ້າວຫັນຂອງໄວລຸ້ນໃນຂະບວນການຂັ້ນຕອນການຍົກຍ້າຍຖິ່ນຖານ, ແລະ ການພັດທະນາທີ່ຕາມມາ ເຊິ່ງໄດ້ເກີດຂື້ນ ຢູ່ທົ່ວຂົງເຂດອາຊີຕາເວັນອອກສ່ຽງໃຕ້ (Wolf, 1992; Koning, 1997; Rigg, 2003, part III; Rigg et al, 2004).

ສຳພັນທະມິດຊ່ວຍເຫລືອເດັກ ຢູ່ ສປປລາວໄດ້ນຳໃຊ້ປັດຊະຍາທີ່ອີງໃສ່ສິດທິເປັນພື້ນຖານໃນການຈັດຕັ້ງປະຕິບັດໂຄງການກ່ຽວກັບການຄ້າມະນຸດ ແລະ ການອົບພະຍົບຂອງແຮງງານເດັກໄປປະເທດໄທ. ມີສອງຕົວຢ່າງສະເພາະທີ່ສົມຄວນຖືກຍົກມາກ່າວເຖິງ. ຕົວຢ່າງທີຫນຶ່ງ, ອົງການການຊ່ວຍເຫລືອເດັກອັງກິດ (Save the Children UK ຫລື SCUK) ໄດ້ອອກແບບ ແລະ ດຳເນີນການສຳຫລວດແບບມີສ່ວນຮ່ວມກ່ຽວກັບຊາວຫນຸ່ມລາວຜູ້ທີ່ເປັນແຮງງານໃນປະເທດໄທ ໂດຍມີເປົ້າຫມາຍໃນການສ້າງຄວາມເຂົ້າໃຈກ່ຽວກັບປະກົດການດັ່ງກ່າວ ໃຫ້ຫລາຍຂື້ນກວ່າເກົ່າ. ການມີສ່ວນຮ່ວມໃນການສຶກສານີ້ ຂອງຊາວຫນຸ່ມໃນທ້ອງຖິ່ນໃນຖານະຂອງຜູ້ຮ່ວມຄົ້ນຄ້ວາ ໄດ້ເຮັດໃຫ້ຄົ້ນພົບເຖິງຄວາມເຂົ້າໃຈທີ່ເລິກເຊິ່ງ ແລະ ສາມາດເຈາະເລິກ ເຂົ້າໄປເຖິງປະສົບການ ແລະທັດສະນະຄະຕິຂອງຊາວຫນຸ່ມລາວທີ່ເຮັດວຽກຢູ່ໃນປະເທດໄທ (SCUK et al, 2004). ຕົວຢ່າງທີສອງ, ພາຍໃຕ້ການຮ່ວມມືກັບອົງການແຮງງານສາກົນ, ອົງການຊ່ວຍເຫລືອເດັກອັງກິດໄດ້ຈັດ ‘ເວທີເດັກ’ ຂື້ນ ຫລາຍຄັ້ງໃນຂົງເຂດແມ່ນ້ຳຂອງເພື່ອຢາກຮັບຊາບກ່ຽວກັບຄວາມຄິດເຫັນຂອງເດັກຕໍ່ວິທີການແກ້ໄຂບັນຫາການຄ້າມະນຸດ (ILO & SCUK, 2005).

ໃນຂະນະທີ່ຄວາມເຂົ້າໃຈທີ່ເຈາະເລິກ ແລະ ເລິກເຊິ່ງ ສາມາດຖືກຮວບຮວມໄດ້ໂດຍນຳໃຊ້ວິທີແບບນີ້, ຄຳສັບສຳຄັນທີ່ກ່ຽວຂ້ອງກັບວິທີນີ້ເຊັ່ນ ‘ຟັງເດັກນ້ອຍ’, ‘ການມີສ່ວນຮ່ວມຂອງເດັກ’ ແລະແກ້ໄຂບັນຫາກ່ຽວກັບ ‘ການກະທຳຂອງເດັກ’ ກໍ່ມີບັນຫາໃນຕົວຂອງມັນເອງເຊັ່ນກັນ. ສິ່ງທຳອິດ, ມີບັນຫາກ່ຽວກັບການຄັດເລືອກເອົາຜູ້ເຂົ້າມາມີສ່ວນຮ່ວມ. ຕົວຢ່າງ, ຄວນຈະຮັບຟັງຜູ້ໃດ, ແລະ

ເດັກນ້ອຍຜູ້ໃດຈະເຂົ້າມາມີສ່ວນຮ່ວມ? ອັນທີສອງ, ໃນຂະນະທີ່ການຟັງເດັກນ້ອຍ ແມ່ນອນວ່າເປັນວິທີທີ່ມີປະສິດຕິພາບເພື່ອໃຫ້ມີຄວາມເຂົ້າໃຈທີ່ຫລາຍຂື້ນກ່ຽວກັບ ແຮງຜັກດັນ ແລະ ຂັ້ນຕອນຕ່າງໆ, ແຕ່ກໍ່ມີບັນຫາ - ທີ່ພົບເຫັນຢູ່ໃນການວິໄຈແບບມີສ່ວນຮ່ວມ ສ່ວນໃຫຍ່ - ກ່ຽວກັບວ່າຈະສະຫລຸບສັງລວມວິທີແກ້ໄຂບັນຫາແບບຄຸນະພາບ ທີ່ມີຫລາກຫລາຍວິທີ ແລະ ຮູບແບບ ແນວໃດ ແລະ ຈະເຮັດແນວໃດເພື່ອທີ່ຈະເອົາສິ່ງເຫລົ່ານັ້ນມາ ກັ່ນກອງໃຫ້ອອກມາເປັນນະໂຍບາຍ ສຳລັບແກ້ໄຂບັນຫາຢ່າງສົມເຫດສົມຜົນໄດ້. ບັນຫາທີສອງອາດຈະຫຍຸ້ງຍາກໂດຍສະເພາະໃນກໍລະນີທີ່ຄຳສະເໜີແນະຂອງເດັກແມ່ນກົງກັນຂ້າມແລະ ຂັດແຍ້ງກັບຄວາມເຫັນຂອງຜູ້ໃຫຍ່, ຜູ້ເຊິ່ງມີອຳນາດຕັດສິນຊີ້ຂາດໃນການສ້າງນະໂຍບາຍເກືອບທຸກຢ່າງ. ທ້າຍສຸດ, ວິທີການຄົ້ນຫາຄວາມຄິດເຫັນຂອງບຸກຄົນສະເພາະແມ່ນມີ ຄວາມອັນຕະລາຍຕໍ່ກັບການນຳມາໃຊ້ ກັບເດັກນ້ອຍ ເຊັ່ນດຽວກັນ. ໃນເວລາຕັ້ງຄຳຖາມເຈາະຈີ້ມເຖິງການກະທຳຂອງເດັກ, ມຸມມອງທີ່ແຄບເກີນໄປ ອາດຈະປົດບັງ "ໂຄງຮ່າງທີ່ກ້ວາງກ່ວາຂອງຄວາມຫມາຍ ແລະ ພຶດຕິກຳ" ເປັນຕົ້ນແມ່ນ ບົດບາດຍິງ-ຊາຍ, ຊົນຊັ້ນ ແລະ ຮຸ້ນຄົນ (Long, 2001). ສິ່ງນີ້ອາດຈະເອົາປະກົດການສັງຄົມຕ່າງໆທີ່ແຕກຕ່າງກັນເຂົ້າມາລວມກັນ ແລະ ສະຫລຸບເອົາວ່າພວກມັນຄືກັນ ໂດຍອີງໃສ່ພື້ນຖານຂອງຄວາມ ເປັນຈິງທີ່ປະສົບໂດຍເດັກນ້ອຍບາງຄົນເທົ່ານັ້ນ, ເຊິ່ງການເຫມົາລວມຄືແນວນັ້ນເປັນສິ່ງທີ່ບໍ່ຖືກຕ້ອງ.

## ສະຫລຸບ: ຈາກຄວາມຄິດທີ່ຂັດແຍ້ງກັນໄປສູ່ວິທີແກ້ໄຂບັນຫາດ້ວຍທາງເລືອກ ຫລາຍທາງ

ການສົນທະນາຂ້າງເທິງໄດ້ນຳສະເຫນີສາມທັດສະນະຄະຕິຕໍ່ບົດບາດຂອງເດັກ ແລະ ໄວລຸ້ນໃນການພັດທະນາ ຕາມທີ່ສາມາດເລືອກເຟັ້ນໄດ້ຈາກບັນດາວິທີແກ້ໄຂ ທີ່ມີໃນປະຈຸບັນສຳລັບບັນຫາການຄ້າມະນຸດ ແລະ/ຫລື ແຮງງານເດັກອົບພະຍົບຈາກລາວໄປໄທ. ເຖິງວ່າທັດສະນະຄະຕິທັງສາມນັ້ນອາດພົບເຫັນໄດ້ຢູ່ໃນລາວ ໃນລະດັບທີ່ແຕກຕ່າງກັນ, ພາບຂອງເດັກນ້ອຍ ແລະ ໄວລຸ້ນລາວທີ່ເຮັດວຽກຢູ່ໃນປະເທດໄທທີ່ຄົນສ່ວນໃຫຍ່ມັກສຳນຶກເຫັນ ຍັງເປັນພາບຂອງຜູ້ເຄາະຮ້າຍຈາກການຄ້າມະນຸດ, ເຊິ່ງສ່ວນຫລາຍເປັນພາບຂອງຜູ້ເຄາະຮ້າຍ ທີ່ພົວພັນກັບອຸດສາຫະກຳການຄ້າປະເວນີຂອງໄທ. ດັ່ງນັ້ນ ທັດສະນະຄະຕິທີ່ວ່າເດັກ ແລະ ໄວລຸ້ນແມ່ນຜູ້ເຄາະຮ້າຍ ຂອງການພັດທະນາເປັນເຫຍື່ອທີ່ບໍ່ມີສິດສຽງອັນໃດຂອງການພັດທະນາຈຶ່ງເປັນທີ່ຮັບຮູ້ໃນສັງຄົມຢ່າງກ້ວາງຂວາງ.

---

*ແຮງງານອົບພະຍົບທີ່ມີອາຍຸຕ່ຳກ່ວາ 18 ປີ ສ່ວນໃຫຍ່ເລືອກທີ່ຈະເຮັດວຽກທີ່ພວກເຂົາເຮັດໃນປະເທດໄທຕໍ່ໄປແທນທີ່ຈະກັບຄືນບ້ານເກີດເມືອງນອນຂອງຕົນ*

---

ໃນແງ່ທີ່ວ່າສິ່ງດັ່ງກ່າວແມ່ນຫມາຍເຖິງການລິງມືປະຕິບັດທີ່ຮີບດ່ວນ ແລະ ຫນັກແຫນ້ນເພື່ອແກ້ໄຂບັນຫາການຂູດຮີດແຮງງານເດັກໃນຮູບແບບທີ່ໂຫດຮ້າຍ ແລະ ຮັບຮູ້ໄດ້ວ່າເປັນກໍລະນີຈະແຈ້ງທີ່ສຸດ, ດັ່ງທີ່ໄດ້ລະບຸໄວ້ໃນສົນທິສັນຍາຂອງອົງການແຮງງານສາກົນ 182 ເປັນຕົວຢ່າງ, ແນວຄວາມຄິດ

ດັ່ງກ່າວອາດຈະຄວນຖືກຍົກເວັ້ນໃນການຖືກວິຈານໃນຕໍ່ໆໄປ. ການມອງເຫັນເດັກ ແລະ ໄວລຸ້ນເປັນ ຜູ້ ທີ່ໄດ້ຮັບຜົກກະທົບຈາກການພັດທະນາ ອາດຈະຊ່ວຍສ້າງບັນດາມາດຕາການການປ້ອງກັນ ເພື່ອຍຸດຕິເດັກ ແລະ ໄວລຸ້ນບໍ່ໃຫ້ຕົກເປັນເຫຍື່ອຂອງການ ຖືກກົດຂີ່ຂູດຮີດ ແລະ ການຖືກທຳຮ້າຍ ທາລຸນໄດ້.

ເຖິງຢ່າງໃດກໍ່ຕາມ, ມາຮອດດຽວນີ້ມີການສຳຫລວດທີ່ເພີ່ມຂຶ້ນ ເຊິ່ງການສຳຫລວດນັ້ນໄດ້ສັງເກດເຫັນ ວ່າໃນເກືອບທຸກກໍລະນີ, ມັນບໍ່ແມ່ນວຽກທີ່ຜູ້ອົບພະຍົບເຮັດ ທີ່ນຳໄປສູ່ການທີ່ພວກເຂົາຖືກໃຊ້ ເພື່ອຫາຜົນປະໂຫຍດ, ແຕ່ ແມ່ນຖານະທີ່ເປັນຮອງ ແລະ ບໍ່ມີສິດອຳນາດຂອງແຮງງານຫນຸ່ມນ້ອຍ. ຮູບແບບຂອງການກົດຂີ່ຂູດຮີດທີ່ຈະກ່າວ ຕໍ່ໄປນີ້ແມ່ນເປັນຮູບແບບທີ່ມີຫລາຍທີ່ສຸດ: ການຈ່າຍເງິນ ເດືອນຊ້າ ຫລື ບໍ່ຈ່າຍເງິນ ເດືອນເລີຍ, ເຮັດວຽກຫລາຍ ຊົ່ວໂມງ, ແລະ ການທີ່ນາຍຈ້າງ ແລະ ຕຳຫລວດເຮັດບໍ່ດີນຳ (SCUK et al, 2004). ນອກຈາກນັ້ນ, ບົດສຶກສາຫລາຍໆບົດໄດ້ສັງເກດ ເຫັນວ່າແຮງງານອົບພະຍົບທີ່ມີອາຍຸຕ່ຳກ່ວາ 18 ປີ ສ່ວນໃຫຍ່ ມີປະສົບການໃນແງ່ດີກ່ຽວກັບ ການຍົກ ຍ້າຍຖິ່ນຖານ, ແລະ ເຖິງ ແມ່ນວ່າຈະມີຫລາຍຮູບແບບຂອງການກົດຂີ່ຂູດຮີດກໍຕາມ, ພວກເຂົາ ເລືອກທີ່ຈະເຮັດວຽກທີ່ພວກເຂົາເຮັດໃນປະເທດໄທຕໍ່ໄປ ແທນທີ່ຈະກັບຄືນບ້ານເກີດເມືອງນອນຂອງ ຕົນ (Ginzburg, 2004).

ການສັງເກດການທີ່ຄ້າຍຄືກັນຍັງມາຈາກການສຶກສາໃນຂອບເຂດທີ່ແຕກຕ່າງກັນ ເຊິ່ງການສຶກ ສາ ເຫລົ່ານັ້ນໄດ້ຄົ້ນຄ້ວາການນຳໃຊ້ຄຳວ່າ 'ການຄ້າມະນຸດ' ຢ່າງບໍ່ລະມັດລະວັງ ກັບຜູ້ທີ່ມີອາຍຸຕ່ຳກ່ວາ 18 ປີທີ່ເຮັດວຽກຢູ່ຕ່າງແດນ (Bastia, 2005; Whitehead & Hashim, 2005). ເຖິງຢ່າງໃດ ກໍ່ຕາມ, ຄວາມພະຍາຍາມທີ່ຈະເພີ່ມເຕີມມຸມມອງທີ່ແຕກຕ່າງ ໃສ່ການສົນທະນາໂຕ້ຖຽງໃນຫົວຂໍ້ ຂອງການຄ້າມະນຸດ ເບິ່ງໄປແລ້ວຄືກັບການລອຍຕ້ານກະແສນ້ຳທີ່ໄຫລແຮງ. ໂຄງການ ແລະ ການຄົ້ນຄ້ວາກ່ຽວກັບການຕໍ່ຕ້ານການຄ້າມະນຸດ ໄດ້ເກີດຂຶ້ນຢ່າງຫລວງຫລາຍປານດອກເຫັດ ຢູ່ໃນ ທົ່ວໂລກໃນທົດສະຫວັດທີ່ຜ່ານມາ (Laczko, 2005), ແລະ ຢູ່ໃນ ສປປ ລາວໃນໄລຍະ ຫ້າປີທີ່ຜ່ານມາ (Molland, 2005). ສິ່ງນີ້ບໍ່ພຽງແຕ່ນຳໄປສູ່ການເພີ່ມຂຶ້ນຂອງຄວາມຮູ້ເພື່ອ ນຳໃຊ້ເຂົ້າໄປແກ້ໄຂບັນຫາການຄ້າມະນຸດ, ແຕ່ຍັງໄດ້ປະກອບສ່ວນໃຫ້ທັດສະນະຄະຕິຂອງ ການຄ້າ ມະນຸດ ກາຍເປັນຮູບແບບຕົ້ນຕໍຂອງການເຄື່ອນຍ້າຍຂອງແຮງງານທີ່ມີອາຍຸຕ່ຳກ່ວາ 18 ປີ. ການ ສ້າງຕັ້ງໂຄງການເຄືອຄ່າຍຕ້ານການຄ້າມະນຸດຂອງສະ ຫະປະຊາຊາດໃນອະນຸພາກພື້ນ ລຸ່ມແມ່ ນ້ຳຂອງ, ແລະ ການສ້າງຕັ້ງຄະນະກຳມະການແຫ່ງຊາດ ລາວເພື່ອຕ້ານການຄ້າມະນຸດ, ບວກກັບ ການລິເລີ່ມກິດຈະກຳຕ່າງໆຂອງອົງການທີ່ບໍ່ຂຶ້ນກັບລັດຖະບານ ເຊັ່ນການຖ່າຍທອດລະຄອນ ກ່ຽວກັບການຄ້າມະນຸດທາງໂທລະພາບ, ໄດ້ປະກອບ ສ່ວນຕື່ມໃສ່ຜົນທີ່ໄດ້ຮັບທັງສອງຢ່າງນີ້.

ສິ່ງນີ້ໄດ້ສ້າງສະພາບການ ເຊິ່ງໃນນັ້ນຊ່ອງທາງທີ່ຈະແກ້ໄຂບັນຫາການເຄື່ອນຍ້າຍແຮງ ງານເດັກທີ່ ບໍ່ແມ່ນໃນຮູບແບບການຄ້າມະນຸດ ແມ່ນແຄບທີ່ສຸດ (Whitehead & Hashim, 2005). ຄວາມຈິງທີ່ວ່າການທຳຮ້າຍທາລຸນໃນກໍລະນີທີ່ໂຫດຮ້າຍທີ່ສຸດໄດ້ເກີດຂຶ້ນ ຕົວຈິງ ບໍ່ຄວນຖືກລືມ, ແລະ ສິ່ງນີ້ເຮັດໃຫ້ການຊອກຫາຊ່ອງທາງ ແລະ ໂອກາດເປັນສິ່ງທີ່ຍາກຫລາຍ (Caoutte, 2001; Beesey, 2004; UNICEF & MoLSW, 2004). ບົດຄົ້ນຄວ້າຫລາຍໆບົດທີ່ໄດ້ບັນທຶກ

ກ່ຽວກັບການກົດຂີ່ຂູດຮີດຜູ້ແຮງງານ ລາວທີ່ອາຍຸຍັງນ້ອຍຢູ່ໃນປະເທດໄທ ສະແດງໃຫ້ເຫັນວ່າການທຳຮ້າຍທາລຸນ ແລະ ກົດຂີ່ຂູດ ຮີດຜູ້ອອກແຮງງານອົບພະຍົບ ແມ່ນມີຄວາມຈິງແທ້. ເຖິງຢ່າງໃດກໍ່ຕາມ, ທ່ານ Jenks (1996), ຜູ້ທີ່ຂຽນກ່ຽວກັບການທາລຸນເດັກໃນປະເທດຕາເວັນຕົກ, ໄດ້ໂຕ້ແຍ້ງວ່າ ໃນຂະນະທີ່ 'ການທຳຮ້າຍທາລຸນເດັກແມ່ນມີຈິງ... ມັນຫຍຸບເທົ່າກັບກົນໄກໃນການກຳນົດເອົາຄວາມຈິງ'. ທ່ານ Jenks ໃຫ້ຄຳເຫັນຕໍ່ກັບວິທີແກ້ໄຂທີ່ຍຶດໝັ້ນຄະຕິທີ່ວ່າ 'ປອດໄພໄວ້ກ່ອນດີກ່ວາເສຍໃຈພາຍຫລັງ', ເຊິ່ງຖືເອົາເດັກນ້ອຍທີ່ອາດຈະຖືກທາລຸນ ເປັນເດັກນ້ອຍທີ່ຖືກທາລຸນມາແລ້ວ. ທ່ານຊີ້ແຈງວ່າການກ່າວເຖິງການທາລຸນເດັກນ້ອຍທີ່ເພີ່ມຂຶ້ນ ແມ່ນການຕອບຮັບກັບສະພາບປະຈຸບັນທີ່ວ່າ ຄວາມຊົງຈຳໃນອະດີດ ແລະ ຄວາມຄິດຮອດບ້ານເກີດເມືອງນອນຂອງເດັກນ້ອຍໄດ້ຖືກຮັກ ສາໄວ້ ພາຍຫລັງ "ຄວາມເຈັບປວດທີ່ໄດ້ຮັບຈາກການສູນເສຍຄວາມເປັນຕົວຂອງຕົວເອງ ແລະ ເອກະລັກທາງສັງຄົມຂອງພວກເຮົາ" ຢູ່ໃນສັງຄົມທີ່ມີການປ່ຽນແປງຢ່າງຫລວງຫລາຍ. ຄວາມເຫັນຂອງທ່ານ Jenks ຈະມີສ່ວນກ່ຽວຂ້ອງກັບສະພາບຂອງ ສປປ ລາວແນວໃດນັ້ນແມ່ນສາມາດນຳມາປຶກສາຫາລື ກັນຕື່ມ. ເຖິງຢ່າງໃດກໍ່ຕາມ, ດ້ວຍສາມທັດສະນະຄະຕິທີ່ເປັນທາງເລືອກກ່ຽວກັບການອົບພະຍົບຂອງແຮງງານເດັກ/ການຄ້າມະນຸດ ທີ່ໄດ້ນຳສະເໜີໃນເອກະສານນີ້, ການສັງເກດການດັ່ງກ່າວມີຈຸດປະສົງທີ່ຈະຈຸດປະກາຍຄວາມຄິດ ແລະ ການຄົ້ນຄ້ວາໃຫ້ມີຫລາຍຂຶ້ນ ແລະ ກ້ວາງໄກອອກໄປ. ການຄົ້ນຄິດທີ່ກ້ວາງໄກອອກໄປ ແລະ ແນວຄວາມຄິດໃໝ່ໆກຳລັງເປັນທີ່ຕ້ອງການຢ່າງຮີບດ່ວນເພື່ອທີ່ຈະເຂົ້າໃຈຕໍ່ກັບຄວາມເປັນຈິງ ແລະ ການຕີຄວາມ ໝາຍອັນຫລາກຫລາຍ ຂອງບັນຫາທີ່ພົວພັນກັບການເຄື່ອນຍ້າຍຂອງແຮງງານ ແລະ ການຄ້າມະນຸດທີ່ລວມທັງເດັກນ້ອຍ, ເພື່ອທີ່ຈະສາມາດສ້າງຄວາມດຸ່ນດ່ຽງຢ່າງຮັບຜິດຊອບໃຫ້ກັບຄວາມຄິດເຫັນຕໍ່ກັບບັນຫານີ້ ເຊິ່ງເປັນຄວາມຄິດເຫັນທີ່ແຕກຕ່າງ ແລະ ຂັດແຍ້ງກັນ.

Roy Huijsmans (r.b.huijsmans@durham.ac.uk) ເປັນນັກສຶກສາປະລິນຍາເອກຢູ່ຄະນະພູມສາດ, ມະຫາວິທະຍາໄລ Durham, ປະເທດອັງກິດ. ພາຍຫລັງການເຮັດວຽກຫລາຍປີ ໃນຂົງເຂດການສຶກສາ ແລະ ການພັດທະນາໃນຫລາຍໆປະເທດໃນທະວີບອາຟຣິກາ ແລະ ອາຊີ, ຜູ້ຂຽນກຳລັງສຶກສາກ່ຽວກັບຊີວິດໃນໄວເດັກໃນສັງຄົມລາວໃນປະຈຸບັນ, ໂດຍເຈາະຈົງສະເພາະໃສ່ບົດ ບາດ ແລະ ຈຸດຢືນທີ່ປ່ຽນແປງຂອງວຽກງານໃນຊີວິດຂອງຊາວໜຸ່ມລາວຢູ່ຊົນນະບົດ.

## ເອກະສານອ້າງອີງ

Asis, M. M. B. 2006. "Living with Migration: Experiences of Left-Behind Children in the Philippines". *Asian Population Studies* 2(1).

Baker, S. 1998. 'Child Labour' the State of Play: A case study of Changwat Khon Kaen. Unpublished PhD thesis, Department of Demography, Australian National University. Canberra.

Bastia, T. 2005. "Child Trafficking or Teenage Migration? Bolivian migrants in Argentina." *International Migratio*n 43(4).

Beesey, A. 2004. *From Lao PDR to Thailand and Home Again: The Repatriation of Trafficking Victims and Other Exploited Women and Girl Workers* (a study of 124

cases). International Organisation for Migration. Bangkok.

Bourdillon, M. F. C. 2004. “Children in Development”. Progress in Development Studies 4(2).

Boyden, J., Ling, B. & Myers, W. 1998. *What Works for Working Children*. Rädda Barnen and UNICEF ICDC. Stockholm & Florence.

Bunnag, S. 2005. “Poor grades led students to suicide: unable to match his family’s expectations”. *Bangkok Post*, 14th October, 2005.

Busza, J., Castle, S. & Diarra, A. 2004. “Trafficking and Health.” *British Medical Journal* 328.

Caoutte, T. M. 2001. *Small Dreams Beyond Reach: The Lives of Migrant Children and Youth Along the Borders of China, Myanmar and Thailand*. Save the Children UK.

Castles, S. & Kosack, G. 1973. *Immigrant Workers and Class Structure in Western Europe*. Oxford University Press. London.

Cohen, R. 1987. *The New Helots: Migrants in the International Division of Labour*. Gower. Aldershot.

Ennew, J., Myers, W. & Plateau, D.P. 2005. “Defining Child Labor as if Human Rights Really Matter”. In *Child Labor and Human Rights: Making Children Matter*. B. H. Weston (ed). Lynne Rienner Publishers. Colorado & London.

Ginzburg, O. 2004. *Lessons Learnt Through TRACE: Human Trafficking from Laos to Thailand* (Draft Report). UNIAP, UNICEF, Lao Ministry of Labour and Social Welfare. Bangkok.

ILO & SCUK. 2005. *Mekong Children’s Forum on Human Trafficking: Making History - People, Process and Participation*. International Labour Organisation and Save the Children UK. Bangkok.

James, A. & Prout, A. 1997. (eds) *Constructing and Reconstructing Childhood: Contemporary Issues in the Sociological Study of Childhood* (2nd edition). Routledge Falmer. London & New York.

Jenks, C. 1996. *Childhood*. Routledge. London & New York.

Koning, J. 1997. *Generations of Change: A Javanese village in the 1990s*. PhD thesis, Faculteit der Politieke en Sociaal-Culturele Wetenschappen, University of Amsterdam.

Kwankhom, A. 2006. “Violence against Students a National Problem: Study”. *The Nation*, 18th November, 2006. Bangkok.

Laczko, F. 2005. “Data and Research on Human Trafficking.” *International Migration* 43 (1/2).

Long, N. 2001. *Development Sociology: Actor Perspectives*. Routledge. London.

Massey, D. S., Arango, J. Hugo, G., Kouaouci, A., Pellegrino, A. & Taylor, J.E. 1993.

"Theories of International Migration: A Review and Appraisal". *Population and Development Review* 19(3).

Molland, S. 2005. "Human Trafficking and Poverty Reduction: Two Sides of the Same Coin?" *Juth Pakai* (4).

MoLSW & ILO-IPEC/TICW. 2003. *Labour Migration Survey 2003*. Ministry of Labour and Social Welfare. Vientiane.

Muntarbhorn, V. 2005. *The Mekong Challenge. Employment and Protection of Migrant Workers in Thailand: National Laws/Practices versus International Labour Standards?* ILO. Bangkok.

O'Connell-Davidson, J. 2005. *Children in the Global Sex Trade*. Polity Press. Cambridge (UK)/Malden (US).

Phetsiriseng, I. 2001. *Preliminary Assessment on Trafficking of Children and Women for Labour Exploitation in the Lao PDR*. ILO-IPEC/TICW, PADETC & MoLSW. Vientiane.

Piore, M. J. 1979. *Birds of Passage*. Cambridge University Press.

Qvortrup, J. 2004. "Editorial: The Waiting Child". *Childhood* 11(3).

Qvortrup, J. 2005. (ed) *Studies in Modern Childhood: Society, Agency, Culture*. Palgrave MacMillan. Basingstoke.

Rigg, J. 2003. *South-East Asia: The Human Landscape of Modernization and Development*. Routledge. London & New York.

Rigg, J., Bouahom, B. & Douangsavanh, L. 2004. "Money, Moral, and Markets: Evolving Rural Labour Markets in Thailand and the Lao PDR". *Environment and Planning* A 36(6).

Sassen, S. 1999. *Guests and Aliens*. The New Press. New York.

SCUK, LYU & MoLSW 2004. *Migrant Children and Youth in the Lao PDR: Migration along the Border of Thailand*. Save the Children UK, Lao Youth Union, MoLSW. Vientiane.

Thammavongsa, P. 2006. "Permit system vital to control migration". *Vientiane Times*, 16/1/06.

UNICEF. 2005. *The State of the World's Children 2006: Excluded and Invisible*. New York.

UNICEF & MoLSW. 2004. *Broken Promises, Shattered Dreams: A Profile of Child Trafficking in the Lao PDR*. Vientiane.

Vientiane Times. 2005. "Laos to Export Legal Labour to Thailand". *Vientiane Times*, 5th August, 2005.

Whitehead, A. & I. Hashim. 2005. *Children and Migration*. Background paper for DFID migration team. UK Department for International Development. London.

Wille, C. 2001. *Thailand-Lao People's Democratic Republic and Thailand-Myanmar Border Areas, Trafficking in Children into the Worst Forms of Child Labour: A Rapid Assessment.* ILO-IPEC. Geneva.

Williams, P. 1999. (ed) *Illegal Immigration and Commercial Sex: The New Slave Trade.* Frank Cass. London.

Wolf, D. 1992. *Factory Daughters: Gender, Household Dynamics, and Rural Industrialization in Java*. University of California Press.

# ລະຫວ່າງເພດຍິງ ແລະ ເພດຊາຍ, ບໍ່ວ່າຖານະດີ ຫລື ຂາດເຂີນໄດ້ຮັບຜົນປະໂຫຍດເທົ່າທຽມກັນບໍ່? ກໍລະນີສຶກສາທາງດ້ານຊຸມຊົນ ແລະ ຄວາມສະເຫມີພາບທາງເພດໃນໂຄງການພັດທະນາຊົນນະບົດທີ່ໄດ້ຮັບການຊ່ວຍເຫລືອຈາກສາກົນໃນລາວ

ໂດຍ Sisavanh Phanouvong and Masaaki Yamada

*ງານວິໄຈສະບັບນີ້ຄົ້ນຄ້ວາເຖິງສະພາບເສດຖະກິດ-ສັງຄົມ ແລະ ຄວາມສະເຫມີພາບທາງເພດໃນການພັດທະນາເຂດຊົນນະບົດ ໂດຍໄດ້ຄັດເລືອກເອົາໂຄງການການຊ່ວຍເຫລືອ ຂອງຕ່າງປະເທດແຫ່ງຫນຶ່ງເປັນກໍລະນີສຶກສາເພື່ອໃຫ້ເຂົ້າໃຈແຈ້ງຕໍ່ກັບຄວາມແຕກຕ່າງໃນການແຈກຢາຍຜົນປະໂຫຍດ ຕໍ່ກັບຊຸມຊົນຈາກການຈັດຕັ້ງປະຕິບັດຂອງໂຄງການ. ຜົນຂອງການສຶກສາ ສະແດງໃຫ້ເຫັນວ່າ ປະຊາຊົນໃນທຸກຊົນຊັ້ນ ທັງຍິງ ແລະ ຊາຍໄດ້ຮັບຜົນປະໂຫຍດຈາກໂຄງການ: ລາຍຮັບຂອງຄອບຄົວໄດ້ເພີ່ມຂຶ້ນ ແລະ ຈຳນວນຫນ້າວຽກຫລຸດລົງຫລາຍພໍສົມຄວນ ໃນໄລຍະສິບປີຂອງໂຄງການ. ເຖິງຢ່າງໃດກໍ່ຕາມ, ບັນດາຄອບຄົວທີ່ມີຖານະດີ ໄດ້ນຳໃຊ້ການບໍລິການຂອງໂຄງການ ໄດ້ຫລາຍກ່ວາຄອບຄົວທີ່ມີຖານະຂາດແຄນ ທີ່ມີເນື້ອທີ່ດິນທຳການຜະລິດທີ່ຈຳກັດ. ນອກຈາກນັ້ນ, ຊົ່ວໂມງເຮັດວຽກຂອງຜູ້ຊາຍກໍ່ສັ້ນລົງຫລາຍ ກ່ວາຊົ່ວໂມງເຮັດວຽກຂອງຜູ້ຍິງ, ຊຶ່ງສົ່ງຜົນໃຫ້ຄວາມແຕກຕ່າງລະຫວ່າງຊົ່ວໂມງເຮັດວຽກຂອງຜູ້ຍິງ ແລະຜູ້ຊາຍເພີ່ມຂຶ້ນ. ຜົນຂອງການສຶກສານີ້ສະຫລຸບໄດ້ວ່າ ເພື່ອໃຫ້ການແຈກຢາຍ ຜົນປະໂຫຍດໃນຊຸມຊົນມີຄວາມເທົ່າທຽມຍິ່ງຂຶ້ນ, ມາດຕາການທີ່ແນ່ນອນ ແລະ ຊັດເຈນ ແມ່ນເປັນທີ່ຕ້ອງການ ໂດຍໃຫ້ຊຸມຊົນມີບົດບາດໃນການເຂົ້າຮ່ວມໃນທຸກຂະບວນການຂອງໂຄງການ.*

## ພາກສະເຫນີ

ສັງຄົມທີ່ແຕກຕ່າງກັນ, ຄວາມບໍ່ເທົ່າທຽມກັນສາມາດສັງເກດໄດ້ໃນຄວາມແຕກຕ່າງ ທາງດ້ານເສລີພາບດ້ານການເງິນທີ່ຫລາຍໆຄົນມີຢູ່, ແລະ ຄວາມບໍ່ເທົ່າທຽມກັນນີ້ແມ່ນບໍ່ພຽງແຕ່ອີງໃສ່ລາຍຮັບ ແລະ ຊັບສິນພຽງແຕ່ຢ່າງດຽວ (Ahmed & Laarman, 2000). ຄວາມຜິດດ່ຽງທາງດ້ານສັງຄົມ ແລະ ເພດໃນການພັດທະນາເສດຖະກິດເປັນທີ່ສັງເກດເຫັນໄດ້ໂດຍທົ່ວໄປໃນບັນດາປະເທດທີ່ກຳລັງພັດທະນ, ລວມທັງປະເທດລາວ.

ການພັດທະນາເສດຖະກິດຢູ່ລາວໃນໄລຍະສາມທົດສະວັດທີ່ຜ່ານມາ (ແຕ່ຊຸມປີ 1970 ຖິງ 1990) ໄດ້ສົ່ງຜົນໃຫ້ນັກວາງແຜນພັດທະນາ ແລະ ນັກຄົ້ນຄ້ວາຕ້ອງໄດ້ທົບທວນຄືນຢ່າງລະອຽດຕໍ່ກັບບັນຫາຄວາມສະເຫມີພາບ. ອີງຕາມຂໍ້ມູນຈາກທະນາຄານພັດທະນາອາຊີ (ADB, 2001), ການເຕີບໃຫຍ່ຂອງເສດຖະກິດຂອງປະເທດລາວບໍ່ທັນໄດ້ປະກອບສ່ວນເຂົ້າໃນການຫລຸດຜ່ອນຄວາມ ທຸກຍາກຢ່າງເຕັມເມັດເຕັມຫນ່ວຍເທື່ອ, ແລະ ບາງຜົນກະທົບດ້ານບວກຂອງການເຕີບໃຫຍ່ ດັ່ງກ່າວຍິ່ງສົ່ງຜົນ

ໃຫ້ຄວາມບໍ່ສະເໝີພາບສູງຂື້ນ. ອາດເວົ້າໄດ້ວ່າລະດັບຄວາມບໍ່ສະເໝີພາບໃນລາວຍັງຕໍ່າກ່ວາບັນດາປະເທດອ້ອມຂ້າງເຊັ່ນ ປະເທດໄທ.

ໃນໄລຍະທົດສະວັດທີ່ຜ່ານມາ, ບັນດາໂຄງການການພັດທະນາຊົນນະບົດໃນລາວເຫັນໄດ້ເຖິງຄວາມສໍາຄັນ ແລະ ນໍາເອົາປັດໄຈດັ່ງກ່າວປະສົມປະສານກັນໃນການຫລຸດຜ່ອນຄວາມທຸກຍາກ. ລາວໄດ້ຮັບຫລາຍ ໂຄງການຊ່ວຍເຫລືອທາງດ້ານການເງິນ ແລະ ເຕັກນິກ, ທັງການຊ່ວຍເຫລືອລ້າ ແລະ ໃຫ້ເງິນກູ້ຢືມ, ຈາກບັນດາປະເທດຕ່າງໆ ແລະ ອົງການທີ່ບໍ່ຂື້ນກັບລັດຖະບານ. ເຖິງຢ່າງໃດກໍ່ຕາມ, ມັນຍັງບໍ່ທັນໄດ້ບັນລຸເປົ້າໝາຍທີ່ໄດ້ຄາດຫວັງໄວ້ຢ່າງເຕັມເມັດເຕັມໜ່ວຍເທື່ອ, ສ່ວນໜຶ່ງ ກໍ່ເປັນຍ້ອນຂາດ ຄວາມສົນໃຈຂອງຜູ້ທີ່ສ່ວນຮ່ວມໃນກິດຈະກໍາຂອງການພັດທະນາ ຊຶ່ງໄດ້ສົ່ງຜົນໃຫ້ມີຄວາມ ບໍ່ເທົ່າທຽມກັນຈາກການໄດ້ຮັບຜົນປະໂຫຍດ ຂອງໂຄງການຕໍ່ຜູ້ເຂົ້າຮ່ວມ.

ຈົນມາຮອດປະຈຸບັນນີ້, ການຍອມຮັບ ແລະ ການແກ້ໄຂບັນຫາຄວາມສະເໝີພາບໃນການພັດທະນາຊົນນະບົດໃນລາວ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ. ການແຈກຢາຍຜົນປະໂຫຍດຈາກການພັດທະນາເສດຖະກິດທີ່ບໍ່ເທົ່າທຽມກັນ ໄດ້ຖືກສັງເກດການໃນຊຸມຊົນຕົວເມືອງ ແລະ ຊຸມຊົນຊົນນະບົດ, ໃນກຸ່ມຄົນທີ່ຮັ່ງມີ ແລະ ທຸກຍາກ, ໃນເພດຍິງ ແລະ ເພດຊາຍ, ແລະ ໃນບັນດາຊົນເຜົ່າ (ADB, 2001; UNDP, 2001). ຄວາມຈໍາເປັນທີ່ຈະຕ້ອງໄດ້ແກ້ໄຂຄວາມບໍ່ສະເໝີພາບເຫລົ່ານີ້ ໄດ້ຮັບຮູ້ໂດຍລັດຖະບານທີ່ໄດ້ລະບຸໃນແຜນຍຸດທະສາດການຫລຸດຜ່ອນຄວາມທຸກຍາກໄປຄຽງຄູ່ກັບການຮັບປະກັນວ່າທຸກໆຄົນຈະໄດ້ ຮັບຜົນປະໂຫຍດທີ່ເທົ່າທຽມກັນ (CPC, 2003). ເຖິງຢ່າງໃດກໍ່ຕາມ, ການສຶກສາທີ່ລະອຽດແມ່ນມີຄວາມຈໍາເປັນເພື່ອໃຫ້ເຂົ້າໃຈຈະແຈ້ງຕໍ່ແຜນຍຸດທະສາດດັ່ງກ່າວຂອງລັດຖະບານທີ່ໄດ້ຖືກນໍາໄປປະຕິບັດໃນລະດັບທ້ອງຖິ່ນ.

## ບັນດາໜ້າວຽກຂອງສູນພັດທະນາ ແລະ ບໍລິການກະສິກໍາຫ້ວຍຊອນ-ຫ້ວຍຊົ້ວາ ແລະ ບັນຫາກ່ຽວກັບຄວາມສະເໝີພາບດ້ານສັງຄົມ ແລະ ບົດບາດຍິງຊາຍ

ສູນພັດທະນາ ແລະ ບໍລິການກະສິກໍາ ຫ້ວຍຊອນ-ຫ້ວຍຊົ້ວາ (The Huay SoneHuay Sua Agricultural Development and Service Centre ຫລື ໂຄງການ ADSC) ເລີ່ມຕົ້ນວຽກງານໃນປີ1994 ພາຍໃຕ້ການສະໜັບ ສະໜູນຂອງລັດຖະບານລາວ ແລະ ການຊ່ວຍເຫລືອທາງດ້ານການເງິນຈາກເຈົ້າຊີວິດຂອງປະເທດໄທຜ່ານມູນນິທິໄຊພັດທະນາ. ADSC ໄດ້ເນັ້ນໃສ່ລະບົບການປູກຝັງ ແບບປະສົມປະສານ ໃຫ້ເໝາະສົມ ກັບເງື່ອນໄຂຂອງທ້ອງຖິ່ນ, ແລະ ເພື່ອສ້າງສູນນີ້ໃຫ້ເປັນສູນແບບຢ່າງ/ສູນສາທິດສໍາລັບຊາວກະສິກອນທ້ອງຖິ່ນ ແລະ ຜູ້ທີ່ມາຈາກເຂດອື່ນ. ໂຄງການປະກອບດ້ວຍເຈັດພາກ ສ່ວນຫລັກ: 1) ການພັດທະນາພື້ນຖານໂຄງລ່າງ, 2) ການພັດທະນາ ຊັບພະຍາກອນນໍ້າ, 3) ກິດຈະກໍາດ້ານກະສິກໍາ, 4) ການພັດທະນາທີ່ດິນ, 5) ການລ້ຽງສັດ, 6) ການປະມົງ, ແລະ 7) ການຝຶກອົບຮົມ.

ການນໍາໃຊ້ເຕັກນິກດ້ານກະສິກໍາທີ່ທັນສະໄໝໄດ້ເນັ້ນໃສ່ການປູກເຂົ້າ, ການປັບປຸງດິນ, ການລ້ຽງສັດ ແລະ ການຂະຫຍາຍພັນປາ. ເພື່ອທີ່ຈະອໍານວຍຄວາມສະດວກໃນການດໍາເນີນກິດຈະກໍາ

ຕ່າງໆ ຂອງໂຄງການ, ໄດ້ມີການກໍ່ສ້າງໂຄງລ່າງພື້ນຖານເຊັ່ນ: ຖະໜົນປູຢາງ, ໄຟຟ້າ, ນ້ຳບາດານ, ໜອງປາ, ແລະ ລະບົບຊົນລະປະທານໃນທ້ອງຖິ່ນ. ໂຄງການໄດ້ກວມເອົາຫ້າໝູ່ບ້ານໃນເບື້ອງຕົ້ນ ແລະ ໄດ້ຂະຫຍາຍຕື່ມອີກສີ່ບ້ານໃນປີ 1999.

ຄວາມສະເໝີພາບດ້ານສັງຄົມ ແລະ ບົດບາດຍິງ-ຊາຍພາຍໃນໂຄງການ ADSC ເປັນຫົວຂໍ້ທີ່ສະຫລັບສັບຊ້ອນ. ຈົນມາຮອດປະຈຸບັນ, ການປະເມີນຜົນໂຄງການ ໄດ້ຖືກຈັດຕັ້ງພຽງແຕ່ເທື່ອດຽວເພື່ອປະເມີນວ່າ ໂຄງການ ADSC ໄດ້ບັນລຸເປົ້າໝາຍຫຍັງແດ່ ແລະ ໄດ້ປັບປຸງສະພາບເສດຖະກິດ-ສັງຄົມຂອງຊາວບ້ານໄດ້ຄືແນວໃດ. ແຕ່ໃນການປະເມີນດັ່ງກ່າວ ບໍ່ໄດ້ພະຍາຍາມທີ່ຈະຈຳແນກ ເຖິງຄວາມແຕກຕ່າງກັນຂອງກຸ່ມຄົນໃນຊຸມຊົນ ຊຶ່ງໝາຍຄວາມວ່າເຈົ້າຂອງໂຄງການ ແລະ ພະນັກງານໂຄງການຍັງບໍ່ສາມາດເຫັນໄດ້ເຖິງຄວາມບໍ່ສະເໝີພາບກັນທີ່ໄດ້ຮັບຈາກໂຄງການ. ບັນຫາຄວາມຂາດແຄນທາງດ້ານຂໍ້ມູນນີ້ໄດ້ເປັນການກະຕຸ້ນໃຫ້ການຄົ້ນຄ້ວານີ້ເນັ້ນໜັກໃສ່ແມ່ຍິງ ແລະ ໝວດລາຍຮັບຕ່າງໆ.

## ຄຳຖາມຂອງການຄົ້ນຄ້ວາ, ຈຸດປະສົງ ແລະ ວິທີການສຶກສາ

ບົດຄົ້ນຄ້ວານີ້ໄດ້ສຳຫລວດສະພາບເສດຖະກິດ-ສັງຄົມ ແລະ ຄວາມສະເໝີພາບທາງເພດຕໍ່ຜົນປະໂຫຍດທີ່ໄດ້ຮັບຈາກໂຄງການ ຊຶ່ງໄດ້ເນັ້ນໃສ່ ວ່າໂຄງການໄດ້ສົ່ງຜົນຕໍ່ແຕ່ລະກຸ່ມຄົນ ໃນສາມຊຸມຊົນແນວໃດ. ຄຳຖາມຫລັກຂອງການຄົ້ນຄ້ວາແມ່ນ ທຸກໆຄົນໃນຊຸມຊົນນັ້ນໄດ້ມີຄວາມຫຍຸ້ງຍາກຄືກັນຫລືບໍ່ ແລະ ໄດ້ຮັບຜົນປະໂຫຍດເທົ່າທຽມກັນຫລືບໍ່ຈາກການຈັດຕັ້ງໂຄງການ. ຈຸດປະສົງທີ່ເຈາະຈົງແມ່ນເພື່ອທີ່ຈະ:

- ຈຳແນກປະລິມານຂອງການປ່ຽນແປງດ້ານເສດຖະກິດໃນກຸ່ມທີ່ມີຖານະເສດຖະກິດ-ສັງຄົມທີ່ແຕກຕ່າງກັນຂອງຊຸມຊົນໃນຊົນນະບົດ.
- ສະແດງໃຫ້ເຫັນເຖິງເວລາ ແລະ ໜ້າວຽກວຽກຂອງແມ່ຍິງໄດ້ປ່ຽນໄປແນວໃດເມື່ອປຽບທຽບໃສ່ຜູ້ຊາຍຢູ່ໃນທຸກໝູ່ບ້ານ.

ໄດ້ມີການນຳໃຊ້ຂໍ້ມູນມືໜຶ່ງ ແລະ ຂໍ້ມູນມືສອງຈາກບັນດາເອກະສານຕ່າງໆຈາກຫລາຍຂະແໜງການ. ການເກັບກຳຂໍ້ມູນມືໜຶ່ງແມ່ນໄດ້ລົງໄປເກັບກຳກັບຫ້ອງການຂອງໂຄງການ, ລວມທັງການສຶກສາພາກສະໜາມເປັນຈຳນວນຫລາຍຄັ້ງ. ໃນແຕ່ລະໝູ່ບ້ານ, ໄດ້ມີການນຳໃຊ້ວິທີການສຳຫລວດ ແບບ ມີສ່ວນຮ່ວມໃນຫລາຍຮູບແບບດ້ວຍກັນ: ວິທີການປະເມີນຜົນແບບມີສ່ວນຮ່ວມ (Methodology for Participatory Assessment ຫລື MPA) (Dayal et al, 2000; WSP and IRC, 2003), ການປະເມີນຊົນນະບົດມີສ່ວນຮ່ວມແບບເລັ່ງລັດ (Participatory Rural Appraisal) (FAO, 1997; Mallick et al, 2002), ແລະ ການວິໄຈແບບດຳລົງຊີວິດ (Livelihood Analysis) (Wilde, 2001; IFAD, 2003) ໄດ້ນຳໃຊ້ເຂົ້າໃນງານວິໄຈ. ເຕັກນິກທີ່ໄດ້ໃຊ້ ລວມມີ: ສຳພາດກຸ່ມຂໍ້ມູນຕົ້ນຕໍ, ສົນທະນານຳກຸ່ມເປົ້າໝາຍ, ສ້າງແຜນວາດທາງສັງຄົມ, ແລະ ການສຳຫລວດຄົວເຮືອນ. ນອກນັ້ນເຕັກນິກໃນແບບຄຸນະພາບ ອີກຫລາຍ ແບບເຊັ່ນ ການສັງເກດພາກ ສະໜາມ ແລະ ສອບຖາມໂດຍກົງກໍ່ໄດ້ຖືກນຳໃຊ້ເພື່ອກວດກາຄືນຂໍ້ມູນທີ່ໄດ້ມາ.

## ຕົວຢ່າງ ແລະ ການເກັບກຳຂໍ້ມູນພາກສະໜາມ

ບ້ານສາມບ້ານໄດ້ຖືກສຸ່ມເອົາຈາກເກົ້າບ້ານທີ່ກຳລັງໄດ້ຮັບການຊ່ວຍເຫລືອຈາກໂຄງການ. ໃນສາມບ້ານນັ້ນ, ສອງບ້ານ, ຄື ບ້ານນາຍາງ ແລະ ບ້ານນ້ຳກ້ຽງໃຕ້, ແມ່ນໄດ້ຮັບການຊ່ວຍເຫລືອ ຈາກໂຄງການຕັ້ງແຕ່ເລີ່ມຕົ້ນ ໂຄງການ(1994). ສ່ວນບ້ານທີສາມ, ບ້ານນາສັບ, ເຂົ້າຮ່ວມໂຄງການໃນປີ 1999. ທັງສາມບ້ານນັ້ນຕັ້ງຢູ່ຫ່າງຈາກນະຄອນຫລວງວຽງຈັນ 22 ກິໂລແມັດຂຶ້ນໄປທິດ ເໜືອ ແລະ ຈາກນະ ຄອນຫລວງກໍ່ສາມາດເຂົ້າໄປເຖິງໄດ້ໂດຍໃຊ້ເສັ້ນທາງຫລວງເລກທີ 13 ເໜືອ.

ຜ່ານກິດຈະກຳແບບມີສ່ວນຮ່ວມທີ່ປະຕິບັດຮ່ວມກັນໃນແຕ່ລະບ້ານ, ຊາວບ້ານໄດ້ຈັດຖານະຄອບຄົວຂອງຕົນອອກ ເປັນສາມກຸ່ມເຊັ່ນ: ດີ, ປານກາງ ແລະ ຂາດແຄນ. ໃນແຕ່ລະຖານະ ແມ່ນຈຳແນກໂດຍອີງໃສ່ຄວາມກຸ້ມກິນຂອງແຕ່ລະຄົວເຮືອນ ແລະ ຊັບສິນອື່ນໆອັນລວມມີ ດິນ, ສັດລ້ຽງ, ແລະ ລາຍຮັບທາງທຸລະກິດຂອງຄອບຄົວ. ພາຍຫລັງຂັ້ນຕອນການແບ່ງກຸ່ມ ຖານະແລ້ວ, ໄດ້ມີການຈັດການສົນທະນາກັບຜູ້ຕາງໜ້າຄອບຄົວ ທີ່ນອນຢູ່ໃນແຕ່ລະຖານະ. ນອກຈາກນັ້ນ, ຊາວບ້ານທີ່ຢູ່ໃນແຕ່ລະຖານະຍັງໄດ້ຖືກສຸ່ມເອົາເພື່ອມາສຳພາດກ່ຽວກັບສະພາບທາງດ້ານ ເສດຖະກິດ-ສັງຄົມຂອງຄອບຄົວຂອງຕົນເອງ. ເພື່ອປະເມີນເຖິງຄວາມສະເໝີພາບລະຫວ່າງຍິງ-ຊາຍ, ໄດ້ມີການຈັດໝວດສົນທະນາແຍກກັນລະຫວ່າງເພດຍິງ ແລະ ເພດຊາຍ. ເພດຍິງ ແລະ ເພດຊາຍສ່ວນໃຫຍ່ທີ່ເຂົ້າຮ່ວມມີອາຍຸລະຫວ່າງ 20 ຫາ 70 ປີ.

ທີມງານເກັບກຳຂໍ້ມູນພາກສະໜາມ, ປະກອບມີ 5 ຄົນ ເຊິ່ງແຕ່ລະຄົນມີປະສົບການ ໃນການນຳໃຊ້ວິທີເກັບກຳຂໍ້ມູນແບບມີສ່ວນຮ່ວມ ແລະ ຍັງເປັນສະມາຊິກໃນທີມງານຂອງ MPA ແຫ່ງຊາດນຳອີກ. ທີມງານພາກສະໜາມໄດ້ມີການທົບທວນຄືນເຖິງວິທີແບບມີສ່ວນຮ່ວມ ແລະ ແບບສອບຖາມກ່ອນທີ່ຈະລົງເກັບກຳຂໍ້ມູນພາກສະໜາມ. ການເກັບກຳຂໍ້ມູນພາກສະໜາມໄດ້ປະຕິບັດໃນວັນທີ 5-25 ເດືອນສິງຫາ ປີ 2003. ນອກຈາກນັ້ນ, ທີມງານຍັງໄດ້ໄປລົງຕິດຕາມ ADSC ແລະ ໄດ້ທຳການສັງເກດພາກສະໜາມ ແລະ ສຳພາດແບບສ່ວນບຸກຄົນ ກັບຜູ້ທີ່ມີຂໍ້ມູນຕົ້ນຕໍເພື່ອກວດກາ ເຖິງຄວາມເປັນໄປໄດ້ ແລະ ຄວາມຖືກຕ້ອງຂອງຂໍ້ມູນທີ່ໄດ້ຮັບກ່ອນໜ້ານັ້ນ.

## ຜົນຂອງການສຶກສາ ແລະ ການສົນທະນາ

ການນຳໃຊ້ການບໍລິການຂອງ ໂຄງການໂດຍຊາວບ້ານ ແລະ ຖານະເສດຖະກິດ-ສັງຄົມ

ການເຂົ້າເຖິງການບໍລິການທີ່ສະໜອງໂດຍໂຄງການໄດ້ກຳນົດໂດຍລະດັບຂອງການມີສ່ວນຮ່ວມຂອງຊາວບ້ານ ທີ່ມີຕໍ່ກັບກິດຈະກຳຕ່າງໆຂອງໂຄງການ. ການເຂົ້າຮ່ວມແມ່ນເກີດມາຈາກການຊຸກຍູ້ໂດຍກົງຈາກໂຄງການ ຫລື ຈາກຄວາມຕື່ນຕົວຂອງຊາວບ້ານເອງ. ການສຶກສາໄດ້ສະແດງໃຫ້ເຫັນວ່າໃນສາມບ້ານທີ່ໄດ້ສຶກສານັ້ນ ບໍ່ມີຊຸມຊົນໃດທີ່ໄດ້ນຳໃຊ້ການບໍລິການທັງໝົດຂອງໂຄງການຢ່າງເຕັມເມັດເຕັມໜ່ວຍ 100%. ການໃຫ້ບໍລິການລວມມີ ຊົນລະປະທານ, ການຝຶກອົບຮົມ, ການກູ້ຢືມຜົນຜະລິດກະສິກຳ (ເບ້ຍໄມ້, ລູກປາ, ໄກ່ ແລະ ອື່ນໆ). ກອງທຶນກູ້ຢືມແບບໝູນວຽນ, ໜອງປາ, ປັບປຸງລະບົບນ້ຳປະປາ ແລະ ອື່ນໆ. ລະດັບການນຳໃຊ້ໂດຍລວມຂອງບ້ານນາຍາງ, ບ້ານນ້ຳກ້ຽງໃຕ້

ແລະ  ບ້ານນາສັບແມ່ນ 78.2%, 62.9% ແລະ 48.8% ຕາມລຳດັບ.

ການນຳໃຊ້ການບໍລິການທີ່ສະໜອງໂດຍໂຄງການຍັງແຕກຕ່າງກັນໃນແຕ່ລະກຸ່ມຖານະ. ໃນທັງສາມບ້ານ, ຄອບຄົວທີ່ມີຖານະດີ ແລະ ປານກາງໄດ້ຊົມໃຊ້ຜົນປະໂຫຍດ ຈາກໂຄງ ການຫລາຍຢ່າງກ່ວາຄອບຄົວທີ່ຂາດເຂີນ. ໂດຍສະເພາະແມ່ນໃນບ້ານນາຍາງ, ອັດຕາການເຂົ້າເຖິງແມ່ນ 100%, 85% ແລະ 10% ສຳລັບຄອບຄົວຖານະດີ, ປານກາງ ແລະ ຂາດເຂີນຕາມລຳດັບ (ເສັ້ນສະແດງ 1). ຜົນໄດ້ຮັບໃນບ້ານນ້ຳກັ່ງໃຕ້ກໍ່ແມ່ນຄ້າຍຄືກັນ, ຄອບຄົວທີ່ຂາດ ເຂີນ ສາມາດ ຊົມໃຊ້ການບໍລິການຂອງໂຄງການໄດ້ໜ້ອຍກ່ວາຄອບຄົວທີ່ມີຖານະປານກາງ ແລະ ດີ.

<u>ເສັ້ນສະແດງ 1: ການນຳໃຊ້ການໃຫ້ບໍລິການຂອງໂຄງການ ຂອງແຕ່ລະກຸ່ມເສດຖະກິດ- ສັງ ຄົມ</u>




## ເສດຖະກິດຄົວເຮືອນ

ໃນອະດີດ, ຄ້າຍຄືກັນກັບບ້ານອື່ນໃນເຂດຊົນນະບົດຂອງລາວ, ການປູກຝັງເພື່ອບໍລິໂພກເປັນສິ່ງທີ່ສາມບ້ານນີ້ໄດ້ປະຕິບັດກັນມາ. ເຂົ້າ ແລະ ຜັກເກືອບທັງໝົດທີ່ຜະລິດໄດ້ແມ່ນໃຊ້ບໍລິໂພກໃນຄອບຄົວ. ເຄື່ອງມືການຜະລິດແບບປະຖົມປະຖານເຊັ່ນ ຈົກດ້າມໄມ້, ມີດ, ຊ້ວານ ແລະ ສັດລາກແກ່ແມ່ນ ໄດ້ຖືກນຳໃຊ້ເຂົ້າໃນການຜະລິດໂດຍທົ່ວໄປ. ນັບແຕ່ຊຸມປີ 1990 ເປັນຕົ້ນມາ, ໄດ້ມີການປ່ຽນແປງ ອັນສຳຄັນໃນລະບົບການຜະລິດຂອງສາມບ້ານນີ້. ບັນດາຄອບຄົວທີ່ມີຖານະດີໄດ້ເລີ່ມລົງທຶນຊື້ເຄື່ອງຈັກ ທີ່ໃຊ້ໃນການຜະລິດເຊັ່ນ ລົດໄຖນາເດີນຕາມ. ຜົນຈາກການສຳຫລວດ ຄອບຄົວໄດ້ສະແດງໃຫ້ເຫັນວ່າ ທຸກຄອບຄົວທີ່ຖືກຈັດປະເພດເປັນຖານະ 'ດີ', ແລະ ເກືອບ ທຸກຄອບຄົວທີ່ຢູ່ໃນປະເພດ 'ປານກາງ', ມີລົດໄຖນາເດີນຕາມຢ່າງ ໜ້ອຍໜຶ່ງຄັນ. ກົງກັນຂ້າມ, ຄອບຄົວ

ທີ່ຂາດເຂີນຍັງຄົງໃຊ້ເຄື່ອງມືແບບປະຖົມປະຖານ ເນື່ອງຈາກວ່າພວກເຂົາບໍ່ມີເງິນພໍທີ່ຈະຊື້ເຄື່ອງກົນຈັກ. ພືດທີ່ປູກຫລາຍກ່ວາໝູ່ໃນສາມບ້ານນັ້ນແມ່ນເຂົ້າ ແລະ ພວກເຂົາຍັງປູກພືດ ຜັກຫລາຍຊະນິດເປັນພືດສຳຮອງ. ການລ້ຽງສັດກໍ່ເປັນສິ່ງທີ່ສາມາດປັບປຸງຖານະເສດຖະກິດຂອງຄອບຄົວທີ່ຢູ່ໃນເຂດນີ້.

ຊາວບ້ານຍັງໄດ້ເຮັດວຽກອື່ນນອກເໜືອຈາກການສິກຳເຊັ່ນ: ທຸລະກິດຄອບຄົວ, ການເຮັດເຄື່ອງຫັດຖະກຳ, ແລະ ການຮັບຈ້າງໃຊ້ແຮງງານ. ເຖິງຢ່າງນັ້ນກໍ່ຕາມ, ບໍ່ໄດ້ມີຂໍ້ມູນເບື້ອງຕົ້ນ (ຂໍ້ມູນກ່ອນທີ່ຈະມີໂຄງການ) ເພື່ອທີ່ຈະປຽບທຽບການປ່ຽນແປງຂອງລາຍຮັບທີ່ໄດ້ມາຈາກໜ້າວຽກເຫລົ່ານັ້ນໃນໄລຍະກ່ອນ ແລະ ຫລັງໂຄງການຂອງແຕ່ລະຖານະຄອບຄົວ. ຊາວບ້ານຫລາຍໆຄົນໃຫ້ສຳພາດວ່າກ່ອນທີ່ຈະມີໂຄງການ ໂອກາດທີ່ຈະມີລາຍໄດ້ເພີ່ມນອກຈາກການເຮັດນາແມ່ນມີໜ້ອຍ ຍ້ອນຂອດຈຳກັດຂອງໂຄງລ່າງພື້ນຖານ ແລະ ການໃຊ້ຊີວິດແບບດັ້ງເດີມ ທີ່ເນັ້ນໃສ່ການລ້ຽງຊີບແບບ ພໍຢູ່ພໍກິນ. ຊາວບ້ານສ່ວນໃຫຍ່ແມ່ນອີງໃສ່ແຮງງານຂອງຄອບຄົວຕົນເອງເປັນຫລັກ, ແລະ ມີການຊ່ວຍເຫລືອເຊິ່ງກັນ ແລະ ກັນໃນລະດູການຜະລິດ. ນອກຈາກນັ້ນ, ວຽກງານຫັດຖະກຳຍັງ ບໍ່ທັນເປັນທີ່ນິຍົມຍ້ອນອຸປະສັກດ້ານການຕະຫລາດ. ດັ່ງນັ້ນ, ມັນສາມາດປະເມີນໄດ້ວ່າ ລາຍຮັບເສີມນອກເໜືອຈາກການເຮັດກະສິກຳແລ້ວ ແມ່ນມີໜ້ອຍໃນຊ່ວງກ່ອນທີ່ຈະມີໂຄງການ.

ໃນໄລຍະທີ່ທຳການສຳຫລວດພາກສະໜາມໃນປີ 2003 ນີ້, ໄດ້ມີທຸລະກິດຂອງຄອບຄົວຫລາຍໆປະເພດປະກົດຂຶ້ນຊຶ່ງລວມມີ ການແລ່ນລົດໂດຍສານແບບລົດຕູ້ໄປຮັບ-ສົ່ງນັກຮຽນ, ຜະລິດນ້ຳກ້ອນ, ຮ້ານຂາຍເຄື່ອງຍ່ອຍ ແລະ ອື່ນໆ. ທຸລະກິດເຫລົ່ານີ້ແມ່ນດຳເນີນໂດຍຄອບຄົວ ທີ່ມີຖານະດີ ແລະ ປານກາງ. ໃນນັ້ນ ບາງຄອບຄົວກໍ່ແມ່ນໄດ້ຊົມໃຊ້ຜົນປະໂຫຍດ ທີ່ໄດ້ຮັບຈາກໂຄງການ. ຕົວຢ່າງ, ທຸລະກິດເຮັດນ້ຳກ້ອນແມ່ນໄດ້ໃຊ້ນ້ຳສະອາດຈາກນ້ຳບາ ດານທີ່ສະໜອງໂດຍໂຄງການ.

ໂດຍທົ່ວໄປແລ້ວ, ລາຍຮັບທັງໝົດຂອງແຕ່ລະຄອບຄົວໃນໄລຍະສິບປີຜ່ານມາແມ່ນເພີ່ມຂຶ້ນໃນແຕ່ລະຖານະ ເສດຖະກິດ-ສັງຄົມ (ເສັ້ນສະແດງ 2) ຍົກເວັ້ນຖານະຄອບຄົວປານກາງ ຂອງບ້ານນາຍາງ. ອີງຕາມການບອກເລົ່າຂອງຊາວບ້ານ, ໄວໜຸ່ມຫລາຍຄົນໃນກຸ່ມຖານະປານກາງໄດ້ຍ້າຍເຂົ້າໄປໃນຕົວເມືອງ ເພື່ອໄປຮຽນໜັງສື ແລະ ຊອກວຽກເຮັດງານທຳ ຊຶ່ງສົ່ງຜົນໃຫ້ຜົນຜະລິດເຂົ້ານາຂອງຄອບຄົວເຫລົ່ານີ້ ຖືກຫລຸດລົງທຽບກັບບັນດາຊຸມປີຜ່ານມາ. ສ່ວນຄອບຄົວອື່ນ, ລາຍຮັບໄດ້ມາຈາກຜົນຜະລິດກະສິກຳເພີ່ມຂຶ້ນ ຫລື ຢ່າງໜ້ອຍເທົ່າເດີມ. ຍັງມີລາຍຮັບອື່ນໆນອກເໜືອຈາກວຽກງານກະສິກຳ, ຕົ້ນຕໍແມ່ນຍ້ອນພາຍຫລັງທີ່ໂຄງການເຂົ້າມາ, ຕ້ອງກ່າວຄຳຂອບໃຈຕໍ່ກັບການລົງທຶນຂອງໂຄງການໃສ່ໂຄງລ່າງພື້ນຖານ.

ການສຶກສາຄັ້ງນີ້ຍັງລະບຸໃຫ້ເຫັນເຖິງຄວາມແຕກຕ່າງ ທີ່ຂ້ອນຂ້າງຫລາຍລະຫວ່າງໝວດທີ່ມີຖານະດີ, ປານກາງ ແລະ ຂາດເຂີນ (ເສັ້ນສະແດງ 2). ໃນປີ 2003, ໝວດທີ່ມີຖານະດີ (ສະເລ່ຍທັງສາມບ້ານ) ມີລາຍຮັບຫລາຍກ່ວາໝວດທີ່ມີຖານະຂາດເຂີນເກືອບແປດເທົ່າ (ສະເລ່ຍໃນສອງບ້ານ). ໝວດທີ່ມີຖານະປານກາງ (ສະເລ່ຍໃນສາມບ້ານ) ມີລາຍໄດ້ຫລາຍກ່ວາໝວດທີ່ຖານະຂາດເຂີນເກືອບສາມເທົ່າ. ຜົນຂອງການສຶກສາສະແດງໃຫ້ເຫັນວ່າ ຄອບຄົວທີ່ມີດິນ ແລະ ຖານະການ

ເງິນທີ່ຫມັ້ນຄົງ ໄດ້ຊົມໃຊ້ການບໍລິການຕ່າງໆຂອງໂຄງການຫລາຍກ່ວາຫມວດອື່ນ. ສ່ວນຫມວດທີ່ມີຖານະຂາດເຂີນ ທີ່ບໍ່ມີເນື້ອທີ່ດິນ ແລະ ຫລັກຊັບອື່ນແມ່ນມີລາຍຮັບຫລຸດລົງຫມວດທີ່ມີຖານະດີ ແລະ ປານກາງ ຂ້ອນຂ້າງຫລາຍ.

<u>ເສັ້ນສະແດງ 2: ສະເລ່ຍລາຍຮັບທັງຫມົດຂອງຄົວເຮືອນອີງຕາມຖານະເສດຖະກິດ-ສັງຄົມ</u>

ປີ 2003




ປີ 2003




* ມູນຄ່າທາງການເງິນທີ່ໄດ້ຖືກດັດປັບຕາມດັດຊະນີການເພີ່ມຂຶ້ນແບບກ້າວກະໂດດຂອງລາຄາການ ຊົມໃຊ້ໃນໄລຍະຍະສິບປີ

## ການແບ່ງວຽກງານຕາມເພດ ແລະ ການແບ່ງເວລາ

ຈຸດເລີ່ມຕົ້ນກ່ຽວກັບແນວຄວາມຄິດກ່ຽວກັບຄວາມສະເຫມີພາບທາງເພດ ແມ່ນການແບ່ງປັນວຽກລະຫວ່າງເພດຍິງ ແລະ ເພດຊາຍ (FAO, 1997). ໃນກຸ່ມສົນທະນາເລື່ອງບົດ ບາດຍິງ-ຊາຍ, ຜູ້ຍິງ ແລະ ຜູ້ຊາຍ ໄດ້ບັນທຶກຈຳນວນຊົ່ວໂມງທີ່ພວກເຂົາໃຊ້ເຂົ້າໃນການປະຕິບັດກິດຈະກຳປະຈຳວັນ, ບໍ່ວ່າ ຈະເປັນ ວຽກການຜະລິດ ຫລື ວຽກບ້ານ ໃນໄລຍະກ່ອນ ແລະ ຫລັງການດຳເນີນໂຄງການ (1993 ແລະ 2003). ວຽກງານການຜະລິດແມ່ນຫມາຍເຖິງກິດຈະກຳທີ່ສ້າງລາຍຮັບ, ລວມທັງການປູກຝັງທີ່ພໍຢູ່ ພໍກິນ. ວຽກບ້ານງານເຮືອນປະກອບມີການລ້ຽງລູກ ແລະ ວຽກອື່ນໆ ໃນເຮືອນ. ກິດຈະກຳຍາມຫວ່າງ/ການພັກຜ່ອນ, ການນອນ, ການໂອ້ລົມກັນ ແລະ ການມ່ວນຊື່ນບັນ ເທີງແມ່ນບໍ່ໄດ້ຖືກລວມເຂົ້າໃນການສຳຫລວດນີ້.

ການສຶກສາຍັງໄດ້ພົບວ່າ ກິດຈະກຳຂອງຜູ້ຍິງ ແລະ ຜູ້ຊາຍ ແມ່ນບໍ່ມີຄວາມແຕກຕ່າງກັນປານໃດໃນຂົງເຂດວຽກງານການຜະລິດ, ໂດຍສະເພາະແມ່ນການເຮັດສວນເຮັດນາ (ຕາຕະລາງ 1), ເຖິງແມ່ນວ່າວຽກງານຕົວຈິງຂອງຜູ້ຍິງ ແລະ ຜູ້ຊາຍ ສ່ວນໃຫຍ່ແມ່ນແຕກຕ່າງກັນອອກໄປ. ສັດລ້ຽງຂະຫນາດນ້ອຍເຊັ່ນ ຫມູດຳ, ເປັດ ແລະ ໄກ່ແມ່ນແມ່ຍິງເປັນຜູ້ລ້ຽງ. ສັດລ້ຽງເຫລົ່ານີ້ ແມ່ນລ້ຽງ

ເພື່ອບໍລິໂພກພາຍໃນຄອບຄົວ, ແລະ ເມື່ອເວລາທີ່ຕ້ອງການເງິນແມ່ຍິງກໍ່ສາມາດ ຂາຍພວກມັນໄດ້. ສ່ວນຜູ້ຊາຍມີໜ້າທີ່ຮັບຜິດຊອບໃນການລ້ຽງສັດໃຫຍ່ເຊັ່ນ ງົວ ແລະ ຄວາຍ. ເກືອບວ່າວຽກບ້ານງານເຮືອນທັງໝົດແມ່ນແມ່ຍິງເປັນຄົນເຮັດ. ນອກຈາກວຽກງານປະເພດທົ່ວໄປແລ້ວ, ຜູ້ຊາຍປະກອບສ່ວນເຂົ້າໃນວຽກສ້ອມແປງເຮືອຊານ. ໃນກິດຈະກຳທີ່ສ້າງລາຍໄດ້ ບາງປະເພດເຊັ່ນການຜະລິດ ເຄື່ອງຫັດຖະກຳ, ແມ່ຍິງ ແລະ ຜູ້ຊາຍແມ່ນມີບົດບາດທີ່ຄ້າຍຄືກັນ.

<u>ຕາຕະລາງ 1: ການແບ່ງປັນວຽກງານຂອງແມ່ຍິງ ແລະ ຜູ້ຊາຍ</u>

| | ໜ້າວຽກ | ຍິງ | ຊາຍ | ທັງຍິງ ແລະ ຊາຍ |
|---|---|---|---|---|
| | ກະກຽມໜ້າດິນ | | | |
| | ໄຖນາ | | | |
| | ຕົກກ້າ | | | |
| | ດຳນາ | | | |
| ວຽກງານປູກຝັງ | ເສຍຫຍ້າ | | | |
| | ໃສ່ຝຸ່ນ | | | |
| | ເກັບກ່ຽວ | | | |
| | ຕີເຂົ້າ/ຟາດເຂົ້າ | | | |
| | ຂົນເຂົ້າຂຶ້ນເລົ້າ | | | |
| | ເກືອສັດ | | | |
| ລ້ຽງສັດນ້ອຍ | ຊອກຫາອາຫານໃຫ້ສັດ | | | |
| | ໃຫ້ນ້ຳ | | | |
| ລ້ຽງສັດ | ໃຫ້ອາຫານ | | | |
| | ຊອກຫາອາຫານໃຫ້ສັດ | | | |
| | ຕ້ອນສັດລ້ຽງ | | | |
| | ແຕ່ງກິນ | | | |
| | ຕັກນ້ຳ | | | |
| | ປັດກວາດເຮືອນຊານ | | | |
| ວຽກບ້ານງານເຮືອນ | ຊັກເຄື່ອງ | | | |
| | ເຮັດສວນ | | | |
| | ລ້ຽງລູກ | | | |
| | ວຽກງານສ້ອມແປງ | | | |
| | ວຽກງານຫັດຖະກຳ | | | |
| ຈິດຈະກຳອື່ນໆທີ່ສ້າງລາຍຮັບ | ຮັບຈ້າງ | | | |
| | ເກັບເຄື່ອງປ່າຂອງດົງ | | | |

ໃນໄລຍະສິບປີຂອງການດຳເນີນໂຄງການ, ວຽກງານທີ່ຮັບຜິດຊອບໂດຍທັງຜູ້ຍິງ ແລະ ຜູ້ຊາຍ ໄດ້ຫລຸດລົງ (ຮູບສະແດງ 3). ຊົ່ວໂມງເຮັດວຽກທັງຫມົດຂອງຜູ້ຊາຍຫລຸດລົງຈາກ 14.3 ຊົ່ວໂມງໃນປີ 1993 ມາເປັນ 11 ຊົ່ວໂມງໃນປີ 2003. ຈຳນວນຊົ່ວໂມງເຮັດວຽກຂອງແມ່ຍິງຫລຸດລົງຈາກ 14.7 ຊົ່ວໂມງໃນປີ 1993 ມາເປັນ 13.7 ຊົ່ວໂມງໃນປີ 2003. ເປັນທີ່ສັງເກດເຫັນວ່າ ຄວາມແຕກຕ່າງຂອງຊົ່ວໂມງເຮັດວຽກໃນແຕ່ລະມື້ຂອງແມ່ຍິງ ແລະ ຜູ້ຊາຍເພີ່ມຂຶ້ນໃນຊ່ວງໄລຍະສິບ ປີດັ່ງກ່າວ ເຊິ່ງຫນ້າວຽກຂອງຜູ້ຍິງຫລຸດລົງພຽງແຕ່ ຫນ້ອຍດຽວ ເທົ່ານັ້ນ.

<u>ເສັ້ນສະແດງ 3: ຊົ່ວໂມງເຮັດວຽກຂອງແມ່ຍິງ ແລະ ຜູ້ຊາຍ</u>




ຫນ້າວຽກການຜະລິດທີ່ແມ່ຍິງເຮັດແມ່ນບໍ່ໄດ້ມີການປ່ຽນແປງຫລາຍປານໃດ (8.8 ຊົ່ວໂມງໃນປີ 1993 ແລະ 8.7 ຊົ່ວໂມງໃນປີ 2003) ໃນຊ່ວງໄລຍະສິບປີທີ່ຖືກຄົ້ນຄ້ວາ, ໃນຂະນະທີ່ຫນ້າວຽກການຜະລິດ ຂອງຜູ້ຊາຍຫລຸດລົງເກືອບສາມຊົ່ວໂມງ (13.2 ຊົ່ວໂມງ ໃນປີ 1993 ແລະ 10 ຊົ່ວໂມງໃນປີ 2003). ຜົນຄົ້ນຄ້ວາຄັ້ງນີ້ໄດ້ຊີ້ໃຫ້ເຫັນວ່າ ການນຳໃຊ້ເຄື່ອງມືການຜະລິດທີ່ເປັນເຄື່ອງກົນຈັກນັ້ນ ນັບຕັ້ງແຕ່ເລີ່ມຕົ້ນນຳໃຊ້ຈົນມາຮອດປະຈຸບັນ ແມ່ນນອນຢູ່ໃນກອບວຽກງານຂອງຜູ້ຊາຍ, ຕົວຢ່າງ ການໃຊ້ລົດໄຖເພື່ອກະກຽມດິນ, ໃນຂະນະທີ່ແມ່ຍິງຍັງຄົງໃຊ້ແຮງງານຂອງຕົນເອງໃນການປັກດຳ. ການສົ່ງເສີມປູກພືດສຳຮອງອາດ ຈະເປັນການເພີ່ມຄວາມແຕກຕ່າງໃນຊົ່ວໂມງເຮັດວຽກຂອງແມ່ຍິງ ແລະ ຜູ້ຊາຍໃຫ້ຫລາຍຂຶ້ນ

ໃນໄລຍະສິບປີຂອງບົດຄົ້ນຄ້ວາ, ບໍ່ໄດ້ມີການຄົ້ນພົບ ແລະ ບັນທຶກເຖິງການປ່ຽນແປງ ທີ່ສຳຄັນໃນວຽກບ້ານງານເຮືອນຂອງແມ່ຍິງ ແລະ ຜູ້ຊາຍ. ການປະກອບສ່ວນ ຂອງຜູ້ຊາຍໃນວຽກເຮືອນ ຊານ ແມ່ນຂ້ອນຂ້າງມີຫນ້ອຍແຕ່ໃດມາແລ້ວ (1.2 ຊົ່ວໂມງໃນປີ 1993 ແລະ 1 ຊົ່ວໂມງໃນປີ 2003).

ເຖິງວ່າວຽກງານປະຈຳວັນໃນເຮືອນທີ່ຮັບຜິດຊອບໂດຍແມ່ຍິງຈະຫລຸດລົງພຽງແຕ່ເລັກນ້ອຍກໍ່ຕາມ (5.8 ຊົ່ວໂມງ ໃນປີ 1993 ແລະ 5 ຊົ່ວໂມງໃນປີ 2003), ແຕ່ແມ່ຍິງຍັງຄົງເຮັດວຽກ ຫລາຍຊົ່ວໂມງ ກວ່າຜູ້ຊາຍ, ຜູ້ຊາຍຈຶ່ງມີເວລາຫວ່າງຫລາຍກ່ວາໃນການ ປະກອບສ່ວນໃສ່ວຽກງານຂອງຊຸມຊົນ. ໃນທາງກົງກັນຂ້າມ, ແມ່ຍິງຊໍ້າພັດຍັງຄົງຕິດພັນກັບວຽກເຮືອນຊານ, ເຮັດໃຫ້ພວກເຂົາ ມີເວລາຫວ່າງ ໜ້ອຍທີ່ຈະມີສ່ວນຮ່ວມໃນວຽກງານລວມຂອງຊຸມຊົນ ຫລື ຍາມຫວ່າງທີ່ເປັນການພັກຜ່ອນຂອງພວກ ເຂົາເອງ. ຜົນຄົ້ນພົບນີ້ໄດ້ກົງກັບການສຶກສາທີ່ໄດ້ລະບຸໃນ ເອກະສານຂອງ Henderson ແລະ ເພື່ອນຮ່ວມງານທ່ານອື່ນໆ (1995) ທີ່ໄດ້ສະຫລຸບໄວ້ວ່າ "ແມ່ຍິງໃນເຂດຊົນນະບົດ ໃນຫລາຍໆ ຂົງເຂດຂອງບັນດາປະເທດໂລກທີສາມ ເຮັດວຽກຫລາຍກ່ວາສາມີຂອງພວກເຂົາ ແລະ ມີເວລາ ສ່ວນ ຕົວຫລື ພັກຜ່ອນທີ່ຫນ້ອຍກ່ວາ"

## ສະຫລຸບ

ການສຶກສາຄັ້ງນີ້ໄດ້ຈຳແນກໃຫ້ເຫັນເຖິງສອງກໍລະນີຂອງຄວາມບໍ່ສະເຫມີພາບ ທາງເພດ ແລະ ຄວາມແຕກຕ່າງທາງດ້ານເສດຖະກິດ-ສັງຄົມ ໃນການຈັດຕັ້ງປະຕິບັດໃນໂຄງການ ADSC. ອັນທີ ຫນຶ່ງ, ເຖິງວ່າໂຄງ ການຈະປະກອບສ່ວນ ຢ່າງໃຫຍ່ຫລວງ ໃສ່ການປັບປຸງມາດ ຖານການດຳລົງຊີວິດ ຂອງປະຊາຊົນ ໂດຍຜ່ານການບໍລິການຫລາຍຢ່າງ, ແຕ່ຄວາມແຕກຕ່າງກັນຈາກການແຈກຢາຍຜົນ ປະໂຫຍດດັ່ງກ່າວເພື່ອປັບປຸງມາດຖານການດຳລົງຊີວິດໃຫ້ດີຂຶ້ນນັ້ນແມ່ນເຫັນ ໄດ້ໃນຫມວດທີ່ມີຖາ ນະ ເສດຖະກິດສັງຄົມຕ່າງກັນ. ຫມວດທີ່ມີຖານະລາຍຮັບດີ ແລະ ປານກາງສາມາດ ນຳໃຊ້ການ ບໍລິການ ຂອງໂຄງການ ໄດ້ຫລາຍກ່ວາຫມວດທີ່ມີລາຍຮັບຕໍ່າ (ຂາດເຂີນ) ທີ່ມີຊັບ ພະຍາກອນ ຈຳກັດ. ໃນອະນາຄົດ, ເພື່ອທີ່ຈະຫລຸດຜ່ອນຄວາມ ແຕກຕ່າງທາງດ້ານເສດ ຖະກິດ ໃນຫມູ່ປະຊາຊົນ, ທາງໂຄງ ການພັດທະນາ, ຄວນໃຫ້ຄວາມເອົາໃຈໃສ່ພິເສດໃສ່ກິດ ຈະກຳການ ສ້າງລາຍໄດ້ ທີ່ບໍ່ໄດ້ອີງ ໃສ່ປັດໄຈ ຂອງກຳມະສິດຖືຄອງທີ່ດິນເຊັ່ນ ການຕໍ່າຫູກ ແລະ ຫັດຖະກຳຈັກ ສານ. ຖ້າກິດຈະກຳ ເຫລົ່ານີ້ເລັງ ໃສ່ຊ່ວຍເຫລືອຄອບຄົວທີ່ຂາດເຂີນ, ທາງໂຄງການຄວນພິຈາລະນາເຖິງຂອດບັນເທົາ ແລະ ແກ້ໄຂບັນຫາຄວາມທຸກຈົນໃນຫມວດທີ່ມີຖານະຂາດເຂີນ. ການສະຫນອງ ສິນເຊື່ອຂະຫນາດ ນ້ອຍໃຫ້ແກ່ ຄອບຄົວທີ່ຍາກຈົນ ກໍ່ເປັນອີກທາງເລືອກຫນຶ່ງ, ຊຶ່ງມັນສາມາດຊ່ວຍ ໃຫ້ມີການຫັນ ປ່ຽນການລ້ຽງສັດ ເພື່ອບໍລິໂພກ ໃຫ້ເປັນການລ້ຽງເພື່ອເປັນສິນຄ້າ.

ໃນບັນຫາທີສອງກໍ່ແມ່ນເມື່ອລາຍຮັບເພີ່ມຂຶ້ນ, ຈຳນວນຫນ້າວຽກຫລຸດລົງຫລາຍຈາກເມື່ອກ່ອນເຊັ່ນ, ຈຳນວນ ຊົ່ວໂມງເຮັດວຽກສະເລ່ຍໃນມື້ຫນຶ່ງຂອງຜູ້ຊາຍຫລຸດລົງ 23.3%, ປຽບທຽບໃສ່ຊົ່ວໂມງເຮັດ ວຽກຂອງແມ່ຍິງທີ່ ຫລຸດລົງພຽງແຕ່ 6.8%, ຊຶ່ງໄດ້ສົ່ງຜົນໃຫ້ແມ່ຍິງຍັງສືບຕໍ່ເຮັດວຽກຫລາຍຊົ່ວໂມງ ກ່ວາຜູ້ຊາຍ. ປະເດັນຄວາມສະຫມີພາບລະຫວ່າງຍິງ-ຊາຍ ຖືວ່າເປັນປະເດັນທີ່ສຳຄັນໃນວຽກງານ ການພັດທະນາ, ແບບວິທີການປະຕິບັດທີ່ແທດເຫມາະແມ່ນມີຄວາມຈຳເປັນ ເພື່ອຫລຸດຜ່ອນ ການ ແບກຫາບຂອງແມ່ຍິງ ແລະ ທັງ ເປັນການເປີດໂອກາດໃຫ້ພວກເຂົາ ໃນການປະກອບສ່ວນເຂົ້າໃນ ການພັດທະນາຝີມື ເພື່ອຊ່ວຍສ້າງລາຍຮັບໃຫ້ຄອບຄົວ ແລະ ກິດຈະກຳການຈັດການຊຸມຊົນ. ຕໍ່ກັບ ບັນຫານີ້, ໂຄງການແມ່ນຍັງບໍ່ທັນກ້າວໄປເຖິງການດັດແກ້ ແລະ ແບ່ງເບົາການແບກຫາບຫນ້າວຽກ ທີ່ບໍ່ສະເຫມີພາບກັນລະຫວ່າງເພດຍິງ ແລະ ເພດຊາຍທີ່ໄດ້ປະຕິບັດມາແຕ່ດົນນານແລ້ວ

ໃນຊຸມຊົນລາວ ເຫຼົ່ານີ້ເທື່ອ.

ພ້ອມນີ້, ພວກຂ້າພະເຈົ້າຢາກແນະນຳວ່າ, ຂັ້ນຕອນທັງຫມົດຂອງການປະຕິບັດໂຄງການ ຄວນໃຫ້ມີ ມີສ່ວນຮ່ວມຂອງປະຊາຊົນທີ່ເປັນຕົວແທນໃຫ້ທຸກເພດໄວ ແລະ ທຸກຫມວດຖານະເສດຖະກິດ-ສັງຄົມ ເພື່ອການພັດທະນາດັ່ງກ່າວຈະຮັບປະກັນໄດ້ເຖິງຄວາມສະເຫມີພາບເທົ່າທຽມກັນ ໃນການທີ່ຈະເຂົ້າ ເຖິງການຊ່ວຍເຫລືອ ແລະ ການທີ່ຈະໄດ້ຮັບຜົນປະໂຫຍດຢ່າງທົ່ວຫນ້າຈາກໂຄງການ.

## ກ່ຽວກັບຜູ້ຂຽນ

ສີສະຫວັນ ພານຸວົງ (sisavanh_p@yahoo.com) ເປັນນັກຄົ້ນຄ້ວາ ແລະ Masaaki Yamada (masaakiy@cc.tuat.ac.jp) ເປັນຜູ້ຊ່ວຍສາດສະດາຈານຢູ່ຄະນະວິທະຍາສາດສິ່ງແວດລ້ອມ ແລະ ກະສິກຳ, ມະຫາວິທະຍາໄລ Tokyo University of Agriculture and Technology. ຜູ້ຂຽນ ທັງສອງຢາກຂໍຂອບໃຈພະນັກງານຂອງໂຄງການ ADSC ສຳລັບການສະຫນັບສະຫນູນ ແລະ ການ ຮ່ວມມື, ແລະ ຂອບໃຈທີມງານຂອງຜູ້ເກັບກຳຂໍ້ມູນສຳລັບຄວາມຕັ້ງອົກຕັ້ງໃຈ ແລະ ຄວາມກະຕືລື ລົ້ນຂອງພວກເຂົາໃນການເຮັດວຽກພາກສະຫນາມ. ຄຳຂອບໃຈຍັງສົ່ງໄປສູ່ປະຊາ ຊົນບ້ານນາຍາງ, ບ້ານນ້ຳກັ່ງໃຕ້ ແລະ ບ້ານນາສັບ, ເຖິງວ່າພວກເຂົາຈະມີວຽກງານຢ່າງ ຫລວງຫລາຍ ແຕ່ກໍ່ສະຫລະ ເວລາອັນມີຄ່າເພື່ອມາເຮັດວຽກກັບພວກຂ້າພະເຈົ້າຫລາຍມື້ ເພື່ອທີ່ຈະ ເພີ່ມພູນ ແລະ ເສີມສ້າງຄວາມ ຮູ້ຂອງພວກເຮົາກ່ຽວກັບຊຸມຊົນຂອງພວກເຂົາ ແລະ ກ່ຽວກັບໂຄງການ ແລະ ຜົນກະທົບ ຂອງ ໂຄງການທີ່ມີຕໍ່ຊີວິດ ຂອງພວກເຂົາ. ພວກເຮົາຂໍສະແດງຄວາມຮູ້ບຸນຄຸນຕໍ່ກັບຄຳແນະນຳໃນ ການ ຂຽນບົດຂອງທ່ານ ດຣ. Donald I. Flickinger ຢູ່ NOAA, ປະເທດອາເມລິກາ.

# ເອກະສານອ້າງອີງ

ADB. 2001. Country Economic Review: Lao People's Democratic Republic. Asian Development Bank.
Vientiane.
Ahmed, M. R. & J. G. Laarman. 2000. "Gender Equity in Social Forestry Programs in Bangladesh." Human
Ecology 28(3): 18.
CPC. 2003. The National Poverty Eradication Programme: A Comprehensive Approach to Growth and
Development. Committee for Planning and Cooperation. Vientiane.
Dayal, R. et al. 2000. Methodology for Participatory Assessments with Communities, Institutions and Policy
Makers. World Bank and International Water and Sanitation Centre. Washington, D.C.
FAO. 1997. Gender and Participation in Agricultural Development Planning: Key Issues from Ten Case
Studies. Food and Agriculture Organisation of the United Nations. Rome.
IFAD. 2000. Methods for Monitoring and Evaluation - Managing for Impact in Rural Development.
International Fund for Agricultural Development.
Henderson, H. K. & E. Hansen. 1995. Gender and Agricultural Development: Surveying the Field. University
of Arizona Press / TUASON.
Mallick, R. N. et al. 2002. “Exploring Impact Assessment Methodology for Farming System and Research
Development”. 17th Symposium of the International Farming Systems Association, Florida, USA.
UNDP. 2001. National Human Development Report, Lao PDR. UNDP. Vientiane.
Wilde, V. 2001. Socio-Economic and Gender Analysis Field Handbook. FAO. Rome.
WSP and IRC. 2003. Sustainability Planning and Monitoring in Community Water Supply and Sanitation. World Bank. Washington D.C.

# ວາລະສານການພັດທະນາຂອງລາວ

## ການປະກອບສ່ວນທີ່ຕ້ອງການ

ທີມງານອົງການສະຫະປະຊາຊາດ ສ.ປ.ປ.ລາວໃຫ້ການສະໜັບສະໜູນການສ້າງວາລະສານກ່ຽວກັບການພັດທະນາທີ່ເອີ້ນວ່າຈຸດປະກາຍ, ຊຶ່ງມີຫົວຂໍ້ວ່າ ທັດສະນະຕໍ່ການພັດທະນາຂອງ ສ.ປ.ປ.ລາວ. ຈຸດປະກາຍມີເປົ້າໝາຍເພື່ອກະຕຸກຊຸກຍູ້ໃຫ້ມີການສົນທະນາໃນທຸກບັນຫາທີ່ພົວພັນເຖິງການພັດທະນາໃນ ສ.ປ.ປ.ລາວ. ວາລະສານດັ່ງກ່າວນີ້ຈະກະຈາຍຄວາມຮູ້ ແລະ ໃຊ້ເປັນເວທີເພື່ອໂອ້ລົມສົນທະນາ ແລະ ແລກປ່ຽນການຄົ້ນຄວ້າວິເຄາະແບບເລິກເຊິ່ງ, ໃນຂະນະດຽວກັນກໍ່ເປັນການສົ່ງເສີມເປົ້າໝາຍ ແລະ ພັນທະຕາມເນື້ອໃນຖະແຫຼງການສະຫັດສະວັດ.

ວາລະສານທີ່ຈະຈັດພິມຂຶ້ນສາມເທື່ອຕໍ່ປີນີ້ກໍາລັງຊອກຫາການປະກອບສ່ວນທາງດ້ານວຽກການຂຽນຈາກຊຸມຊົນທີ່ມີສ່ວນກ່ຽວຂ້ອງກັບການພັດທະນາ, ລວມທັງນັກພັດທະນາພາຍໃນແລະຈາກສາກົນ, ພະນັກງານລັດ, ພະນັກງານຈາກອົງການຮ່ວມມືສອງຝ່າຍແລະຫຼາຍຝ່າຍຕ່າງໆ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ, ນັກຂ່າວ, ນັກວິຊາການ, ນັກຄົ້ນຄວ້າ ຫຼື ຜູ້ໃດກໍ່ຕາມທີ່ມີຜົນປະໂຫຍດໃນ ສປປລາວ. ວາລະສານດັ່ງກ່າວນີ້ຈະຖືກຂຽນເປັນພາສາລາວ ແລະ ພາສາອັງກິດ ແລະ ສາມາດຫາອ່ານໄດ້ໃນຮູບແບບພິມ ແລະ ຂໍ້ມູນທາງລະບົບອອນລາຍນ໌.

ອົງການ ສະຫະປະຊາຊາດໃນ ສປປລາວ ເຫັນວ່າມັນແມ່ນໂອກາດອັນດີສໍາລັບນັກເຄື່ອນໄຫວການພັດທະນາ ແລະອົງການຈັດຕັ້ງຕ່າງໆທີ່ຢາກເຜີຍແຜ່ບົດລາຍງານ, ການຄົ້ນຄວ້າສຶກສາ ແລະ ຄວາມຄິດເຫັນຕໍ່ແງ່ມຸມໃດໜຶ່ງ ຂອງຫົວຂໍ້ການພັດທະນາປະເທດນີ້. ເອກະສານທັງໝົດທີ່ສົ່ງມາສະເໜີເພື່ອຮັບການພິຈາລະນາ ຈາກຄະນະກໍາມະການຮຽບຮຽງນັ້ນ ຄວນຈະເປັນພາສາອັງກິດ ຫຼື ພາສາລາວ. ບົດຄວາມບໍ່ຄວນຈະຍາວເກີນແປດໜ້າເຈັ້ຍ A4. ເອກະສານຕົ້ນສະບັບຄວນມີບົດສະຫຼຸບສັ້ນໆ(100 ຫາ 120ຄໍາ) ຂອງບັນຫາທີ່ສະເໜີ, ການຄົ້ນພົບທີ່ສໍາຄັນທີ່ສຸດ ແລະ ບັນຊີລາຍຊື່ຂອງເອກະສານອ້າງອີງທີ່ເໝາະສົມ. ສໍາລັບບົດແນະນໍາສະບັບສົມບູນຄົບຖ້ວນຂອງຈຸດປະກາຍ,ສົ່ງອີເມລມາໄດ້ທີ່ **laodevelopment.journal@undp.org** ຫຼືສົ່ງຈົດໝາຍໄປທີ່ກອງເລຂາ, ຈຸດປະກາຍ c/o UNDP, ຕູ້ໄປສະນີ 345, ວຽງຈັນ, ສ.ປ.ປ.ລາວ.

ຄະນະກໍາມະການຮຽບຮຽງ ຈະຮັບຮອງເອົາຕົ້ນສະບັບໃນຄວາມເຂົ້າໃຈ ທີ່ວ່າພວກມັນຈະໄດ້ຮັບການທົບທວນ. ຜູ້ປະກອບສ່ວນຄວນຈະແຈ້ງ ໃຫ້ຮູ້ວ່າເອກະສານທີ່ສົ່ງມາໃຫ້ນັ້ນ ເຄີຍໄດ້ຮັບການພິມເຜີຍແຜ່ ຫຼື ສົ່ງໄປເພື່ອພິມເຜີຍແຜ່ບ່ອນອື່ນມາກ່ອນຫຼືບໍ່.

The Secretariat
Juth Pakai, c/o UNDP
PO Box 345
Vientiane
Lao PDR
Tel. +(856 21) 213390-97
e-mail: laodevelopment.journal@undp.org